ຄູ່ມືການກວດສອບເນື້ອໃນ

ແບບວຸດສາຫະກຳ

one vision
one identity
one community

ຄູ່ມືການກວດສອບເນື້ອໃນແບບອຸດສາຫະກຳ

ກອງເລຂາອາຊຽນ (ASEAN)

ຈາກາຕ້າ

ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ (ASEAN) ສ້າງຕັ້ງຂຶ້ນໃນ ວັນທີ 8 ສິງຫາ 1967. ປະເທດ ສະມາຊິກ ປະກອບດ້ວຍ ບຣູໄນ ດາຣຸສະລາມ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟິລິບປິນ, ສິງກະ�โป, ໄທ ແລະ ຫວຽດນາມ.

ກອງເລຂາອາຊຽນ ຕັ້ງຢູ່ ຈາກາຕ້າ, ອິນໂດເນເຊຍ.

ຂໍ້ມູນສຳລັບການສອບຖາມ, ຕິດຕໍ່:

ກອງເລຂາອາຊຽນ

ພະແນກປະຊາສຳພັນປະຊາຄົມ (CRD)

The ASEAN Secretariat

Community Relations Division (CRD)
70A Jalan Sisingamangaraja

Jakarta 12110

ອິນໂດເນເຊຍ

ໂທລະສັບ: (62 21) 724-3372, 726-2991

ໂທລະສານ: (62 21) 739-8234, 724-3504

ອີເມວ: public@asean.org

ຂໍ້ມູນທາງບັນນານຸກົມ

ຄູ່ມືການກວດສອບເນື້ອໃນແບບອຸດສາຫະກຳແບບຍືນຍົງ

ຈາກາຕ້າ: ກອງເລຂາອາຊຽນ, ພະຈິກ 2018

341.758

1. ASEAN – ສິດຕໍ່ຊັບສິນທາງປັນຍາ – ແບບອຸດສາຫະກຳ

2. ມາດຕະຖານ – ການກວດສອບ – ການຈົດທະບຽນ

ISBN 978-602-5798-27-6

ASEAN: ປະຊາຄົມແຫ່ງໂອກາດສຳລັບທຸກຄົນ

ເນື້ອໃນຂອງຄູ່ມືເຫຼັ້ມນີ້ ສາມາດອ້າງອີງ ຫຼື ຜະລິດຊ້ຳ ບົນພື້ນຖານການສະແດງຄວາມຮັບຮູ້ຢ່າງຖືກຕ້ອງ ແລະ ສຳເນົາເອົາສິ່ງທີ່ຜະລິດຊ້ຳ ແລ້ວສົ່ງໃຫ້ຝ່າຍສົ່ງເສີມກິດຈະກຳສາທາລະນະ ແລະ ອົງການຈັດຕັ້ງທາງສັງຄົມ ຂອງ ກອງເລຂາອາຊຽນ, ຈາກາຕ້າ.

ຂໍ້ມູນທົ່ວໄປກ່ຽວກັບ ASEAN ຖືກເຜີຍແຜ່ທາງອອນລາຍໃນເວັບໄຊ້ຂອງ ASEAN:
www.asean.org

ລິຂະສິດຂອງສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ (ASEAN) 2018.
ສະຫງວນລິຂະສິດ.

ພາກທີ 1

ເຫດຜົນຂອງການປະຕິເສດ

ຫຼື ການຍົກເລີກການຈົດທະບຽນ

ສາລະບານ

ຄຳນຳ **10**

ຄວາມເປັນມາ 10

ຈຸດປະສົງຂອງຄູ່ມື 15

ຕົວອັກສອນຫຍໍ້ທີ່ນຳໃຊ້ໃນຄູ່ມືເຫຼັ້ມນີ້ **17**

ປະເທດສະມາຊິກ ASEAN (ລະຫັດປະເທດ) 17

ຕົວອັກສອນຫຍໍ້ອື່ນໆ 17

ເອກະສານອ້າງອີງ 19

ສາເຫດຂອງການປະຫົ່ເສດ ຫຼື ການຍົກເລີກການຈົດທະບຽນ **20**

ພາກສະເໜີ 20

1. ການອະທິບາຍຄຳສັບ ກ່ຽວກັບ 'ແບບອຸດສາຫະກຳ' **23**

1.1. *ການອະທິບາຍຄຳສັບຢູ່ໃນກົດໝາຍຂອງປະເທດສະມາຊິກ* 23

1.2. *ອົງປະກອບຂອງການອະທິບາຍຄຳສັບ* 25

1.2.1. ຄຸນລັກສະນະຂອງຮູບຊົງ 25

1.2.1.1. *ຄຳເວົ້າ, ຕົວໜັງສື ແລະ ຕົວອັກສອນອື່ນໆ* 26

1.2.1.2. *ສີສັນ* 26

1.2.1.3. *ດົນຕີ ແລະ ສຽງ* 27

1.2.1.4. *ຮູບຖ່າຍ* 28

1.2.1.5. *ແບບສະຖາປັດ, ແຜນຜັງ, ແບບກໍ່ສ້າງ* 28

1.2.1.6. *ຮູບສະແດງ, ແຜນວາດ, ແຜນທີ່ ແລະ ສື່ປະກອບການສິດສອນ* 29

1.2.1.7. *ການສະແດງຜົນຢູ່ໜ້າຈໍຄອມພິວເຕີ, ຮູບຄຸນລັກສະນະເທິງໜ້າຈໍ (ໄອຄອນ)* 29

1.2.2. ການນຳສະເໜີໃນຜະລິດຕະພັນ 30

1.2.2.1. *ແນວຄິດ, ຫຼັກການ* 31

1.2.2.2. *ວິທີການ, ຂະບວນການ* 31

1.2.2.3. *ໂປແກຣມຄອມພິວເຕີ ແລະ ແບບຜັງ* 31

1.2.2.4. *ແຢ້ງ ແລະ ທາດແຫຼວ* 32

1.2.2.5. *ຊິ້ນສ່ວນຂອງຜະລິດຕະພັນ* 33

1.2.3. ຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ 35

1.2.3.1. *ການນຳໃຊ້ໃນທາງອຸດສາຫະກຳ* 35

1.2.3.2. *ຜະລິດຕະພັນທີ່ເປັນສິ່ງທີ່ມີຊີວິດ ແລະ ຜະລິດຕະພັນຈາກທຳມະຊາດ* 37

1.2.3.3. *ຜົນງານສິລະປະ* 39

2. ຄວາມໃໝ່ 41

2.1 *ການອະທິບາຍກ່ຽວກັບຄວາມໃໝ່* 41

2.1.1 ສາທາລະນະຊົນທີ່ເປັນກຸ່ມອ້າງອີງ 42

2.1.2 ວັນທີກ່ຽວຂ້ອງກັບຄວາມໃໝ່ 42

2.1.2.1 *ວັນບຸລິມະສິດ* 43

2.1.2.2 *ໄລຍະຫ່ວນຜັນ* 44

2.1.3 ແຫຼ່ງການເປີດເຜີຍທີ່ເປັນໄປໄດ້ 45

2.1.3.1 *ການແຈກຢາຍເພື່ອການຄ້າ ແລະ ການນຳໃຊ້ໃນທາງການຄ້າ* 45

2.1.3.2 *ການເຜີຍແຜ່ທົ່ວໄປ* 46

2.1.3.3 *ການເຜີຍແຜ່ທາງການ* 46

2.1.3.4 *ການເປີດເຜີຍຂໍ້ມູນທາງອິນເຕີເນັດ* 47

2.1.3.5 *ການເປີດເຜີຍຂໍ້ມູນໃນງານວາງສະແດງ* 48

2.2 *ການປະເມີນຄວາມໃໝ່* 50

2.2.1 ຄຸນລັກສະນະຂອງແບບ 50

2.2.2 ການຮັບຮູ້ໂດຍລວມ 52

2.2.3 ການລວມກັນຂອງແບບກ່ອນໜ້ານີ້ 55

2.2.4 ຄວາມເປັນອິສະຫຼະໃນການອອກແບບ 56

3. ຄວາມສາມາດໃນການເບິ່ງເຫັນ 58

3.1 *ຫຼັກການ* 58

3.2 ຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ແລະ ຕຳແໜ່ງທີ່ຕ່າງກັນຂອງຜະລິດຕະພັນ 59

4. ຄຸນລັກສະນະດ້ານ ເຕັກນິກ ແລະ ໜ້າທີ່ການໃຊ້ງານ 62

4.1 *ເຫດຜົນໃນການປະຕິເສດ* 62

4.2 *ການປະເມີນໜ້າທີ່ການໃຊ້ງານ* 64

4.3 *ຂໍ້ຫ້າມການໃຊ້ງານທີ່ໂດດເດັ່ນກວ່າ ຄວາມສວຍງາມຂອງຜະລິດຕະພັນ* 67

4.4 *ພາກສ່ວນຂອງອາໄຫຼ່ ແລະ ການເຊື່ອມຕໍ່ກັບພາຍນອກຂອງຜະລິດຕະພັນ* 68

4.5 *ການລວມເຂົ້າກັນຂອງຄຸນລັກສະນະການໃຊ້ງານ ແລະ ຄວາມສວຍງາມ* 70

5. ການຂັດແຍ່ງກັບສິດທີ່ເກີດຂຶ້ນກ່ອນໜ້າ 74

5.1 *ສິດທີ່ເກີດຂຶ້ນກ່ອນ ຂອງແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ* 74

5.2 *ສິດທີ່ເກີດຂຶ້ນກ່ອນ ຂອງເຄື່ອງໝາຍທີ່ມີລັກສະນະສະເພາະ* 75

5.3 *ສິດທີ່ເກີດຂຶ້ນກ່ອນ ໃນຜົນງານທີ່ມີລິຂະສິດ* 77

6. ນະ�โยบายຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ 79

6.1 *ການພິຈາລະນາເບື້ອງຕົ້ນ* 79

6.2 *ບັນຫາສະເພາະ* 80

6.2.1 ລັກສະນະຂອງແບບອຸດສາຫະກຳ 80

6.2.2 ລັກສະນະຂອງຜະລິດຕະພັນທີ່ມີການນຳໃຊ້ແບບອຸດສາຫະກຳ 82

6.2.3 ການພິຈາລະນາດ້ານຄວາມສວຍງາມ 83

7. ຂໍ້ຫ້າມຕາມລະບຽບການສະເພາະ 84

7.1 *ຂໍ້ຫ້າມຕາມລະບຽບການ* 84

7.2 *ສັນຍາລັກປະຈຳລັດ ແລະ ເຄື່ອງໝາຍທາງລັດຖະການ* 86

7.3 *ການນຳສະເໜີບຸກຄົນ ແລະ ບຸກຄົນທີ່ມີຕຳແໜ່ງສູງ* 89

8. ການນຳສະເໜີແບບ 90

8.1 *ຂໍ້ກຳນົດທົ່ວໄປ* 90

8.2 *ຮູບແບບການນຳສະເໜີ* 91

8.2.1 ພື້ນຫຼັງຂອງການນຳສະເໜີ 91

8.2.2 ຄວາມຊັດເຈນ/ຈະແຈ້ງຂອງແບບ ທີ່ນຳສະເໜີ 92

8.2.3 ຄຸນນະພາບຂອງການນຳສະເໜີ 93

8.3 *ຈຳນວນ ແລະ ຄວາມສອດຄ່ອງຂອງຮູບພາບ* 93

8.4 *ຮູບລັກສະນະຕ່າງໆຂອງຜະລິດຕະພັນ ໃນໄລຍະການໃຊ້ງານ* 95

8.5 *ຜະລິດຕະພັນທີ່ມີຄວາມຊັບຊ້ອນ, ຊຸດຜະລິດຕະພັນ ແລະ ຄວາມຫຼາກຫຼາຍຂອງແບບຜະລິດຕະພັນ* 97

8.5.1 ຜະລິດຕະພັນທີ່ມີຄວາມຊັບຊ້ອນ 97

8.5.2 ຊຸດຜະລິດຕະພັນ 98

8.5.3 ຄວາມຫຼາກຫຼາຍຂອງແບບອຸດສາຫະກຳ 100

8.6 *ການນຳສະເໜີແບບ ທີ່ເປັນພາກສ່ວນໜຶ່ງຂອງຜະລິດຕະພັນ* 102

8.6.1 ການນຳສະເໜີພາກສ່ວນທີ່ຖືກຮຽກຮ້ອງສິດ 102

8.6.2 ວິທີລະບຸສ່ວນທີ່ຖືກຮຽກຮ້ອງສິດ 102

8.6.2.1 *ເສັ້ນຈຳຈຸດໆ ແລະ ເສັ້ນສີເຂັ້ມ* 103

8.6.2.2 *ຮູບສະແດງຂອບເຂດທີ່ຂີດເສັ້ນອ້ອມຮູບ* 103

8.6.2.3 *ຮູບເປັນເງົາ ແລະ ຮູບມົວ* 104

8.6.2.4 *ຮູບຕັດ ແລະ ຮູບທີ່ແຍກອອກມາ* 105
8.7 *ຄຳບັນຍາຍກ່ຽວກັບຮູບພາບ ແລະ ຂໍ້ຄວາມອະທິບາຍ* 106
8.8 *ການນຳສະເໜີແບບທີ່ມີພື້ນແບບ ແລະ ລວດລາຍ ທີ່ຊ້ຳກັນ* 106
8.9 *ການນຳສະເໜີແບບທີ່ມີສີສັນປະກອບ* 107

9. ການບົ່ງບອກຜະລິດຕະພັນ 109
9.1 *ບັນຫາທົ່ວໄປ* 109
9.2 *ການຈັດໝວດຜະລິດຕະພັນ ທີ່ລວບລວມແບບອຸດສາຫະກຳຕ່າງໆ* 109
9.2.1 ການນຳໃຊ້ການຈັດໝວດຂອງສາກົນ 110
9.2.2 ການແກ້ໄຂ ການລະບຸໝວດຜະລິດຕະພັນ 110
9.2.3 ການຄັດຄ້ານການລະບຸໝວດຜະລິດຕະພັນ 112

10. ຄຳຮ້ອງຂໍການປົກປ້ອງຫຼາຍແບບອຸດສາຫະກຳໃນຄຳຮ້ອງສະບັບດຽວ ແລະ ຄວາມເປັນເອກະພາບຂອງ ແບບ 113
10.1 *ທັດສະນະທົ່ວໄປ* 113
10.2 *ມາດຕະຖານຂອງຄວາມເປັນເອກະພາບຂອງແບບອຸດສາຫະກຳ* 114

ຄຳນຳ

ຄວາມເປັນມາ

ຄູ່ມືການກວດສອບເນື້ອໃນແບບອຸດສາຫະກຳຂອງບັນດາປະເທດສະມາຊິກ ASEAN (ຕໍ່ໄປນີ້ເອີ້ນວ່າ "ຄູ່ມື") ຊຶ່ງກະກຽມຕາມບໍລິບົດຂອງໂຄງການ EU-ASEAN ວ່າດ້ວຍການປົກປ້ອງສິດຕໍ່ຊັບສິນທາງປັນຍາ (ECAP III). ໂຄງການດັ່ງກ່າວຖືກຮັບຮອງໂດຍສະຫະພາບເອີລົບ ແລະ ASEAN ໃນປີ 2009 ເພື່ອສະໜັບສະໜູນຈຸດປະສົງຂອງແຜນງານປະຊາຄົມເສດຖະກິດ ASEAN ແລະ ເປົ້າໝາຍດ້ານຍຸດທະສາດ ທີ່ໄດ້ລະບຸໄວ້ໃນແຜນປະຕິບັດງານ IPR ຂອງ ASEAN 2011-2015.

ຈຸດປະສົງລວມຂອງ ECAP III, ໄລຍະ II ແມ່ນເພື່ອສືບຕໍ່ເຊື່ອມໂຍງບັນດາປະເທດສະມາຊິກ ASEAN ໃຫ້ເຂົ້າກັບເສດຖະກິດໂລກ ແລະ ລະບົບການຄ້າໂລກ ເພື່ອສົ່ງເສີມການເຕີບໂຕດ້ານເສດຖະກິດ ແລະ ຫຼຸດຜ່ອນຄວາມທຸກຍາກໃນພາກພື້ນ.

ຈຸດປະສົງສະເພາະຂອງໂຄງການ ແມ່ນເພື່ອສະໜັບສະໜູນການເຊື່ອມໂຍງພາກພື້ນ ASEAN ແລະ ສືບຕໍ່ຍົກລະດັບ ແລະ ສ້າງຄວາມເປັນເອກະພາບໃຫ້ແກ່ລະບົບການສ້າງ, ການປົກປ້ອງ, ການບໍລິຫານ ແລະ ການບັງຄັບໃຊ້ສິດຕໍ່ຊັບສິນທາງປັນຍາໃນພາກພື້ນ ASEAN ໂດຍສອດຄ່ອງຕາມມາດຕະຖານ ແລະ ການປະຕິບັດ ທີ່ດີເລີດກ່ຽວກັບຊັບສິນທາງປັນຍາຂອງສາກົນ ແລະ ແຜນປະຕິບັດງານສິດຕໍ່ຊັບສິນທາງປັນຍາຂອງ ASEAN 2011-2015.

ສຳນັກງານປະສານຕະຫຼາດພາຍໃນ EU (OHIM) ໄດ້ຮັບມອບໝາຍໃຫ້ຈັດຕັ້ງປະຕິບັດໂຄງການ ECAP III ໄລຍະ II ໄລຍະປີ 2013-2015.

ໃນວັນທີ 12 ມີນາ 2015 ທີ່ບັນດາເສຣີເບກາວັນ ປະເທດບຣູໄນ ດາຣຸສາລາມ, ຄະນະຊີ້ນຳໂຄງການ ECAP (PSC) ໄດ້ຮັບຮອງເອົາແຜນໂຄງການ (AWP) ປະຈຳປີ 2015. PSC ໄດ້ຕົກລົງລວມເອົາ ການຈັດຕັ້ງຂອງກິດຈະກຳຕົ້ນຕໍເຂົ້າໃນແຜນວຽກດັ່ງກ່າວ "ແນໃສ່ສະໜັບສະໜູນ ຄຸນນະພາບ, ຄວາມສອດຄ່ອງ ແລະ ຄວາມໂປ່ງໃສຂອງວຽກງານທີ່ດຳເນີນໂດຍສຳນັກງານຊັບສິນທາງປັນຍາຂອງ ASEAN ກ່ຽວກັບ ການກວດສອບ ແລະ ການຈົດທະບຽນແບບອຸດສາຫະກຳ". ແຜນວຽກ ລະບຸວ່າ ຜົນການຈັດຕັ້ງປະຕິບັດກິດຈະກຳ ອາດຈະບັນລຸໄດ້ໂດຍຜ່ານການຜັນຂະຫຍາຍ "ຄູ່ມື" ທີ່ອາດຈະ

ນຳໄປປັບໃຊ້ ໂດຍສຳນັກງານຊັບສິນທາງປັນຍາທີ່ສົນໃຈ ຂອງ ASEAN.

ບັນດາປະເທດສະມາຊິກ ASEAN ທັງໝົດ ໄດ້ປະກາດໃຊ້ ແລະ ຢູ່ໃນຂັ້ນຕອນປັບປຸງນິຕິກຳ ບໍ່ວ່າ ຈະຢູ່ ໃນຮູບແບບສະເພາະເປັນກົດໝາຍວ່າດ້ວຍແບບອຸດສາຫະກຳ ຫຼື ໝວດສະເພາະ ຫຼື ບົດບັນຍັດ ຂອງກົດໝາຍ ທີ່ມີບົດບັນຍັດເປີດ ເພື່ອໃຫ້ສາມາດດຳເນີນການຈົດທະບຽນແບບອຸດສາຫະກຳ. ໃນ ບາງປະເທດ ກົດໝາຍດັ່ງກ່າວ ກໍມີການຜັນຂະຫຍາຍຢູ່ໃນນິຕິກຳຈັດຕັ້ງປະຕິບັດ, ເປັນຕົ້ນ ລະບຽບ ການຈັດຕັ້ງປະຕິບັດ ແລະ ຂໍ້ຕົກລົງສະເພາະຂອງອົງການຄຸ້ມຄອງຊັບສິນທາງປັນຍາ.

ນອກຈາກນັ້ນ ບັນດາປະເທດສະມາຊິກ ASEAN ຕໍ່ໄປນີ້ ຍັງໄດ້ພິມເຜີຍແຜ່ ຫຼື ນຳໃຊ້ຄູ່ມື ຫຼື ຄຳ ແນະ ນຳສະເພາະຢູ່ພາຍໃນປະເທດ ຊຶ່ງນັກກວດສອບຂອງອົງການຄຸ້ມຄອງນຳໃຊ້ໃນການກວດສອບ ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ:

ອິນໂດເນເຊຍ: ຄູ່ມືການກວດສອບເນື້ອໃນແບບອຸດສາຫະກຳ, 2015

ສປປ ລາວ: ຄູ່ມືການກວດສອບແບບອຸດສາຫະກຳ, ຕຸລາ 2003

ຂໍ້ຕົກລົງຂອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບແບບ ອຸດສາຫະກຳ, ເລກທີ 755/ກວຕ, ລົງວັນທີ 20 ກັນຍາ 2012

ກົດໝາຍວ່າດ້ວຍຊັບສິນທາງປັນຍາ ເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017

ມາເລເຊຍ: ໂມດູນ (module) ສຳລັບພິຈາລະນາການກວດສອບແບບອຸດສາຫະກຳ (2014)

ຟິລິບປິນ: ລະບຽບການຈັດຕັ້ງປະຕິບັດສະບັບປັບປຸງ ທີ່ຖືກຮັບຮອງແຕ່ ວັນທີ 20 ເມສາ 2011 ກ່ຽວກັບລະບຽບການຂອງ IPOPHL ເລກທີ 17-013 "ການປັບປຸງ ລະບຽບການຈັດຕັ້ງ ປະຕິບັດສະບັບປັບປຸງວ່າດ້ວຍສິດທິບັດ, ສິດທິບັດການ ປະດິດ ແລະ ແບບອຸດສາຫະ ກຳ", 10 ກໍລະກົດ 2017

BOP ລະບຽບຂອງ BOP ເລກທີ 14-004 ຂອງຫົວໜ້າຝ່າຍສິດທິບັດກ່ຽວ ກັບ "ການເຜີຍ ແຜ່ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳທີ່ເຍື້ອນເວລາ", 20 ພຶດສະພາ 2014

ຄຳສັ່ງຂອງ BOP ເລກທີ 16-005 ວ່າດ້ວຍ "ການນຳໃຊ້ລະຫັດປະເພດສິນຄ້າ ໃນການເຜີຍແຜ່ສິດທິບັດ, ສິດທິບັດການປະດິດ ແລະ ແບບອຸດສາຫະກຳ ຕາມ ມາດຕະຖານ WIPO St. 16 ແລະ ການປັບປຸງມາດຕະຖານ WIPO St. 3, 21 ມິຖຸນາ 2016

ລະບຽບຂອງ BOP ເລກທີ 17-002 ວ່າດ້ວຍ "ການນຳໃຊ້ລະບົບການ ພິຈາລະນາຄຸນນະ ພາບສິດທິບັດສຳລັບສິດທິບັດການປະດິດ ແລະ ແບບ ອຸດສາຫະກຳສະບັບປັບປຸງ", 20 ຕຸລາ 20 2017

ສິງກະ�โป: ຄຳສັ່ງແນະນຳປະຕິບັດ ເລກທີ 4/2018 ວ່າດ້ວຍ ການຈົດທະບຽນການໃຊ້ພາບ ເປັນ ຕົວປະສານກັບຜູ້ໃຊ້ (GUIs), 20 ມິຖຸນາ 2018

ຄຳສັ່ງແນະນຳປະຕິບັດ IP2SG ເລກທີ 1/2018 ວ່າດ້ວຍ ລະບົບເອເລັກ

ໂຕຣນິກອອນ ລາຍ (EOS), 30 ຕຸລາ 2018

ຄຳສັ່ງແນະນຳປະຕິບັດ ເລກທີ 1/2017 ວ່າດ້ວຍ ການຈັດປະເພດການຈັດ ໝວດສິນຄ້າ, ຜະລິດຕະພັນ ບໍ່ມີຕົວຕົນ ຫຼື ກຸ່ມຜະລິດຕະພັນບໍ່ມີຕົວຕົນ ແລະ ຜະລິດຕະພັນທີ່ບໍ່ມີຕົວຕົນ ສຳລັບ ຈຸດປະສົງການຈົດທະບຽນ [ແບບອຸດສາຫະ ກຳ], 30 ຕຸລາ 2017

ໄທ: ຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບອຸດສາຫະກຳຂອງ ຜະລິດຕະພັນ

ຫວຽດນາມ: ລະບຽບການກວດສອບຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ປະກາດໃຊ້ ໂດຍຂໍ້ຕົກລົງຂອງຫົວໜ້າ NOIP ເລກທີ 2381/QD-SHTT, ລົງວັນທີ 8 ທັນວາ 2009

ຄູ່ມືເຫຼັ້ມນີ້ຖືກຮ່າງຂຶ້ນໂດຍມີການພິຈາລະນາບັນດາກົດໝາຍ, ລະບຽບການ ແລະ ຫຼັກການິຕິສາດທີ່ມີຢູ່ ຂອງບັນດາປະເທດສະມາຊິກ ASEAN ກ່ຽວກັບການກວດສອບຄຳຮ້ອງຂໍຈົດທະບຽນແບບ ອຸດສາຫະກຳ. ບັນດາຄູ່ມື ແລະ ຂັ້ນຕອນການກວດສອບພາຍໃນທີ່ໄດ້ກ່າວມາຂ້າງເທິງ ອົງການຄຸ້ມ ຄອງວຽກງານຊັບສິນທາງປັນຍາຈຳນວນ ໜຶ່ງໄດ້ນຳໃຊ້ເພື່ອພິຈາລະນາການກວດສອບຄຳຮ້ອງຂໍຈົດ ທະບຽນແບບອຸດສາຫະກຳ.

ຄູ່ມືເຫຼັ້ມນີ້ ຍັງພິຈາລະນາມາດຕະຖານ ແລະ ການປະຕິບັດທີ່ດີເລີດຂອງ EU, ໂດຍສະເພາະ ຄູ່ມືການ

ກວດສອບແບບຂອງປະຊາຄົມທີ່ໄດ້ຮັບການຈົດທະບຽນ ຢູ່ສຳນັກງານຊັບສິນທາງປັນຍາຂອງສະຫະພາບເອີລົບ (EUIPO) ກໍ່ຄື ການກວດສອບຄຳຮ້ອງຂໍຈົດທະບຽນແບບຂອງປະຊາຄົມ 2015 ແລະ ການກວດສອບຄຳຮ້ອງຂໍ ລົບລ້າງແບບອຸດສາຫະກຳ 2015 ຕໍ່ໄປນີ້ ເອີ້ນວ່າ "ຄູ່ມື (ຄຳຮ້ອງ) ຂອງ EUIPO" ແລະ "ຄູ່ມື (ການລົບລ້າງ) ຂອງ EUIPO" ຕາມລຳດັບ.

ຮ່າງສະບັບທຳອິດຂອງຄູ່ມືເຫຼັ້ມນີ້ ຖືກນຳສະເໜີຕໍ່ອົງການຄຸ້ມຄອງຊັບສິນທາງປັນຍາຂອງບັນດາປະເທດສະມາຊິກ ASEAN ຢູ່ໃນ "ກອງປະຊຸມປຶກສາຫາລືກ່ຽວກັບແບບອຸດສາຫະກຳຂອງ ASEAN ແລະ ການຜັນຂະ ຫຍາຍຄູ່ມືການກວດສອບແບບອຸດສາຫະກຳຂອງອາຊຽນ", ຊຶ່ງໄດ້ຈັດຂຶ້ນທີ່ເມືອງລັງກາວີ ປະເທດມາເລເຊຍ ລະຫວ່າງ ວັນທີ 2-5 ມິຖຸນາ 2015.

ຮ່າງຄູ່ມືສະບັບປັບປຸງນີ້ ໄດ້ພິຈາລະນາບັນດາຄຳແນະນຳຈາກກອງປະຊຸມທີ່ເມືອງລັງກາວີ ແລະ ຄຳເຫັນ ແລະ ຄຳແນະນຳ ທີ່ຖືກສົ່ງພາຍຫຼັງກອງປະຊຸມ ໂດຍອົງການຄຸ້ມຄອງຂອງບັນດາປະເທດສະມາຊິກ ASEAN

ຈຸດປະສົງຂອງຄູ່ມື

ການຈັດຕັ້ງປະຕິບັດຄູ່ມືການກວດສອບແບບອຸດສາຫະກຳຢູ່ບັນດາປະເທດສະມາຊິກ ASEAN ໃນປັດຈຸ ບັນຍັງພົບກັບຄວາມທ້າທາຍ ຍ້ອນວ່າ ຍັງມີຄວາມແຕກຕ່າງທີ່ສຳຄັນຈຳນວນໜຶ່ງຢູ່ໃນລະບົບການກວດສອບ ແລະ ການຈົດທະບຽນແບບອຸດສາຫະກຳຢູ່ປະເທດສະມາຊິກ. ຄວາມແຕກຕ່າງດັ່ງກ່າວນີ້ ແມ່ນມີຢູ່ໃນກົດໝາຍຂອງ ບັນດາປະເທດສະມາຊິກ ແລະ ຈຳເປັນຕ້ອງໄດ້ດຳເນີນການແກ້ໄຂ ໃນເວລາປັບປຸງກົດໝາຍເຫຼົ່ານັ້ນ. ເຖິງຢ່າງໃດກໍຕາມ, ຖ້າຫາກມີການຮວບຮວມທີ່ດີກວ່າໃນລະດັບມາດຕະຖານດ້ານບໍລິຫານ ແລະ ຄຳສັ່ງແນະນຳພາຍໃນ ຈະເຮັດໃຫ້ມີຄວາມສອດຄ່ອງກັນໃນພາກປະຕິບັດຂອງບັນດາອົງການຄຸ້ມຄອງ ກ່ຽວກັບ ການຈົດທະບຽນ ແລະ ການຮັກສາສິດຕໍ່ແບບອຸດສາຫະກຳ.

ສິ່ງທີ່ຄວນເອົາໃຈໃສ່ກໍ່ຄື ແບບອຸດສາຫະກຳ ຍັງສາມາດໄດ້ຮັບການປົກປ້ອງຢູ່ບັນດາປະເທດສະມາຊິກ ASEAN ຕາມກົດໝາຍວ່າດ້ວຍລິຂະສິດ, ຊຶ່ງແບບອຸດສາຫະກຳຖືກຮັບຮູ້ເປັນ “ຜົນງານ” ຫຼື “ຜົນງານສິລະປະປັບໃຊ້”. ອັນນີ້ແມ່ນເກີດຈາກການປະຕິບັດຕາມມາດຕະຖານສາກົນ ພາຍໃຕ້ສົນທິສັນຍາເບີນວ່າດ້ວຍການປົກປ້ອງຜົນງານດ້ານວັນນະກຳ ແລະ ສິລະປະກຳ 1886 ສະບັບປັບປຸງ ປີ 1971 ແລະ ເກີດຈາກບົດບັນຍັດຂອງກົດໝາຍ ວ່າດ້ວຍສິດທິບັດຂອງປະເທດສະມາຊິກທີ່ປົກປ້ອງຜົນງານສິລະປະປັບໃຊ້. ເຖິງຢ່າງໃດກໍຕາມ, ຄູ່ມືເຫຼັ້ມນີ້ ບໍ່ຄວບ ຄຸມເອົາ ການປົກປ້ອງແບບທີ່ບໍ່ໄດ້ຮັບການຈົດທະບຽນ ຫຼື ຜົນງານສິລະປະປັບໃຊ້ ຕາມກົດໝາຍວ່າດ້ວຍລິຂະສິດ ຫຼື ຜົນສັກສິດຂອງການປົກປ້ອງດັ່ງກ່າວ.

ສິ່ງທີ່ຄວນເອົາໃຈໃສ່ກໍ່ຄື ແບບອຸດສາຫະກຳ ຍັງສາມາດໄດ້ຮັບການປົກປ້ອງຢູ່ບັນດາປະເທດສະມາຊິກ ASEAN ຕາມກົດໝາຍວ່າດ້ວຍລິຂະສິດ, ຊຶ່ງແບບອຸດສາຫະກຳຖືກຮັບຮູ້ເປັນ “ຜົນງານ” ຫຼື “ຜົນງານສິລະປະປັບໃຊ້”. ອັນນີ້ແມ່ນເກີດຈາກການປະຕິບັດຕາມມາດຕະຖານສາກົນ ພາຍໃຕ້ສົນທິສັນຍາເບີນວ່າດ້ວຍການປົກປ້ອງຜົນງານດ້ານວັນນະກຳ ແລະ ສິລະປະກຳ 1886 ສະບັບປັບປຸງ ປີ 1971 ແລະ ເກີດຈາກບົດບັນຍັດຂອງກົດໝາຍ ວ່າດ້ວຍສິດທິບັດຂອງປະເທດສະມາຊິກທີ່ປົກປ້ອງຜົນງານສິລະປະປັບໃຊ້. ເຖິງຢ່າງໃດກໍຕາມ, ຄູ່ມືເຫຼັ້ມນີ້ ບໍ່ຄວບ ຄຸມເອົາ ການປົກປ້ອງແບບທີ່ບໍ່ໄດ້ຮັບການຈົດທະບຽນ ຫຼື ຜົນງານສິລະປະປັບໃຊ້ ຕາມກົດໝາຍວ່າດ້ວຍລິຂະສິດ ຫຼື ຜົນສັກສິດຂອງການປົກປ້ອງດັ່ງກ່າວ.

ຄູ່ມືເຫຼັ້ມນີ້ ບໍ່ຜູກມັດອົງການຄຸ້ມຄອງແບບອຸດສາຫະກຳຂອງ ASEAN ແລະ ບໍ່ມີຈຸດປະສົງຈະສະທ້ອນການປະຕິບັດໃນປັດຈຸບັນຢູ່ອົງການຄຸ້ມຄອງເຫຼົ່ານັ້ນ. ເຖິງວ່າເນື້ອຈິດໃຈສ່ວນໃຫຍ່ທີ່ກຳນົດໄວ້ໃນກົດໝາຍພາຍໃນປະເທດ ແລະ ການປະຕິບັດຂອງບັນດາປະເທດສະມາຊິກ ASEAN ມີຄວາມສອດຄ່ອງຕາມເນື້ອໃນຂອງຄູ່ມືເຫຼັ້ມນີ້ແລ້ວກໍຕາມ, ແຕ່ຍັງຈະມີການຮວບຮວມຈຳນວນໜຶ່ງໃນບາງ ຈຸດສະເພາະ. ການປັບປຸງໃນຕໍ່ໜ້າ ແລະ ການນຳໃຊ້ຄູ່ມືເຫຼັ້ມນີ້ເປັນເອກະສານອ້າງອີງ ຄາດວ່າຈະເປັນການຊຸກຍູ້ໃຫ້ມີ

ການຮວບຮວມເອົາມາດຕະຖານ ແລະ ມາດຖານການກວດສອບແບບອຸດສາຫະກຳຢູ່ບັນດາປະເທດສະມາຊິກ ASEAN ໄດ້ເທື່ອລະກ້າວ. ການຈົດທະບຽນແບບອຸດສາຫະກຳ ຍັງຂຶ້ນກັບກົດໝາຍພາຍໃນປະເທດ ແລະ ລະບຽບການຂອງບັນດາປະເທດສະມາຊິກ ASEAN.

o

ຕົວອັກສອນຫຍໍ້ທີ່ນຳໃຊ້ໃນຄູ່ມືເຫຼັ້ມນີ້

ປະເທດສະມາຊິກ *ASEAN (ລະຫັດປະເທດ)*

BN: ບຣູໄນ ດາຣຸສາລາມ

ID: ອິນໂດເນເຊຍ

KH: ກຳປູເຈຍ

LA: ສປປ ລາວ

MY: ມາເລເຊຍ

MM: ມຽນມາ

PH: ຟິລິບປິນ

SG: ສິງກະ�โป

TH: ໄທ

VN: ຫວຽດນາມ

ຕົວອັກສອນຫຍໍ້ອື່ນໆ

CDR: ລະບຽບການຂອງສະພາ (EC) ເລກທີ 6/2002, ລົງວັນທີ 12 ທັນວາ 2001 ວ່ານ ດ້ວຍ ແບບອຸດສາຫະກຳຂອງປະຊາຄົມ (ລະບຽບການວ່າດ້ວຍແບບອຸດສາຫະກຳປະຊາຄົມ)

CDIR: ລະບຽບການຂອງຄະນະກຳມາທິການ (EC) ເລກທີ 2245/2002, ລົງວັນທີ 21 ຕຸລາ

2002, ລະບຽບການຈັດຕັ້ງປະຕິບັດຂອງສະພາ (EC) ເລກທີ 6/2002 ວ່າດ້ວຍແບບອຸດສາຫະກຳ ຂອງປະຊາຄົມ (ລະບຽບການຈັດຕັ້ງປະຕິບັດແບບອຸດສາຫະກຳຂອງປະຊາຄົມ)

DA: ກົດໝາຍວ່າດ້ວຍແບບອຸດສາຫະກຳ / ກົດໝາຍວ່າດ້ວຍແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ / ຄຳສັ່ງວ່າດ້ວຍແບບອຸດສາຫະກຳ

DL: ກົດໝາຍວ່າດ້ວຍແບບອຸດສາຫະກຳ / ກົດໝາຍວ່າດ້ວຍແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ

DR: ລະບຽບການວ່າດ້ວຍແບບອຸດສາຫະກຳ

ECJ: ສານຍຸຕິທຳຂອງສະຫະພາບເອີລົບ

EU: ສະຫະພາບເອີລົບ

HAGUE AGREEMENT: ສັນຍາເຮກວ່າດ້ວຍການຈົດທະບຽນແບບອຸດສາຫະກຳສາກົນ, ສົນທິສັນຍາ ເຈເນວາ ສະບັບວັນທີ 2 ກໍລະກົດ 1999

IPL: ກົດໝາຍວ່າດ້ວຍຊັບສິນທາງປັນຍາ

LCL: ການຈັດໝວດແບບອຸດສາຫະກຳສາກົນ, ພາຍໃຕ້ສັນຍາໂລຄາໂນ ວ່າດ້ວຍການການ ອະທິບາຍຄຳສັບການຈັດ ປະເພດແບບອຸດສາຫະກຳ, ເມືອງໂລຄາໂນ, 8 ຕຸລາ 1968, ຊຶ່ງຖືກປັບປຸງ ໃນວັນທີ 28 ກັນຍາ 1979

OHIM: ສຳນັກງານປະສານງານຄຸ້ມຄອງຊັບສິນທາງປັນຍາ (ສຳນັກງານແບບອຸດສາຫະກຳ ແລະ ເຄື່ອງໝາຍຂອງ ສະຫະພາບເອີລົບ)

PARIS Convention: ສົນທິສັນຍາປາຣີວ່າດ້ວຍການປົກປ້ອງຊັບສິນອຸດສາຫະກຳ, ສ້າງຂຶ້ນໃນປີ 1883 ຊຶ່ງປັບ ປຸງຄັ້ງຫຼ້າສຸດຢູ່ ສະຕອກໂຮມ ໃນປີ 1967

Office: ສຳນັກງານແຫ່ງຊາດ ຫຼື ອົງການບໍລິຫານລະດັບຊາດ ທີ່ຮັບຜິດຊອບການຈົດທະບຽນແບບ ອຸດສາຫະກຳ

TRIPS: ສັນຍາວ່າດ້ວຍສິດຕໍ່ຊັບສິນທາງປັນຍາທີ່ກ່ຽວຂ້ອງກັບການຄ້າ

WIPO: ອົງການຊັບສິນທາງປັນຍາໂລກ

WTO: ອົງການການຄ້າໂລກ

ເອກະສານອ້າງອີງ

ເອກະສານອ້າງອີງຈາກເວັບໄຊ້ທັງໝົດແມ່ນ ຮອດວັນທີ 30 ກັນຍາ 2015.

ສາເຫດຂອງການປະຕິເສດ ຫຼື ການຍົກເລີກການຈົດທະບຽນ

ພາກສະເໜີ

ອີງຕາມກົດໝາຍ ແລະ ລະບຽບການຂອງບັນດາປະເທດສະມາຊິກ ASEAN ວ່າດ້ວຍແບບອຸດສາຫະກຳ, ການຈົດທະບຽນແບບອຸດສາຫະກຳ ແລະ ຜົນສັກສິດຂອງການຈົດທະບຽນ ຕ້ອງສອດຄ່ອງຕາມເງື່ອນໄຂຫຼາຍຢ່າງ. ເງື່ອນໄຂດັ່ງກ່າວພົວພັນກັບແບບອຸດສາຫະກຳ ທີ່ເປັນຫົວຂໍ້ຂອງການປົກປ້ອງ ແລະ ພົວພັນກັບເອກະສານທີ່ກ່ຽວ ຂ້ອງ ທີ່ພົວພັນໂດຍກົງກັບຂອບເຂດການປົກປ້ອງແບບອຸດສາຫະກຳ. ບັນດາເງື່ອນໄຂດັ່ງກ່າວຖືກອ້າງເຖິງຢ່າງກວ້າງ ຂວາງຢູ່ໃນຄູ່ມືເຫຼັ້ມນີ້ທີ່ເປັນເງື່ອນໄຂດ້ານ “ເນື້ອໃນ” ຂອງການຈົດທະບຽນ.

ໃນປັດຈຸບັນເງື່ອນໄຂດ້ານເນື້ອໃນ ແລະ ເງື່ອນໄຂເບື້ອງຕົ້ນທີ່ກ່ຽວຂ້ອງການຈົດທະບຽນແບບອຸດສາຫະກຳ ຢູ່ບັນດາປະເທດສະມາຊິກ ASEAN ບໍ່ຖືກກຳນົດແບບເອກະພາບ. ຄູ່ມືເຫຼັ້ມນີ້ ສະເໜີ ມາດຖານ ແລະ ມາດຕະ ຖານການກວດສອບຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ແລະ ການຍົກເລີກການຈົດທະບຽນແບບອຸດສາ ຫະກຳ.

ຄູ່ມືເຫຼັ້ມນີ້ ເວົ້າສະເພາະ ກ່ຽວຂ້ອງກັບຫົວຂໍ້ທີ່ຕິດພັນກັບແບບອຸດສາຫະກຳ ດັ່ງນີ້:’

- ການກຳນົດ/ການອະທິບາຍ ກ່ຽວກັບ ແບບອຸດສາຫະກຳ
- ຄວາມໃໝ່
- ຄວາມສາມາດໃນການເບິ່ງເຫັນ
- ຄຸນລັກສະນະດ້ານເຕັກນິກ ແລະ ການນຳໃຊ້
- ການຂັດແຍ່ງກັບສິດມີກ່ອນໜ້າ
- ນະ�โยบายຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ

- ຂໍ້ຫ້າມສະເພາະທາງກົດໝາຍ
- ການນຳສະເໜີແບບ
- ການບົ່ງບອກຜະລິດຕະພັນ
- ຄຳຮ້ອງຂໍການປົກປ້ອງແບບອຸດສາຫະກຳຫຼາຍກວ່າໜຶ່ງແບບໃນຄຳຮ້ອງສະບັບດຽວ ແລະ ຄວາມເປັນ ເອກະພາບຂອງແບບອຸດສາຫະກຳ

ເຖິງວ່າ ກົດໝາຍຂອງບັນດາປະເທດສະມາຊິກ ASEAN ບໍ່ໄດ້ບັນຍັດບັນດາຫົວຂໍ້ທີ່ໄດ້ກ່າວມາຂ້າງເທິງ ທັງໝົດກໍຕາມ ແຕ່ກົດໝາຍເຫຼົ່ານັ້ນກໍ່ໄດ້ບັນຍັດກ່ຽວກັບຫົວຂໍ້ເຫຼົ່ານີ້ເກືອບທັງໝົດ. ນອກຈາກນັ້ນ ຍັງສຳຄັນ ທີ່ບັນດາຫົວຂໍ້ເຫຼົ່ານີ້ ແລະ ສາເຫດຂອງການປະຕິເສດ ຫຼື ການຍົກເລີກການຈົດທະບຽນ ບໍ່ຖືກກວດສອບໃນບາດກ້າວດ້ານຂັ້ນຕອນດຽວກັນ ຫຼື ໂດຍອົງການຄຸ້ມຄອງປະເພດດຽວກັນຢູ່ບັນດາປະເທດສະມາຊິກ ASEAN. ໃນນັ້ນ ບາງບັນຫາອາດຈະຖືກກວດສອບໂດຍໜ້າທີ່ຈາກອົງການຄຸ້ມຄອງຊັບສິນອຸດສາຫະກຳ, ສ່ວນບັນຫາອື່ນໆ ອາດຈະຖືກກວດສອບຕາມການຂັດຄ້ານການຈົດທະບຽນຈາກບຸກຄົນທີສາມເທົ່ານັ້ນ.

ຢູ່ປະເທດສະມາຊິກ ASEAN ຫຼາຍປະເທດ, ເງື່ອນໄຂຈຳນວນໜຶ່ງກ່ຽວກັບການກວດສອບຄວາມຖືກຕ້ອງຂອງການຈົດທະບຽນແບບອຸດສາຫະກຳ ແມ່ນອີງຕາມບໍລິບົດຂອງການດຳເນີນການຖອນ, ການຍົກເລີກ ຫຼື ການລົບລ້າງ ການດຳເນີນການດັ່ງກ່າວ ອາດຈະດຳເນີນໂດຍໜ່ວຍງານທີ່ມີສິດອຳນາດຂອງອົງການຄຸ້ມຄອງຊັບສິນທາງປັນຍາ ຫຼື ອົງການຕຸລາການຂອງປະເທດ.

ອາດຈະເວົ້າໄດ້ວ່າ ເນື້ອໃນຈຳນວນໜຶ່ງຢູ່ໃນຄູ່ມືເຫຼັ້ມນີ້ ບໍ່ແມ່ນສິ່ງທີ່ເປັນສາລະສຳຄັນ ແຕ່ເປັນເລື່ອງຮູບແບບອຸດສາຫະກຳ. ເຖິງຢ່າງໃດກໍຕາມ, ຫົວຂໍ້ເຫຼົ່ານັ້ນຖືກນຳມາລວມກັນເປັນສິ່ງທີ່ກ່ຽວຂ້ອງກັບເນື້ອໃນ ແລະ ມີສາຍພົວພັນໂດຍກົງກັບແບບອຸດສາຫະກຳ ເຊັ່ນ: ການອະທິບາຍຄຳສັບວ່າ ແບບອຸດສາຫະກຳເປັນຫົວຂໍ້ການປົກປ້ອງ, ຂອບເຂດການປົກປ້ອງ, ແບບອຸດສາຫະກຳທີ່ສາມາດໄດ້ຮັບການຈົດທະບຽນ ຫຼື ຜົນສັກສິດຕາມ ກົດໝາຍຂອງການຈົດທະບຽນແບບອຸດສາຫະກຳ.

ພາຍໃຕ້ກົດໝາຍພາຍໃນປະເທດທີ່ມີຜົນບັງຄັບໃຊ້ ເລື່ອງການມີສິດ ແລະ ກຳມະສິດຕໍ່ແບບອຸດສາຫະກຳ ຫຼື ສິດຕໍ່ແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ ອາດຈະເປັນຕົວກຳນົດຄວາມສາມາດໃນການຈົດທະບຽນແບບອຸດສາຫະກຳ ໃນນາມບຸກຄົນໃດໜຶ່ງ ແລະ ອາດຈະຖືກອ້າງເປັນເຫດຜົນໃນການຖອນການຈົດທະບຽນ ທີ່ອອກໃຫ້ແກ່ບຸກຄົນໃດຢ່າງບໍ່ຖືກຕ້ອງ. ເຖິງຢ່າງໃດກໍຕາມ , ໂດຍທົ່ວໄປ ຄຳຖາມທີ່ຕິດພັນກັບການມີສິດ ແລະ ກຳມະສິດຕໍ່ແບບອຸດສາຫະກຳ ຈະຖືກຕັດສິນໂດຍອົງການຕຸລາການ ແລະ ຈະບໍ່ຢູ່ໃນຂອບເຂດສິດອຳນາດຂອງອົງການຄຸ້ມຄອງບໍລິຫານແບບອຸດສາຫະກຳ. ດັ່ງນັ້ນ ບັນຫາເຫຼົ່ານີ້ ຈຶ່ງບໍ່ຖືກກຳນົດໄວ້ໃນຄູ່ມືເຫຼັ້ມນີ້.

ເອກະສານຊ້ອນທ້າຍ I ຂອງຄູ່ມືເຫຼັ້ມນີ້ ປະກອບດ້ວຍ ເນື້ອໃນທີ່ຄັດມາຈາກບົດບັນຍັດຂອງກົດໝາຍ ແລະ ລະບຽບການຂອງບັນດາປະເທດສະມາຊິກ ASEAN ທີ່ກ່ຽວຂ້ອງກັບຫົວຂໍ້ທີ່ໄດ້ກ່າວມາ.

ເອກະສານຊ້ອນທ້າຍ II ຂອງຄູ່ມືເຫຼັ້ມນີ້ ປະກອບດ້ວຍ ບັນດາການເຊື່ອມຕໍ່ທາງອິນເຕີເນັດ ທີ່ເຂົ້າເຖິງເວັບໄຊ້ຂອງອົງການຄຸ້ມຄອງແບບອຸດສາຫະກຳບັນດາປະເທດສະມາຊິກ ASEAN. ເວັບໄຊ້ເຫຼົ່ານີ້ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບນິຕິກຳ ແລະ ຂັ້ນຕອນການຈົດທະບຽນແບບອຸດສາຫະກຳ.

1. ການອະທິບາຍຄຳສັບ ກ່ຽວກັບ 'ແບບອຸດສາຫະກຳ'

1.1. ການອະທິບາຍຄຳສັບຢູ່ໃນກົດໝາຍຂອງປະເທດສະມາຊິກ

ຄຳສັບ "ແບບອຸດສາຫະກຳ" ຖືກກຳນົດໄວ້ໃນກົດໝາຍວ່າດ້ວຍແບບອຸດສາຫະກຳຂອງແຕ່ລະປະເທດສະມາຊິກ ASEAN[1]. ການອະທິບາຍຄຳສັບ 'ແບບອຸດສາຫະກຳ' ຢູ່ໃນກົດໝາຍຂອງປະເທດມາຊິກ ASEAN ສັງລວມໄດ້ ດັ່ງນີ້:

> ບຣູໄນ ດາຣູສາລາມ: "ແບບອຸດສາຫະກຳ" ໝາຍເຖິງ ຄຸນລັກສະນະຂອງຮູບຊົງ, ຮູບຄຸນລັກສະນະ, ລວດລາຍ ຫຼື ເຄື່ອງປະດັບທີ່ໃຊ້ກັບສິ່ງຂອງທີ່ເປັນສິນຄ້າ[2] ໂດຍຜ່ານຂະບວນການອຸດສາຫະກຳ ຊຶ່ງເປັນຄຸນລັກສະນະເມື່ອຢູ່ໃນຜະລິດຕະພັນສຳເລັດຮູບແລ້ວຈະດຶງດູດ ແລະ ຖືກຕັດສິນດ້ວຍສາຍຕາ [...].
>
> ກຳປູເຈຍ: [...] ອົງປະກອບຂອງເສັ້ນສາຍ ຫຼື ສີສັນ ຫຼື ແບບສາມມິຕິ ຫຼື ວັດຖຸ ບໍ່ວ່າຈະພົວພັນກັບເສັ້ນສາຍ ຫຼື ສີ ຫຼືບໍ່ກໍ່ຕາມ ໃຫ້ຖືວ່າເປັນແບບອຸດສາຫະກຳ ຊຶ່ງອົງປະກອບ, ຮູບແບບ ຫຼື ວັດຖຸ ດັ່ງກ່າວ ໃຫ້ຮູບລັກສະນະພິເສດແກ່ຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ ແລະ ສາມາດໃຊ້ເປັນລວດລາຍສຳລັບຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ ແລະ ດຶງດູດສາຍຕາ ແລະ ຕັດສິນໄດ້ດ້ວຍສາຍຕາ.
>
> ອິນໂດເນເຊຍ: ແບບອຸດສາຫະກຳ ໝາຍເຖິງ ການສ້າງສັນດ້ານຮູບຊົງ, ໂຄງແບບ ຫຼື ອົງປະກອບຂອງເສັ້ນສາຍ ຫຼື ສີສັນ ຫຼື ເສັ້ນສາຍ ແລະ ສີສັນ ຫຼື ອົງປະກອບຂອງສິ່ງດັ່ງກ່າວໃນແບບສາມມິຕິ ຫຼື ສອງມິຕິ ຊຶ່ງໃຫ້ຄວາມຮູ້ສຶກສວຍງາມ ແລະ ສາມາດເຮັດໄດ້ໃນແບບລວດລາຍໃນແບບສາມມິຕິ ຫຼື ສອງມິຕິ ແລະ ນຳໃຊ້ເພື່ອສ້າງຜະລິດຕະພັນ, ສິນຄ້າ ຫຼື ສິນຄ້າອຸດສາຫະກຳ ແລະ

---

[1] ເບິ່ງເພີ່ມເຕີມຢູ່ບົດບັນຍັດຂອງ BN DA, s. 2; KH DL, ມາດຕາ. 89; ID DL ມາດຕາ 1.1; LA IP Law ມາດຕາ 3.8; MY DA, s. 3; MM DL, s. 2(a); PH IP Code, s. 112; SG DA s. 2.1; TH DA s. 3; ແລະ VN IPL ມາດຕາ 4.13 ເບິ່ງຄູ່ມືແນະນຳຂອງ)EUIPO) (ຄຳຮ້ອງຂໍຈົດທະບຽນ), ວັກ 4.1

[2] "ສິ່ງຂອງທີ່ເປັນສິນຄ້າ" ຖືກກຳນົດວ່າເປັນ ສິ່ງຂອງທີ່ມີການຜະລິດດ້ານອຸດສາຫະກຳ ແລະ ປະກອບດ້ວຍ ສ່ວນໃດໜຶ່ງຂອງວັດຖຸ ກໍລະນີທີ່ສ່ວນດັ່ງກ່າວຫາຫາສ້າງຂຶ້ນ ແລະ ຂາຍແຍກຕ່າງຫາກ

ຫັດຖະກຳ.

ສປປ ລາວ: 'ແບບອຸດສາຫະກຳ' ໝາຍເຖິງ ຮູບແບບ ຫຼື ຮູບร่าง ຂອງຜະລິດຕະພັນ ທີ່ສ້າງຂຶ້ນ ຊຶ່ງປະກອບດ້ວຍຮູບร่าง, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ

ມາເລເຊຍ: "ແບບອຸດສາຫະກຳ" ໝາຍເຖິງ ຄຸນລັກສະນະຂອງ ຮູບຊົງ, ໂຄງແບບ, ລວດລາຍ ຫຼື ການຕົບແຕ່ງ ທີ່ນຳໃຊ້ກັບຜະລິດຕະພັນ[3] ໂດຍຂະບວນການ ຫຼື ວິທີທາງອຸດສາຫະກຳ ຊຶ່ງເປັນຄຸນລັກສະນະເມື່ອຢູ່ໃນຜະລິດຕະພັນສຳເລັດຮູບ ຈະດຶງດູດສາຍຕາ ແລະ ຕັດສິນດ້ວຍສາຍຕາ [...].

ມຽນມາ: ແບບອຸດສາຫະກຳ ໝາຍເຖິງ ຮູບຄຸນລັກສະນະຂອງຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ ທັງໝົດ ຫຼື ບາງສ່ວນ ທີ່ເກີດຈາກຄຸນລັກສະນະຕ່າງໆ ໂດຍສະເພາະ ເສັ້ນສາຍ, ສີສັນ, ຮູບຊົງ, ລວດລາຍ ຫຼື ວັດສະດຸຂອງຜະລິດຕະພັນດັ່ງກ່າວ ແລະ/ຫຼື ການຕົບແຕ່ງ.

ຟິລິບປິນ: ແບບອຸດສາຫະກຳ ແມ່ນອົງປະກອບຂອງເສັ້ນສາຍ ຫຼື ສີສັນ ຫຼື ແບບສາມມິຕິ ໂດຍບໍ່ຈຳແນກວ່າກ່ຽວຂ້ອງກັບເສັ້ນສາຍ ຫຼື ສີສັນຫຼືບໍ່ກໍ່ຕາມ; ຊຶ່ງອົງປະກອບ ຫຼື ຮູບແບບດັ່ງກ່າວສ້າງຮູບລັກສະນະພິເສດ ແລະ ອາດຈະເຮັດໜ້າທີ່ເປັນລວດລາຍແກ່ຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ.

ສິງກະ�โป: "ແບບອຸດສາຫະກຳ" ໝາຍເຖິງ ຄຸນລັກສະນະຂອງຮູບຊົງ, ໂຄງແບບ, ສີສັນ, ລວດລາຍ ຫຼື ການຕົບແຕ່ງທີ່ໃຊ້ກັບສິ່ງຂອງທີ່ເປັນສິນຄ້າ[4] ຫຼື ຜະລິດຕະພັນທີ່ບໍ່ມີຮູບຊົງ ທີ່ໃຫ້ຮູບລັກສະນະແກ່ສິ່ງຂອງທີ່ເປັນສິນຄ້າ ຫຼື ຜະລິດຕະພັນບໍ່ມີຕົວຕົນທາງກາຍະພາບ [...].

ໄທ: "ແບບອຸດສາຫະກຳ" ໝາຍເຖິງ ຮູບແບບ ຫຼື ອົງປະກອບຂອງເສັ້ນສາຍ ຫຼື ສີສັນ ທີ່ໃຫ້ຮູບລັກສະນະພິເສດແກ່ຜະລິດຕະພັນ ແລະ ສາມາດໃຊ້ເປັນຮູບແບບຂອງຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ.

ຫວຽດນາມ: ແບບອຸດສາຫະກຳ ໝາຍເຖິງ ຮູບລັກສະນະບາງຢ່າງຂອງຜະລິດຕະພັນ ທີ່ນຳສະເໜີຜ່ານໂຄງແບບສາມມິຕິ, ເສັ້ນສາຍ, ສີສັນ ຫຼື ອົງປະກອບຂອງອົງປະກອບເຫຼົ່ານີ້ລວມກັນ.

---

[3] "ສິ່ງຂອງທີ່ເປັນສິນຄ້າ" ຖືກກຳນົດວ່າເປັນສິ່ງຂອງທີ່ມີການຜະລິດດ້ານອຸດສາຫະກຳ ແລະ ປະກອບດ້ວຍສ່ວນໃດໜຶ່ງຂອງວັດຖຸດັ່ງກ່າວ ກໍລະນີທີ່ສ່ວນດັ່ງກ່າວຫາກສ້າງ ຂຶ້ນ ແລະ ຂາຍແຍກຕ່າງຫາກ

[4] "ສິ່ງຂອງທີ່ເປັນສິນຄ້າ" ໝາຍເຖິງ ສິ່ງທີ່ຜະລິດຂຶ້ນ (ບໍ່ວ່າຈະຜ່ານຂະບວນການທາງອຸດສາຫະກຳ, ດ້ວຍມື ຫຼື ດ້ວຍວິທີອື່ນ) ແລະ ປະກອບດ້ວຍ ສ່ວນໃດໜຶ່ງຂອງສິ່ງຂອງ ຖ້າຫາກສິ່ງນັ້ນເຮັດ ແລະ ຂາຍແຍກຕ່າງຫາກ ແລະ ຊຸດໃດໜຶ່ງຂອງສິ່ງຂອງ. "ຜະລິດຕະພັນທີ່ບໍ່ມີຕົວຕົນ" ໝາຍເຖິງ ສິ່ງໃດໜຶ່ງທີ່ (i) ບໍ່ມີຮູບແບບທາງວັດຖຸ. (ii) ຜະລິດໂດຍການຍົງແບບໃສ່ພື້ນຜິວ ຫຼື ລົງໃນວັດຖຸ (ລວມທັງອາກາດ); ແລະ (iii) ມີໜ້າທີ່ອັດຖະປະໂຫຍດໃນຕົວມັນເອງທີ່ບໍ່ໄດ້ເປັນພຽງການສະແດງຮູບລັກສະນະຂອງສິ່ງຂອງ. ຫຼື ເພື່ອຖ່າຍທອດຂໍ້ມູນ ແລະ ປະກອບດ້ວຍຊຸດຜະ ລິດຕະພັນໃດໜຶ່ງທີ່ບໍ່ມີຕົວຕົນ

ດັ່ງນັ້ນ, ສຳລັບຈຸດປະສົງຂອງຄູ່ມືເຫຼັ້ມນີ້, 'ແບບອຸດສາຫະກຳ' ຈຶ່ງກຳນົດໄດ້ວ່າ ເປັນຮູບລັກສະນະຂອງ ຜະລິດຕະພັນສອງມິຕິ ຫຼື ສາມມິຕິ ຫຼື ສ່ວນໜຶ່ງຂອງຜະລິດຕະພັນ ທີ່ມາຈາກຄຸນລັກສະນະຂອງຮູບຊົງ , ສັ້ນຮອບຂອບ, ເສັ້ນສາຍ, ສີສັນ, ວັດສະດຸ ຫຼື ອົງປະກອບອື່ນທີ່ເຮັດໃຫ້ເກີດແບບອຸດສາຫະກຳ[5].

ການຈົດທະບຽນແບບອຸດສາຫະກຳ ບໍ່ສາມາດເຮັດໄດ້ ຖ້າຫົວຂໍ້ຄຳຮ້ອງຂໍຈົດທະບຽນບໍ່ແມ່ນແບບ ອຸດສາຫະກຳ ດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍພາຍໃນປະເທດ. ຖ້າຄຳຮ້ອງຫາກກ່ຽວຂ້ອງກັບຫົວຂໍ້ທີ່ ບໍ່ສອດຄ່ອງຕາມການອະທິບາຍຄຳສັບ 'ແບບອຸດສາຫະກຳ' ທີ່ກຳນົດຢູ່ໃນກົດໝາຍ ຫຼື ຖ້າຫາກມີ ການຕັດສິນແລ້ວວ່າ ວັດຖຸໃນຄຳຮ້ອງຂໍຈົດທະບຽນບໍ່ແມ່ນແບບອຸດສາຫະກຳ ນັກກວດສອບຕ້ອງ ສະເໜີໃຫ້ມີການປະຕິເສດການຈົດທະບຽນ. ໃນກໍລະນີນີ້ ບໍ່ຈຳເປັນຕ້ອງກວດສອບຄຳຮ້ອງຂໍໃຫ້ ອະທິບາຍເຫດຜົນຂອງການປະຕິເສດ.

ຖ້າຫົວຂໍ້ຄຳຮ້ອງຂໍຈົດທະບຽນທີ່ໄດ້ຮັບການຈົດທະບຽນເປັນແບບອຸດສາຫະກຳ ຫາກຂັດກັບເງື່ອນໄຂ ຕາມການອະທິບາຍຢູ່ໃນກົດໝາຍ, ການຈົດທະບຽນຖືກຖືກຖອນ, ຍົກເລີກ ຫຼື ລົບລ້າງ.

1.2. ອົງປະກອບຂອງການອະທິບາຍຄຳສັບ

ການອະທິບາຍຄຳສັບ 'ແບບອຸດສາຫະກຳ' ທີ່ໄດ້ກ່າວມາຂ້າງເທິງ ໄດ້ກຳນົດ ຫຼື ໝາຍເຖິງ ອົງປະກອບ ທີ່ ພົບເຫັນໄດ້ທົ່ວໄປດັ່ງຕໍ່ໄປນີ້ ຊຶ່ງຫົວຂໍ້ຄຳຮ້ອງຂໍຈົດທະບຽນຕ້ອງໃຫ້ສອດຄ່ອງຕາມນັ້ນ ເພື່ອໃຫ້ ສາມາດຈົດທະ ບຽນແບບອຸດສາຫະກຳໄດ້ ດັ່ງນີ້:

(i) ຕ້ອງປະກອບດ້ວຍຄຸນລັກສະນະຂອງຮູບຊົງ ຫຼື ຄຸນລັກສະນະທີ່ 'ດຶງດູດສາຍຕາ', ທີ່ ເກີດຈາກໜຶ່ງ ຫຼື ຫຼາຍປັດໃຈ ເປັນຕົ້ນ ຮູບຊົງ, ເສັ້ນສາຍ, ສີສັນ ຫຼື ອົງປະກອບຂອງ ສິ່ງດັ່ງກ່າວ;

(ii) ຄວນສາມາດນຳສະເໜີໃນຕົວຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າ;

(iii) ຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າດັ່ງກ່າວ ຄວນຈະຖືກຜະລິດໃນອຸດສາຫະກຳ ຫຼື ຫັດຖະກຳ.

1.2.1. <u>ຄຸນລັກສະນະຂອງຮູບຊົງ</u>

ແບບອຸດສາຫະກຳ ກ່ຽວຂ້ອງກັບ ຮູບລັກສະນະ ຫຼື ສິ່ງທີ່ອາດຈະເບິ່ງເຫັນຂອງຜະລິດຕະພັນ ຫຼື ສິ່ງ

[5] ໃນຄູ່ມືເຫຼັ້ມນີ້ ຄຳວ່າ. "ແບບອຸດສາຫະກຳ" ແລະ "ແບບ" ໃຊ້ແທນກັນໄດ້

ຂອງ ທີ່ເປັນສິນຄ້າທີ່ດຶງດູດ ແລະ ອາດຈະ “ຕັດສິນດ້ວຍສາຍຕາ”.

ຖ້າຄຳຮ້ອງຂໍຈົດທະບຽນ ຫາກອ້າງເຖິງຫົວຂໍ້ທີ່ບໍ່ມີລັກສະນະເປັນຮູບຊົງ ຫຼື ສິ່ງທີ່ອາດຈະເບິ່ງເຫັນ ຂອງຜະລິດຕະພັນ ແມ່ນບໍ່ຄວນຮັບຈົດທະບຽນແບບອຸດສາຫະກຳ ແລະ ໜ່ວຍງານກວດສອບແບບ ອຸດສາຫະກຳ ກໍຄວນປະຕິເສດຄຳຮ້ອງຂໍຈົດທະບຽນ.

ຫົວຂໍ້ຕໍ່ໄປນີ້ ຈຳເປັນຕ້ອງມີການພິຈາລະນາເປັນພິເສດ ເພື່ອກຳນົດວ່າມີເງື່ອນໄຂຄົບຖ້ວນທີ່ຈະ ສາມາດ ໃຫ້ຮູບຊົງແກ່ຜະລິດຕະພັນບາງຢ່າງ ສຳລັບການຈົດທະບຽນແບບອຸດສາຫະກຳ:

1.2.1.1. ຄຳເວົ້າ, ຕົວໜັງສື ແລະ ຕົວອັກສອນອື່ນໆ

ຄຳເວົ້າ, ຕົວໜັງສື ແລະ ຕົວເລກ ທີ່ນຳສະເໜີເປັນແນວຄິດແບບນາມມະທຳ ໂດຍເປັນເອກະລາດຈາກ ການນຳສະເໜີໃນຜະລິດຕະພັນ ຈະບໍ່ຖືວ່າເປັນຮູບລັກສະນະຜະລິດຕະພັນ.

ຄຳເວົ້າ, ຕົວໜັງສື ແລະ ຕົວເລກ ທີ່ນຳສະເໜີເປັນແນວຄິດແບບນາມມະທຳ ໂດຍເປັນເອກະລາດຈາກ ການນຳສະເໜີໃນຜະລິດຕະພັນ ຈະບໍ່ຖືວ່າເປັນຮູບລັກສະນະຜະລິດຕະພັນ.

ຕົວຢ່າງ: ລວດລາຍພາຍນອກຕໍ່ໄປນີ້ ປະກອບດ້ວຍ ຕົວໜັງສື ແລະ ຄຳເວົ້າ[6] ເຊັ່ນ:

1.2.1.2. ສີສັນ

ສີສັນທີ່ຖືກນຳສະເໜີ ຫຼື ຖືກອ້າງວ່າ ເປັນແນວຄິດແບບນາມມະທຳ ໂດຍບໍ່ຂຶ້ນກັບການນຳສະເໜີຢູ່ໃນ ຮູບຊົງໃນຮູບຊົງ ຫຼື ເສັ້ນຮອບຂອບ ບໍ່ສາມາດຮັບຈົດທະບຽນໃນຖານະຮູບລັກສະນະຂອງຜະລິດຕະ

[6] ຮູບໄດ້ມາຈາກ http://janefarnhamdesigns.com/portfolio/love-letters/

ພັນໄດ້.

ເຖິງຢ່າງໃດກໍຕາມ, ແບບອຸດສາຫະກຳອາດຈະ ແລະ ມັກຈະປະກອບດ້ວຍຄຸນລັກສະນະຂອງສີສັນ ຊຶ່ງ ເມື່ອລວມກັບຄຸນລັກສະນະອື່ນ ຈະສ້າງຮູບຊົງຂອງຜະລິດຕະພັນ. ແບບອາດຈະໄດ້ຮັບການຈົດ ທະບຽນ ພ້ອມກັບສີໜຶ່ງ ຫຼື ຫຼາຍສີ ທີ່ຖືວ່າເປັນໜຶ່ງໃນຄຸນລັກສະນະທີ່ຖືກຮຽກຮ້ອງສິດ[7]. ອັນນີ້ຈະ ບັງຄັບໃຊ້ກັບທັງແບບສາມມິຕິ ແລະ ແບບສອງມິຕິ ເຊັ່ນ: ການຕົບແຕ່ງດ້ານນອກ, ເຄື່ອງໝາຍ, ສັນຍາລັກເປັນຮູບພາບ ແລະ ອຸປະກອນທີ່ ຄ້າຍຄືກັນ ທີ່ອາດຈະຖືໄດ້ວ່າເປັນຜະລິດຕະພັນ.

ຕົວຢ່າງ: ແບບສາມມິຕິຕໍ່ໄປນີ້ຂອງໂມງໃສ່ແຂນ ປະກອບດ້ວຍທັງ ຮູບຊົງ ແລະ ສີສັນ[8]:

1.2.1.3. ດົນຕີ ແລະ ສຽງ

ດົນຕີ ແລະ ສຽງ ບໍ່ສາມາດສັງເກດໄດ້ດ້ວຍການເບິ່ງ ແລະ ບໍ່ສາມາດໃຫ້ຮູບຊົງທີ່ເບິ່ງເຫັນ ເປັນຕົ້ນ ຜະລິດ ຕະພັນທີ່ເປັນຮູບປະພັນ. ອັນນີ້ບໍ່ໄດ້ຄວາມວ່າ ຈະເປັນໄປບໍ່ໄດ້ທີ່ຈະໃຫ້ຜະລິດຕະພັນມີຮູບຊົງ ໂນດດົນຕີ ຫຼື ບໍ່ໄດ້ ໝາຍຄວາມວ່າ ຈະເປັນໄປບໍ່ໄດ້ທີ່ຈະຮຽກຮ້ອງສິດໃນແບບເພື່ອການຕົບແຕ່ງພື້ນ ຂອງຜະລິດຕະພັນ ດ້ວຍຮູບຊົງຂອງ ໂນດດົນຕີ ທີ່ຂຽນເປັນອັກສອນ.

[7] ອີງຕາມກົດໝາຍຂອງປະເທດສະມາຊິກ ASEAN ບາງປະເທດ ສີສັນບໍ່ສາມາດຮຽກຮ້ອງສິດເປັນລັກສະນະຂອງແບບອຸດ ສາຫະກຳໄດ້

[8] ຮູບມາຈາກ http://articulo.mercadolibre.com.co/MCO-414986807-reloj- swatch-coleccion-new-gent-hombre-o-mujer-originales-_JM

ຕົວຢ່າງ: ແບບລວດລາຍພາຍນອກຕ່ຳໄປນີ້ ບັນຈຸເອົາໂນດດົນຕີ[9]:



1.2.1.4. ຮູບຖ່າຍ

ຮູບຖ່າຍອາດຈະໃຫ້ຜະລິດຕະພັນມີຮູບຂອງພື້ນທີ່ອາດຈະຖືວ່າໄດ້ວ່າເປັນການອອກແບບສຳລັບ ຜະລິດ ຕະພັນດັ່ງກ່າວ. ນອກຈາກນັ້ນ, ອາດຈະຖືວ່າ ຮູບຖ່າຍນັ້ນເປັນຮູບຊົງຂອງຜະລິດຕະພັນ ເປັນຕົ້ນ ບັດໄປ ສະນີ, ເຈ້ຍ, ສິ່ງພິມ ແລະ ສິ່ງຂອງທີ່ເປັນສິນຄ້າທີ່ຄ້າຍຄືກັນ (ເບິ່ງເພີ່ມເຕີມຢູ່ ການ ຈັດໝວດໂລຄາໂນ CLC class 19.08).

1.2.1.5. ແບບສະຖາປັດ, ແຜນຜັງ, ແບບກໍ່ສ້າງ

ແບບສະຖາປັດ, ແຜນຜັງ ແລະ ແບບກໍ່ສ້າງອາຄານ, ເຄື່ອງຈັກ ຫຼື ອຸປະກອນອື່ນ ອາດຈະຖືວ່າເປັນຮູບ ລັກສະນະຂອງຜະລິດຕະພັນ ດັ່ງທີ່ຖືກລະບຸຢູ່ໃນຄຳຮ້ອງຂໍຈົດທະບຽນ “ສິ່ງພິມ” (ເບິ່ງເພີ່ມເຕີມຢູ່ໃນ LCL class 19.08).

ແບບສະຖາປັດ, ແຜນຜັງ ແລະ ແບບສຳລັບການກໍ່ສ້າງ ສຳລັບອາຄານ, ເຄື່ອງຈັກຫຼື ອຸປະກອນອື່ນ ບໍ່ ສາມາດຖືວ່າເປັນແບບອຸດສາຫະກຳຂອງອາຄານ, ເຄື່ອງຈັກ ຫຼື ອຸປະກອນອື່ນ ຍ້ອນວ່າ ແຜນຜັງແບບ ສອງມິຕິ ຫຼື ສິ່ງພິມບໍ່ໄດ້ໃຫ້ຮູບຄຸນລັກສະນະຂອງຜະລິດຕະພັນສຳເລັດຮູບແບບດຽວກັນ.

ແບບສະຖາປັດ, ແຜນຜັງ ແລະ ແຜນຜັງເຄື່ອງຈັກ, ອຸປະກອນ ແລະ ສິ່ງປະດິດອື່ນ ຍັງສາມາດໄດ້ຮັບ ການປົກປ້ອງຕາມກົດໝາຍວ່າດ້ວຍລິຂະສິດ ຖ້າຫາກສອດຄ່ອງຕາມເງື່ອນໄຂດ້ານກົດໝາຍໃນການ

[9] ຮູບເອົາມາຈາກ: http://nevarsoahc.deviantartcom/art/music-pattern-149006824

ປົກປ້ອງດັ່ງກ່າວ, ໂດຍສະເພາະ ເງື່ອນໄຂກ່ຽວກັບຄວາມໃໝ່ທີ່ບໍ່ຊ້ຳໃຜ.

1.2.1.6. ຮູບສະແດງ, ແຜນວາດ, ແຜນທີ່ ແລະ ສື່ປະກອບການສິດສອນ

ສື່ປະກອບການສິດສອນທີ່ເປັນສິ່ງພິມ ເຊັ່ນ: ຮູບສະແດງ, ແຜນວາດ, ຕາຕະລາງ ແລະ ແຜນທີ່ ແມ່ນ ຜະລິດຕະພັນ ແລະ ອາດຈະຖືເປັນຮູບລັກສະນະຂອງສິ່ງເຫຼົ່ານີ້ ເປັນການອອກແບບທາງອຸດສາຫະກຳ ຂອງຜະລິດ ຕະພັນເຫຼົ່ານັ້ນ ໂດຍສາມາດຮັບຈົດຈົດທະບຽນສິ່ງເຫຼົ່ານີ້ໄດ້ ໂດຍທີ່ການຊີ້ບອກຂອງ ຜະລິດຕະພັນເປັນ “ສື່ປະກອບການສິດສອນ” (ເບິ່ງເພີ່ມເຕີມຢູ່ LCL, class 19-07).

ນອກຈາກນີ້ ການອອກແບບດັ່ງກ່າວ ຍັງສາມາດນຳໄປໃຊ້ກັບຜະລິດຕະພັນອື່ນເປັນລວດລາຍພາຍ ນອກ ຫຼື ແບບສອງມິຕິອື່ນໃນຮູບແບບການຕົບແຕ່ງ, ຕົວຢ່າງ ສຳລັບ ຜະລິດຕະພັນ ເຊັ່ນ: ຜ້າປູໂຕະ, ຜູ້ເຊັດຄີງຫາດຊາຍ, ເຈັ້ຍຕິດຝາເຮືອນ ແລະ ອື່ນໆ ໂດຍບໍ່ສົ່ງຜົນກະທົບຕໍ່ສິດ ຫຼື ການຮຽກຮ້ອງສິດ.

ແຜນທີ່ ແລະ ຮູບສະແດງ ແລະ ແຜນວາດ ຍັງສາມາດໄດ້ຮັບການປົກປ້ອງຕາມກົດໝາຍວ່າດ້ວຍລິຂະ ສິດ ຖ້າຫາກໄດ້ຕາມເງື່ອນໄຂຂອງກົດໝາຍຢ່າງຄົບຖ້ວນໃນການຮັບການປົກປ້ອງດັ່ງກ່າວ, ໂດຍ ສະເພາະ ເງື່ອນໄຂກ່ຽວກັບຄວາມໃໝ່ທີ່ບໍ່ຊ້ຳໃຜ.

1.2.1.7. ການສະແດງຜົນຢູ່ໜ້າຈໍຄອມພິວເຕີ, ຮູບຄຸນລັກສະນະເທິງໜ້າຈໍ (ໄອຄອນ)

ແບບການສະແດງຜົນຂອງໜ້າຈໍຄອມພິວເຕີ, ອຸປະກອນພິກພາ ແລະ ຜະລິດຕະພັນທີ່ຄ້າຍຄືກັນ ແລະ ແບບສ່ວນຕໍ່ການປະສານການສະແດງຜົນກັບຜູ້ໃຊ້ (GUIs) ສາມາດຈົດທະບຽນເປັນແບບ ອຸດສາຫະກຳ[10]. ນອກ ຈາກນັ້ນ, ໄອຄອນ, ກຸ່ມໄອຄອນ ແລະ ຄຸນລັກສະນະທີ່ອາດຈະຮັບຮູ້ດ້ວຍ ສາຍຕາຂອງໂປແກຣມຄອມພິວເຕີອາດຈະບົ່ງບອກວ່າເປັນຜະລິດຕະພັນທີ່ທີ່ນຳສະເໜີໃນແບບ ດັ່ງກ່າວ. (ເບິ່ງເພີ່ມເຕີມຢູ່ LCL, class 14- 04).

[10] ຕົວຢ່າງ ຄຳແນະນຳປະຕິບັດຂອງສົງກະໂປ ເລກທີ. 4 ປີ 2018 ວ່າດ້ວຍ ການຈົດທະບຽນສ່ວນຕໍ່ປະສານຮູບສະແດງກັບຜູ້ ໃຊ້ (GUIs).

ຮູບຕໍ່ໄປນີ້ສະແດງແບບຂອງຊຸດໄອຄອນສຳລັບຈໍສະແດງຜົນໂທລະສັບມືຖື[11]:

ການສະແດງຜົນເທິງໜ້າຈໍ ແລະ ໄອຄອນ ຍັງສາມາດໄດ້ຮັບການປົກປ້ອງຕາມກົດໝາຍວ່າດ້ວຍລິຂະສິດ ຖ້າຫາກໄດ້ຕາມເງື່ອນໄຂຂອງກົດໝາຍຢ່າງຄົບຖ້ວນສຳລັບການປົກປ້ອງດັ່ງກ່າວ, ໂດຍສະເພາະເງື່ອນໄຂກ່ຽວກັບ ຄວາມໃໝ່ທີ່ບໍ່ຊ້ຳໃຜ[12].

1.2.2. ການນຳສະເໜີໃນຜະລິດຕະພັນ

ແບບອຸດສາຫະກຳ ຕ້ອງຖືກທີ່ນຳສະເໜີໃນຜະລິດຕະພັນອຸດສາຫະກຳ ຫຼື ຜະລິດຕະພັນຫັດຖະກຳ. ຈຸດປະສົງທີ່ສຳຄັນທີ່ສຸດຂອງແບບອຸດສາຫະກຳ ແມ່ນເພື່ອໃຫ້ຮູບລັກສະນະເປັນເອກະລັກແກ່ວັດຖຸທີ່ເປັນປະໂຫຍດ ຫຼື ວັດຖຸທີ່ມີໜ້າທີ່ການໃຊ້ງານ. ສິ່ງທີ່ບໍ່ອາດນຳສະເໜີ ຫຼື ຍຶດຕິດຢູ່ວັດຖຸທີ່ສາມາດສ້າງຂຶ້ນ ຫຼື ຜະລິດຂຶ້ນໃນອຸດສາຫະກຳ ຫຼື ຫັດຖະກຳ ຈະບໍ່ສາມາດຈົດທະບຽນເປັນແບບອຸດສາຫະກຳ.

ອາດຈະມີການພິຈາລະນາຫົວຂໍ້ຕໍ່ໄປນີ້ເປັນພິເສດ ເພື່ອຕັດສິນວ່າ ມີຄຸນສົມບັດໃນການເປັນການນຳ

[11] ຮູບເອົາມາຈາກ: http://store.apple.com/us/buy-iphone/iphone6

[12] ການສະແດງຜົນເທິງໜ້າຈໍ ແລະ ໄອຄອນ ອາດຈະບໍ່ໄດ້ຮັບການຈົດທະບຽນແບບອຸດສາຫະກຳໃນບາງປະເທດ ເຊັ່ນ: ຫວຽດນາມ. ຢູ່ ຫວຽດນາມ ແບບອຸດສາ ຫະກຳຕ້ອງເປັນຮູບຊົງຂອງຜະລິດຕະພັນທີ່ສາມາດໝຸນວຽນໃນຕະຫຼາດໄດ້ຢ່າງເປັນເອກະລາດ. ໃນກໍລະນີນີ້ ໄອຄອນກໍບໍ່ສາມາດຂາຍແຍກໂດຍບໍ່ມີໂທລະສັບມືຖື

ສະເໜີ ສຳລັບຜະລິດຕະພັນ ແລະ ສິ່ງຂອງທີ່ເປັນສິນຄ້າທີ່ເປັນປະໂຫຍດໃນທາງການຄ້າ ຫຼືບໍ່:

1.2.2.1. ແນວຄິດ, ຫຼັກການ

ແບບອຸດສາຫະກຳ ຕ້ອງບໍ່ປະກອບດ້ວຍສິ່ງທີ່ເປັນນາມມະທຳ, ສູດຄະນິດສາດ ຫຼື ຄວາມຄິດທີ່ບໍ່ສາມາດນຳສະເໜີໃນແບບທີ່ສັງເກດເຫັນໄດ້ໃນຜະລິດຕະພັນ. ນອກຈາກນັ້ນ, ຊຸດຄຳສັ່ງ ຫຼື ເກມ ເປັນແນວຄິດທີ່ຈັບບາຍບໍ່ໄດ້ ຫຼື ຄວາມຄິດທີ່ບໍ່ສາມາດນຳສະເໜີໃນສິ່ງຂອງທີ່ເປັນສິນຄ້າ ຫຼື ຜະລິດຕະພັນບາງຢ່າງ. ເຖິງຢ່າງໃດກໍຕາມ, ເຄື່ອງໃຊ້ ແລະ ອຸປະກອນເສີມທີ່ສາມາດຈັບບາຍໄດ້ ທີ່ນຳໃຊ້ໃນການຫຼິ້ນເກມ ຫຼື ປະຕິບັດຕາມຄຳແນະນຳ ເປັນຜະລິດຕະພັນ ທີ່ສາມາດນຳສະເໜີແບບອຸດສາຫະກຳ.

1.2.2.2. ວິທີການ, ຂະບວນການ

ໂດຍພື້ນຖານແລ້ວ, ວິທີການກໍ່ສ້າງ[13] ແລະ ຂະບວນການເພື່ອໃຫ້ໄດ້ຜະລິດຕະພັນ, ຜົນໄດ້ຮັບດ້ານເສດຖະກິດ ຫຼື ເຕັກນິກ, ແມ່ນຄວາມຄິດ ແລະ ຄຳສັ່ງທີ່ໃຊ້ສື່ສານກັບມະນຸດ. ສິ່ງດັ່ງກ່າວໃນຕົວມັນເອງບໍ່ສາມາດຈະໃຫ້ຮູບລັກສະນະທີ່ເຫັນໄດ້ແກ່ຜະລິດຕະພັນ ແລະ ດັ່ງນັ້ນ ຈຶ່ງບໍ່ອາດຖືວ່າເປັນແບບອຸດສາຫະກຳໄດ້.

1.2.2.3. ໂປແກຣມຄອມພິວເຕີ ແລະ ແບບຜັງ

ໂປແກຣມຄອມພິວເຕີ ແມ່ນການປະດິດສ້າງ ຊຶ່ງໃນຕົວມັນເອງບໍ່ສາມາດຖືກນຳສະເໜີໄດ້ຢ່າງຊັດເຈນໃນ ສິ່ງຂອງທີ່ເປັນສິນຄ້າທີ່ມີຕົວຕົນ. ກໍລະນີນີ້ ເຖິງວ່າມັນຈະສາມາດໃຊ້ງານໄດ້ຢູ່ໃນອຸປະກອນທີ່ມີຕົວຕົນ (ຄອມພິວເຕີ, ໂທລະສັບ ແລະ ອື່ນໆ) ແລະ ສາມາດບັນທຶກລົງໃນອຸປະກອນສະໜັບສະໜູນ (ຊິບໜ່ວຍຄວາມຈຳ, ແຜ່ນ CD ແລະ ອື່ນໆ). ເນື່ອງຈາກສິ່ງດັ່ງກ່າວບໍ່ສາມາດນຳສະເໜີໄດ້ຢ່າງຊັດເຈນ ຄືກັບໃນຜະລິດຕະພັນອຸດສາຫະກຳ ຈຶ່ງບໍ່ສາມາດຖືວ່າເປັນແບບອຸດສາຫະກຳ.

ໂປແກຣມຄອມພິວເຕີ ແລະ ຊ່ອບແວ ອາດຈະຖືກສ້າງໃຫ້ກາຍມາເປັນສ່ວນໜຶ່ງຂອງຜົນງານດ້ານ

[13] ເບິ່ງການອະທິບາຍຄຳສັບ 'ແບບອຸດສາຫະກຳ' ຢູ່ໃນ BN DA s. 2; MY DA s. 3(1); SG DA s. 2(1)

ວັນນະກຳ ແລະ ຖືກປົກປ້ອງຕາມກົດໝາຍວ່າດ້ວຍລິຂະສິດ.

ແບບຜັງວົງຈອນລວມ ເປັນຫົວຂໍ້ໜຶ່ງຂອງການປົກປ້ອງຊັບສິນທາງປັນຍາທີ່ມີລັກສະນະສະເພາະ. ແບບຜັງ ອາດຈະນຳສະເໜີໃນຜະລິດຕະພັນທີ່ມີຕົວຕົນ, ເປັນຕົ້ນ ວົງຈອນລວມ ຫຼື 'ຊິບ' ເອເລັກໂຕຣນິກ. ເຖິງຢ່າງໃດກໍຕາມ, ແບບຜັງ ບໍ່ສາມາດຮັບຮູ້ດ້ວຍຕາເປົ່າໃນລະຫວ່າງການນຳໃຊ້ວົງຈອນເອເລັກໂຕຣນິກຕາມປົກກະຕິ ແລະ ດັ່ງນັ້ນ ຈຶ່ງບໍ່ເປັນຕາມເງື່ອນໄຂດ້ານຄວາມສາມາດໃນການເບິ່ງເຫັນ.

ຕາມປົກກະຕິແລ້ວ ແບບຜັງວົງຈອນລວມ ໄດ້ຮັບການປົກປ້ອງພາຍໃຕ້ບົດບັນຍັດສະເພາະ ແລະ ບໍ່ຢູ່ໃນກົດໝາຍວ່າດ້ວຍແບບອຸດສາຫະກຳ[14].

1.2.2.4. ແປ້ງ ແລະ ທາດແຫຼວ

ຜະລິດຕະພັນທີ່ປະກອບດ້ວຍສານ ທີ່ເປັນແປ້ງ ຫຼື ທາດແຫຼວ ບໍ່ມີຮູບຊົງທີ່ຊັດເຈນ ຫຼື ເສັ້ນຮອບຂອບທີ່ແນ່ນອນ. ຮູບລັກສະນະຂອງຜະລິດຕະພັນເຫຼົ່ານັ້ນ ໃນພາວະການນຳໃຊ້ປົກກະຕິຈາກຜູ້ບໍລິໂພກສຸດທ້າຍ ບໍ່ສາມາດກຳນົດລ່ວງໜ້າ. ດັ່ງນັ້ນ, ຮູບຊົງຂອງມັນ ຈຶ່ງບໍ່ສາມາດນຳສະເໜີໄດ້ໃນແບບທີ່ແນ່ນອນ. ຜະລິດຕະພັນປະເພດນີ້ ບໍ່ສາມາດນຳສະເໜີແບບອຸດສາຫະກຳໄດ້.

ໃນບາງກໍລະນີ ຍັງສາມາດນຳໄປໃຊ້ກັບຜະລິດຕະພັນໃນຮູບແບບເປັນຄຣີມ ຫຼື ເປັນເມັດ ຖ້າຫາກຮູບຊົງບໍ່ຊັດເຈນ ຫຼື ບໍ່ສະຖຽນ. ຕົວຢ່າງ, ຢູ່ຫວຽດນາມ ແບບຕໍ່ໄປນີ້ ບໍ່ສາມາດຈົດທະບຽນໄດ້[15]:



ຄຳຮ້ອງຂໍຈົດທະບຽນ ເລກທີ: 3-2005-00960 ຊື່: ຢາຖູແຂ້ວ – LCL: 28-03

[14] ເບິ່ງ ສົນທິສັນຍາວ່າດ້ວຍຊັບສິນທາງປັນຍາທີ່ກ່ຽວຂ້ອງກັບວົງຈອນລວມ, 1989 (IPIC Treaty), ແລະ TRIPS ມາດຕາ 35 ເຖິງ 38.

[15] ຕົວຢ່າງແມ່ນໄດ້ຈາກອົງການຄຸ້ມຄອງຊັບສິນອຸດສາຫະກຳຂອງຫວຽດນາມ.

ແບບອຸດສາຫະກຳທີ່ຍື່ນຄຳຮ້ອງຂໍຈົດທະບຽນຖືກປະຕິເສດເນື່ອງຈາກຂາດຄວາມສາມາດໃນການ ປະຍຸກໃຊ້ທາງອຸດສາຫະກຳ. ຄວາມຈິງແລ້ວ ຢາຖູແຂ້ວ ມີຮູບຊົງບໍ່ສະຖຽນ. ຮູບຊົງຂຶ້ນຢູ່ກັບແຮງບີບ ຫຼອດຂອງຜູ້ໃຊ້ ແລະ ຂຶ້ນຢູ່ກັບຕຳແໜ່ງ ແລະ ມຸມຂອງຫຼອດກັບໄມ້ຖູແຂ້ວ. ຮູບຊົງ ຂອງ ຢາຖູແຂ້ວ ອາດຈະບໍ່ເປັນຮູບຫຼອດ ແຕ່ເປັນໄປຕາມການບີດງໍ. ດັ່ງນັ້ນ, ແບບອຸດສາຫະກຳ ນີ້ ບໍ່ສາມາດນຳມາໃຊ້ໃນການຜະລິດສິ່ງຂອງທີ່ເປັນສິນຄ້າ ທີ່ນຳສະເໜີແບບອຸດສາຫະກຳໃນ ຄັ້ງລະເປັນຈຳນວນຫຼາຍ.

ຕົວຢ່າງ ຮູບລັກສະນະຂອງຜະລິດຕະພັນ ໃນຮູບແບບທີ່ເປັນເມັດ ຫຼື ແກ່ນ[16]:

1.2.2.5. ຊິ້ນສ່ວນຂອງຜະລິດຕະພັນ

ແບບອຸດສາຫະກຳ ອາດໃຊ້ສະເພາະກັບບາງຊິ້ນສ່ວນຂອງຜະລິດຕະພັນຈາກຜະລິດຕະພັນທັງໝົດ. ສ່ວນທີ່ນຳສະເໜີແບບອຸດສາຫະກຳ ອາດຈະເປັນຊິ້ນສ່ວນສຳຄັນທີ່ແຍກອອກຈາກສິ່ງຂອງທີ່ເປັນ ສິນຄ້າຂະ ໜາດໃຫຍ່ບໍ່ໄດ້ ຫຼື ອາດຈະເປັນຊິ້ນສ່ວນທີ່ແຍກໄດ້ ຊຶ່ງອາດຈະຖືກແທນທີ່ໄດ້ທີ່ເປັນອາ ໄຫຼ່ ຫຼື ອຸປະກອນເສີມຂອງຜະລິດຕະພັນທີ່ມີຄວາມຊັບຊ້ອນ.

ກົດໝາຍອາດຈະຈຳກັດການປົກປ້ອງແບບອຸດສາຫະກຳທີ່ເປັນຊິ້ນສ່ວນສິ່ງຂອງທີ່ເປັນຜະລິດຕະພັນ ນັ້ນ ສະເພາະກໍລະນີທີ່ສ່ວນດັ່ງກ່າວສາມາດສ້າງຂຶ້ນ ແລະ ຂາຍແຍກກັນໄດ້. ໃນກໍລະນີນີ້, ແບບ ອຸດສາຫະກຳຈະບໍ່ຖືກຍອມຮັບ ຖ້າຫາກຖືກນຳສະເໜີໃນສ່ວນ ຫຼື ຄຸນລັກສະນະທີ່ແຍກອອກຈາກ ຜະລິດຕະພັນຂະໜາດໃຫຍ່ບໍ່ໄດ້ ຫຼື ລວມເປັນໜ່ວຍດຽວກັບຜະລິດຕະພັນຂະໜາດໃຫຍ່[17].

ສຳລັບຂອບເຂດການປົກປ້ອງທາງກົດໝາຍຂອງຊິ້ນສ່ວນ ຫຼື ຄຸນລັກສະນະທີ່ລວມເປັນໜ່ວຍດຽວ ກັນກັບ ຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າຂະໜາດໃຫຍ່ ແລະ ແຍກອອກຈາກຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນ ສິນຄ້າຂະໜາດໃຫຍ່ບໍ່ໄດ້, ສິ່ງທີ່ສັງເກດ ການຮຽກຮ້ອງສິດສະເພາະບາງສ່ວນ ຫຼື ບາງ

---

[16] ຕົວຢ່າງໄດ້ຈາກ ສຳນັກງານຊັບສິນອຸດສາຫະກຳ ປະເທດມາເລເຊຍ. ຮູບໄດ້ມາຈາກ https://www.flickr.com/photos/foto-nn/3695413282

[17] ຕົວຢ່າງ, ເບິ່ງເພີ່ມເຕີມຢູ່ໃນ BN DA s. 2(1) "ສິ່ງຂອງທີ່ເປັນສິນຄ້າ"; MY DA s. 3(1) "ສິ່ງຂອງທີ່ເປັນສິນຄ້າ"; SG DA s. 2(1) "ສິ່ງຂອງທີ່ເປັນສິນຄ້າ" (a) ນອກຈາກນີ້ ອັນນີ້ຍັງເປັນການປະຕິບັດຢູ່ສຳນັກງານສິດທິບັດຂອງໄທ ແລະ ຫວຽດນາມ ຊຶ່ງບໍ່ຈົດທະບຽນແບບອຸດສາຫະກຳສຳລັບສ່ວນ ຫຼື ລັກສະນະທີ່ລວມເປັນ ຜະລິດຕະພັນ. ເຖິງຢ່າງໃດກໍ່ຕາມ ສາມາດຈົດທະບຽນແບບອຸດສາຫະກຳສຳລັບອາໄຫຼ່ທີ່ແຍກອອກຈາກກັນບໍ່ໄດ້

ຄຸນລັກສະນະຂອງຮູບຊົງ ໂດຍລວມທັງໝົດຂອງຜະລິດຕະພັນຂະໜາດໃຫຍ່ກວ່າ ຈະບໍ່ເປັນການ ຕັດສິນລ່ວງໜ້າກ່ຽວກັບຂອບເຂດການປົກປ້ອງແບບອຸດສາຫະກຳສຳລັບຊິ້ນສ່ວນ ຫຼື ຄຸນລັກສະນະທີ່ ຖືກຮຽກຮ້ອງສິດ. ກົດໝາຍພາຍໃນປະເທດອາດຈະຈຳກັດການປົກປ້ອງສຳລັບຊິ້ນສ່ວນ ຫຼື ຄຸນ ລັກສະນະໂດຍໃຫ້ການປົກປ້ອງດັ່ງກ່າວຂຶ້ນກັບຮູບລັກສະນະໂດຍລວມຂອງຜະລິດຕະພັນທີ່ໃຫຍ່ ກວ່າ.

ອົງການກວດສອບ (ຝ່າຍບໍລິຫານ ຫຼື ຕຸລາການ) ອາດຈະໃຊ້ມາດຕະຖານດ້ານ 'ການຮັບຮູ້ໂດຍລວມ ຕໍ່ຜູ້ໃຊ້ທີ່ໄດ້ຮັບຂໍ້ມູນ' ເພື່ອຕັດສິນໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບຄຸນລັກສະນະ ຫຼື ຊິ້ນສ່ວນທີ່ແຍກ ອອກຈາກຜະລິດຕະພັນທີ່ໃຫຍ່ກວ່າບໍ່ໄດ້ ຫຼາຍກວ່າຈະໃຫ້ຄວາມສຳຄັນແກ່ສ່ວນ ຫຼື ຄຸນລັກສະນະທີ່ ຖືກຮຽກຮ້ອງສິດ. ໃນກໍລະນີດັ່ງກ່າວ, ຖ້າຜະລິດຕະພັນທີ່ມີຂໍ້ຂັດແຍ່ງຫາກບໍ່ໄດ້ສ້າງການຮັບຮູ້ ໂດຍລວມໃນແບບດຽວກັນຕໍ່ຜູ້ບໍລິໂພກທົ່ວໄປທີ່ໄດ້ຮັບ ຂໍ້ມູນ, ອົງການທີ່ມີສິດອຳນາດ ອາດຈະ ຕັດສິນວ່າເປັນສິ່ງທີ່ບໍ່ໄດ້ຄາດຄະເນລ່ວງໜ້າ ຫຼື ບໍ່ເປັນການລະເມີດ, ເຖິງວ່າ ຊິ້ນສ່ວນ ຫຼື ຄຸນ ລັກສະນະທີ່ຄ້າຍຄືກັນນັ້ນ ຢູ່ໃນທັງສອງຜະລິດຕະພັນກໍຕາມ.

ວິທີການວ່າດ້ວຍ 'ການຮັບຮູ້ໂດຍລວມ' ຈະຈຳກັດຂອບເຂດການປົກປ້ອງແບບອຸດສາຫະກຳ ໃນ ສ່ວນທີ່ ກ່ຽວຂ້ອງກັບຊິ້ນສ່ວນ ສຳຄັນທີ່ແຍກອອກຈາກຜະລິດຕະພັນຂະໜາດໃຫຍ່ກວ່າບໍ່ໄດ້. ນອກຈາກນັ້ນ ພາຍໃນຂອບ ເຂດທີ່ເໝາະສົມ ຍັງຍອມຮັບວ່າຢູ່ໃນຕະຫຼາດ ຜະລິດຕະພັນ ແລະ ສິ່ງ ຂອງທີ່ເປັນສິນຄ້າຖືກນຳມາໃຊ້ເປັນ ປະໂຫຍດໃນທາງການຄ້າ ໃນຖານະທີ່ເປັນຜະລິດຕະພັນສຳເລັດ ຮູບ ແລະ ແບບລວມ, ບໍ່ແມ່ນໃນຖານະຊິ້ນສ່ວນ ຫຼື ຄຸນລັກສະນະທີ່ເປັນອິສະລະ ທີ່ບໍ່ສາມາດຖືກນຳ ມາໃຊ້ປະໂຫຍດໃນທາງການຄ້າ ຫຼື ຫຼາຍແຍກຈາກຜະລິດຕະພັນ ເຫຼົ່ານັ້ນ. ອົງການທີ່ກວດສອບອາດ ຕັດສິນວ່າ ຮູບລັກສະນະໂດຍລວມຂອງຜະລິດຕະພັນ ແລະ ການຮັບຮູ້ໂດຍລວມ ທີ່ຜະລິດຕະພັນສ້າງ ຂຶ້ນແກ່ຜູ້ບໍລິໂພກທີ່ກ່ຽວຂ້ອງ ຄວນຕັດສິນໃຫ້ຊັດເຈນ ແທນທີ່ຈະພິຈາລະນາວ່າ ເປັນຄວາມຄ້າຍຄື ຂອງສ່ວນ ຫຼື ຄຸນລັກສະນະດຽວທີ່ພິຈາລະນາແຍກກັນ.

ການນຳສະເໜີແບບອຸດສາຫະກຳໃນຄຳຮ້ອງຂໍຈົດທະບຽນ ແລະ ຄຳອະທິບາຍລະອຽດ ຫຼື ໝາຍເຫດ ລະອຽດເພີ່ມເຕີມອື່ນ ຄວນສ້າງຄວາມຊັດເຈນວ່າ ຊິ້ນສ່ວນໃດ ຫຼື ຄຸນລັກສະນະໃດຂອງຜະລິດຕະພັນ ຖືກຮຽກຮ້ອງສິດເປັນແບບອຸດສາຫະກຳ ແລະ ຊິ້ນສ່ວນນັ້ນເປັນຂອງຜະລິດຕະພັນໃດ. ສຳລັບການນຳ ສະເໜີຊິ້ນສ່ວນຜະລິດຕະພັນ ໃຫ້ເບິ່ງເພີ່ມເຕີມ ຢູ່ຂໍ້ 8.6, ຢູ່ຂ້າງລຸ່ມ.

ຕໍ່ໄປນີ້ ເປັນຕົວຢ່າງແບບອຸດສາຫະກຳຊິ້ນສ່ວນຂອງຜະລິດຕະພັນ ('ຄອມພິວເຕີແທັບເບລັດ') ທີ່ມີ ຄວາມສຳຄັນ ແລະ ແຍກອອກຈາກກັນບໍ່ໄດ້. ສ່ວນທີ່ຮຽກຮ້ອງສິດປະກົດເປັນເສັ້ນໜາ ແລະ ສ່ວນທີ່ ບໍ່ໄດ້ຮຽກຮ້ອງສິດ ສະແດງອອກ ເປັນເສັ້ນຈົ້ຳເມັດ[18]:

[18] ຕົວຢ່າງເອົາມາຈາກການຈົດທະບຽນແບບອຸດສາຫະກຳຂອງສາກົນ DM/085175



ຕໍ່ໄປນີ້ ເປັນຕົວຢ່າງແບບອຸດສາຫະກຳທີ່ນຳສະເໜີໃນອາໄຫຼ່ ('ຂອບລໍ້') ສຳລັບລໍ້ລົດໃຫຍ່ທີ່ຈະປະກອບ ເຂົ້າກັນເປັນຜະລິດຕະພັນຂະໜາດໃຫຍ່ຂຶ້ນ ຊຶ່ງຕາມປົກກະຕິ ຈະໃຊ້ງານພ້ອມຜະລິດຕະພັນທີ່ໃຫຍ່ຂຶ້ນ (ລໍ້ ແລະ ລົດໃຫຍ່), ຊຶ່ງຊິ້ນສ່ວນດັ່ງກ່າວ ບໍ່ໄດ້ລວມເປັນໜ່ວຍດຽວກັບຜະລິດຕະພັນຂະໜາດໃຫຍ່ກວ່າ ແລະ ອາດຈະຖືໄດ້ວ່າເປັນຜະລິດຕະພັນທີ່ແຍກກັນໄດ້[19]:



1.2.3. <u>ຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ</u>

1.2.3.1. ການນຳໃຊ້ໃນທາງອຸດສາຫະກຳ

ກົດໝາຍອາດຈະກຳນົດເງື່ອນໄຂຢ່າງຊັດເຈນກ່ຽວກັບຄວາມສາມາດໃນການຈົດທະບຽນແບບອຸດສາຫະກຳວ່າ ແບບອຸດສາຫະກຳຕ້ອງສອດຄ່ອງຕາມເງື່ອນໄຂດ້ານຄວາມສາມາດໃນການນຳໃຊ້

[19] ຕົວຢ່າງ ເອົາມາຈາກການຈົດທະບຽນແບບອຸດສາຫະກຳຂອງສາກົນ DM/084901

ໃນທາງອຸດສາຫະກຳ[20]. ຕ້ອງປະຕິບັດຕາມເງື່ອນໄຂນີ້ ຈົນເຖິງຂັ້ນທີ່ຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າ ທີ່ນຳສະເໜີແບບອຸດສາຫະກຳນີ້ສາມາດຜະລິດໃນທາງອຸດສາຫະກຳ ຫຼື ຫັດຖະກຳໄດ້[21].

ແບບອຸດສາຫະກຳ ທີ່ຖືກນຳສະເໜີໃນຜະລິດຕະພັນທີ່ມີໜ້າທີ່ການໃຊ້ງານ ແລະ ອັດຖະປະໂຫຍດ. ແບບອຸດສາຫະກຳ ໃຫ້ຄຸນຄ່າດ້ານຄວາມສວຍງາມແກ່ຜະລິດຕະພັນ ເພື່ອເຮັດໃຫ້ຜະລິດຕະພັນດັ່ງກ່າວມີຄວາມ ດຶງດູດຫຼາຍຂຶ້ນແກ່ຜູ້ທີ່ຈະຊື້. ແບບອຸດສາຫະກຳນີ້ ຕ້ອງສາມາດໃຊ້ເປັນຕົ້ນແບບ ຫຼື ແມ່ແບບສຳລັບການຜະລິດຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ.

ໃນການຈົດທະບຽນແບບອຸດສາຫະກຳນັ້ນ ຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳ ຄວນສາມາດຜະລິດຊ້ຳໃນປະລິມານຫຼາຍພໍ ໃນແບບທີ່ຜະລິດຕະພັນແຕ່ລະອັນທີ່ຖືກຜະລິດຂຶ້ນມາ ມີຄຸນລັກສະນະຄືກັບ ຕົ້ນແບບ. ຜະລິດຕະພັນ, ສິ່ງຂອງທີ່ເປັນສິນຄ້າ ແລະ ສິ່ງຂອງທີ່ບໍ່ສອດຄ່ອງຕາມເງື່ອນໄຂດ້ານຄວາມສາມາດ ໃນການຜະລິດຊ້ຳນີ້ ຍ້ອນມັນບໍ່ສາມາດຜະລິດໃນທາງອຸດສາຫະກຳ ຫຼື ຫັດຖະກຳ ກໍ່ບໍ່ສາມາດຜະລິດເປັນຜະລິດຕະພັນທີ່ຈົດທະບຽນແບບອຸດສາຫະກຳໄດ້.

ຕົວຢ່າງ ແບບອຸດສາຫະກຳຢູ່ຫວຽດນາມຕໍ່ໄປນີ້ ພົບວ່າ ບໍ່ເປັນໄປຕາມເງື່ອນໄຂດ້ານຄວາມສາມາດ

ໃນການຜະລິດຊ້ຳ[22]:

ຄຳຮ້ອງຂໍຈົດທະບຽນ ເລກທີ: 3-2012-01727 ວັນທີຍື່ນຄຳຮ້ອງ 27/11/2012

[20] ຕົວຢ່າງ BN, DA s. 13.3, r. 5; PH IPC s. 112, r. 1500; SG DA s. 9.3, r. 12; TH DA s. 56; ແລະ VN IPL ມາດຕາ 63.3

[21] ການອະທິບາຍຄຳສັບຕ່າງໆຂອງ 'ແບບອຸດສາຫະກຳ' ມີການອ້າງເຖິງ 'ຜະລິດຕະພັນ' ຈາກ 'ອຸດສາຫະກຳ' ຫຼື 'ຫັດຖະກຳ' ເບິ່ງຢູ່ ຂໍ້ 1.1 ແລະ 1.2 ຂ້າງເທິງ

[22] ຕົວຢ່າງຈາກອົງການຄຸ້ມຄອງຊັບສິນອຸດສາຫະກຳຂອງຫວຽດນາມ

ຊື່: ແຜງຫີນ LCL: 25-01

ແບບອຸດສາຫະກຳທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ ຖືກປະຕິເສດເນື່ອງຈາກຂາດຄວາມສາມາດ ໃນການປະຍຸກໃຊ້ໃນທາງອຸດສາຫະກຳ. ແບບອຸດສາຫະກຳນີ້ສ້າງຂຶ້ນຈາກການເອົາກ້ອນ ຫີນທຳມະຊາດຫຼາຍໆກ້ອນ ມາລວມກັນເປັນຮູບຊົງ, ຂະໜາດ, ລວດລາຍ ແລະ ສີສັນ. ບັນດາກ້ອນຫີນເຫຼົ່ານີ້ຖືກຈັດວາງໂດຍບໍ່ມີແບບແຜນ ຈົນກາຍເປັນແຜ່ນຈະຕຸລັດ. ດັ່ງນັ້ນ, ຈະບໍ່ມີແຜ່ນຫີນສອງແຜ່ນທີ່ມີຮູບຊົງ ແລະ ລວດລາຍດຽວກັນ ແລະ ໃຫ້ຄວາມຮູ້ສຶກສວຍງາມ ໃນແບບດຽວກັນ. ດັ່ງນັ້ນ, ແບບອຸດສາຫະກຳນີ້ ຈຶ່ງບໍ່ສາມາດນຳໃຊ້ໃນການຜະລິດສິ່ງຂອງທີ່ເປັນສິນຄ້າທີ່ສະເໜີແບບອຸດສາຫະກຳໃນແຕ່ລະຄັ້ງເປັນຈຳນວນຫຼາຍໄດ້.

1.2.3.2. ຜະລິດຕະພັນທີ່ເປັນສິ່ງທີ່ມີຊີວິດ ແລະ ຜະລິດຕະພັນຈາກທຳມະຊາດ

ຜະລິດຕະພັນທີ່ເປັນສິ່ງທີ່ມີຊີວິດ ແລະ ຈຸລິນຊີ ບໍ່ຖືວ່າເປັນຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ ແລະ ຮູບຊົງຂອງພວກມັນບໍ່ສາມາດຂໍຈົດທະບຽນເປັນແບບອຸດສາຫະກຳສຳລັບຜະລິດຕະພັນໄດ້ ຍ້ອນມີບັນຫາຢູ່ສອງ ຢ່າງເກີດຂຶ້ນພ້ອມໆກັນ ເຊັ່ນ: ຄວາມສະໝ່ຳສະເໝີຂອງຮູບລັກສະນະ ແລະ ລັກສະນະຂອງຜະລິດຕະພັນ.

ຜະລິດຕະພັນຈາກທຳມະຊາດ ແລະ ຜະລິດຕະພັນກະສິກຳ ທີ່ມະນຸດຜະລິດຂຶ້ນ ຕະຫຼອດຮອດ ຜະລິດຕະພັນຈາກທຳມະຊາດ ທີ່ພົບເຫັນໃນທຳມະຊາດ ບໍ່ມີຮູບຊົງທີ່ສາມາດຄາດຄະເນໄດ້ວ່າຈະຄືກັນ ຕະຫຼອດ ໃນແຕ່ລະຜະລິດຕະພັນ. ຮູບລັກສະນະຂອງຜະລິດຕະພັນ ອາດຈະບໍ່ຄືກັນກັບແບບອຸດສາຫະກຳທີ່ໄດ້ກຳນົດໄວ້ ກ່ອນໜ້ານັ້ນ.

ບັນຫາທີສອງກໍ່ຄື ລັກສະນະຂອງການຜະລິດຜະລິດຕະພັນຈາກທຳມະຊາດ ບໍ່ແມ່ນແບບອຸດສາຫະກຳ ຫຼື ຫັດຖະກຳ. ເຖິງວ່າຜະລິດຕະພັນຈາກທຳມະຊາດ ແລະ ກະສິກຳບາງຢ່າງ ອາດຈະຜະລິດໄດ້ໃນປະລິມານຫຼາຍ ໃນຄັ້ງດຽວກັນ ໂດຍນຳໃຊ້ຂະບວນການທີ່ຄ້າຍຄືກັນກັບການຜະລິດທາງອຸດສາຫະກຳ ກໍ່ຕາມ, ແຕ່ການຜະລິດຜະລິດຕະພັນດັ່ງກ່າວ ບໍ່ຖືວ່າເປັນການຜະລິດທາງ 'ອຸດສາຫະກຳ'. ດັ່ງນັ້ນ, ໝາກໄມ້ຈາກທຳມະຊາດ, ດອກໄມ້ ຫຼື ສັດ ແມ່ນບໍ່ສາມາດຖືວ່າເປັນຜະລິດຕະພັນອຸດສາຫະກຳ ທີ່ຈະອາດຈະລະບຸໄດ້ວ່າເປັນຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳ[23].

[23] ຮູບມາຈາກ http://en.wikipedia.org/wiki/Apple ແລະ http://pixgood.com/wheat-germ.html ຕາມລຳດັບ ເບິ່ງເພີ່ມເຕີມຢູ່ ຄູ່ມືແນະນຳຂອງສຳນັກງານ ຊັບສິນທາງປັນຍາຂອງສະຫະພາບເອີລົບ (EUIPO) (ການຖອນ), ວັກ 5.1.1

ເຖິງຢ່າງໃດກໍຕາມ, ຮູບລັກສະນະ ແລະ ຮູບຊົງຂອງໝາກໄມ້, ດອກໄມ້, ສັດ ແລະ ສິ່ງທີ່ມີຊີວິດອື່ນ ຈາກທຳມະຊາດອາດຈະເປັນແຮງບັນດານໃຈໃຫ້ແກ່ການອອກແບບອຸດສາຫະກຳສຳລັບຜະລິດຕະພັນ ອື່ນ, ເປັນຕົ້ນ ໝາກໄມ້ປະດິດ, ສິ່ງຕົບແຕ່ງ ແລະ ລວດລາຍພື້ນຜະລິດຕະພັນຕ່ຳແຜ່ນ, ຜະລິດຕະພັນ ທີ່ມີການພິມ ແລະ ສິ່ງຂອງທີ່ເປັນສິນຄ້າອື່ນທີ່ເປັນ ສອງ ຫຼື ສາມມິຕິ.

ຕົວຢ່າງ, ແບບອຸດສາຫະກຳທີ່ຈົດທະບຽນໄດ້ຕໍ່ໄປນີ້ ນຳສະເໜີວັດຖຸທີ່ມີຮູບຊົງໝາກໄມ້ ແລະ ສັດ[24]

[24] ຮູບມາຈາກ http://www.garrettspecialties.com/trade-show- items-useful-giveaways-c-71_.160html ແລະ http://www.amazon.ca/Piggy-Shape- Money-box-Storage-Decorated/dp/B008297LQM ຕາມລຳດັບ

1.2.3.3. ຜົນງານສິລະປະ

ຜະລິດຕະພັນ ທີ່ຜະລິດເປັນງານສ້າງສັນທີ່ບໍ່ຄືໃຜ ຫຼື ທີ່ຫຼໍ່ເທິງພື້ນ ເຊັ່ນ: ຜ້າໄບ, ຫີນອ່ອນ, ດິນໜຽວ ຫຼື ໂລຫະ ແລະ ຄິດອອກມາເປັນຜົນງານສິລະປະສະເພາະຕົວ ຈະບໍ່ຖືວ່າເປັນແບບອຸດສາຫະກຳ. ສຳລັບ ຈຸດປະສົງ ດັ່ງກ່າວນີ້, ມັນບໍ່ສຳຄັນວ່າຜົນງານດັ່ງກ່າວຈະຖືກຜະລິດຊ້ຳເປັນຫຼາຍໆອັນໂດຍການພິມ ຫີນ, ການພິມ ຫຼື ຮູບຈຳ ລອງຂະໜາດນ້ອຍ ໄດ້ຫຼືບໍ່.

ຕົວຢ່າງຕໍ່ໄປນີ້ ສະແດງໃຫ້ເຫັນຜົນງານທີ່ຜົນງານສິລະປະ ແລະ ບໍ່ເປັນຜະລິດຕະພັນທີ່ເປັນອັດຖະ ປະໂຫຍດ ທີ່ນຳສະເໜີຢູ່ໃນແບບອຸດສາຫະກຳ[25]:

ເຖິງຢ່າງໃດກໍຕາມ, ຜົນງານດ້ານສິລະປະອາດຈະເປັນຖານໃນແບບອຸດສາຫະກຳທາງອຸດສາຫະກຳ ແລະ ໃນຫຼາຍໆຄັ້ງ ກໍເປັນແບບນັ້ນ. ຕົວຢ່າງ ຜະລິດຕະພັນອັດຖະປະໂຫຍດ ເຊັ່ນ: ສິນຄ້າປະເພດ ແຜ່ນແພ, ສິ່ງທັບເຈ້ຍ ຫຼື ເຄື່ອງທີ່ລະນຶກ ອາດຈະມີຜົນງານດ້ານສິລະປະ ທີ່ພິມຢູ່ເທິງຜະລິດຕະພັນ ເປັນແບບອຸດສາຫະກຳ ຫຼື ມີແບບອຸດສາຫະກຳ ທີ່ມີການກຳນົດຮູບຊົງ, ຫຼໍ່ ຫຼື ສ້າງແບບຮູບເທິງ ຜົນງານດ້ານສິລະປະ.

ເນື້ອຫາສາລະສຳຄັນຂອງແບບອຸດສາຫະກຳ ແມ່ນການຕົບແຕ່ງວັດຖຸທີ່ເປັນສິນຄ້າອັດຖະປະໂຫຍດ ແລະ ຜະລິດຕະພັນທາງອຸດສາຫະກຳ. ການມີສ່ວນຮ່ວມຂອງນັກອອກແບບ ຈະເຮັດໃຫ້ຮູບລັກສະນະ ຂອງວັດຖຸທີ່ເປັນສິນຄ້າອັດຖະປະໂຫຍດໃຊ້ສອຍມີຄວາມໜ້າເພິ່ງພໍໃຈດ້ານຄວາມສວຍງາມ ແລະ

[25] ຮູບມາຈາກ http://www.diytrade.com/china/pd/3832187/stainless_steel_shinning_sculpture_with_artistic_design.html ແລະ http://www.figurativeartist.org/andrew-benyei-figurative-sculpture/ ຕາມລຳດັບ

ຄວນຖືເປັນຂໍ້ມູນດ້ານສິລະປະ. ຍ້ອນຄຸນລັກສະນະດ້ານສິລະປະຂອງມັນ ຈຶ່ງຖືວ່າແບບອຸດສາຫະກຳ ຖືກຮັບຮູ້ເປັນຜົນງານດ້ານສິລະປະປັບໃຊ້ ແລະ ໄດ້ຮັບການປົກປ້ອງຕາມກົດໝາຍວ່າດ້ວຍລິຂະສິດ[26].

[26] ຕົວຢ່າງ ເບິ່ງບົດບັນຍັດກ່ຽວກັບ 'ຜົນງານດ້ານສິລະປະປະຍຸກ' ຢູ່ໃນກົດໝາຍວ່າດ້ວຍລິຂະສິດຂອງ BN, s. 2 ແລະ 6; KH ມາດຕາ 7(h); ID ມາດຕາ 12(1)(f); LA ມາດຕາ 92.1.1.9; MY, s. 3, 7(1)(c), 7(5); PH, s. 171.10; SG DA s. 2(1); TH s. 4; VN IPL ມາດຕາ 14.g

2. ຄວາມໃໝ່

ແບບອຸດສາຫະກຳ ບໍ່ສາມາດຈົດທະບຽນຢ່າງຖືກຕ້ອງໄດ້ ຖ້າຫາກຂາດຄວາມໃໝ່. ຄວາມໃໝ່ກໍຕ້ອງສົມບູນໃນລະດັບສາກົນ ເພື່ອໃຫ້ຈົດທະບຽນແບບອຸດສາຫະກຳໄດ້ ຫຼື ຍັງຢູ່ໃນທະບຽນຕໍ່ໄປ[27].

ໂດຍຂຶ້ນກັບບົດບັນຍັດຂອງກົດໝາຍທີ່ມີຜົນບັງຄັບໃຊ້ ຄວາມໃໝ່ ອາດຈະຖືກກວດສອບໂດຍອົງການຄຸ້ມຄອງຊັບສິນອຸດສາຫະກຳ ກ່ອນໜ້າການຈົດທະບຽນ ບໍ່ວ່າຈະເປັນການປະຕິບັດໂດຍໜ້າທີ່ ຫຼື ພາຍຫຼັງການຂັດຄ້ານ ດ້ວຍເຫດຜົນການຂາດຄວາມໃໝ່. ຄວາມໃໝ່ ຍັງອາດຈະຖືກກວດສອບຢູ່ໃນຂະບວນການຖອນ, ການຍົກ ເລີກ ຫຼື ການລົບລ້າງ ຕໍ່ໜ້າອົງການຄຸ້ມຄອງຊັບສິນອຸດສາຫະກຳ ຫຼື ອົງການຕຸລາການ (ສານ). ບໍ່ວ່າຈະຢູ່ ບາດກ້າວໃນຂັ້ນຕອນການກວດສອບຄວາມໃໝ່ ຫຼືບໍ່ກໍ່ຕາມ ເງື່ອນໄຂດ້ານເນື້ອໃນຂອງຄວາມໃໝ່ຍັງຄົງມີຄວາມ ສຳຄັນຄືກັນ[28].

2.1 ການອະທິບາຍກ່ຽວກັບຄວາມໃໝ່

ຄວາມໃໝ່ຂອງແບບອຸດສາຫະກຳ ຖືກກຳນົດໂດຍການອ້າງອີງໃສ່ທຸກຢ່າງທີ່ຖືກເຜີຍແຜ່ຕໍ່ສາທາລະນະຊົນ ກ່ອນໜ້າວັນທີ ທີ່ກ່ຽວຂ້ອງກັບແບບອຸດສາຫະກຳດັ່ງກ່າວ.

ໃນກໍລະນີດັ່ງກ່າວ, ແບບອຸດສາຫະກຳ ຈະເປັນໄປຕາມເງື່ອນໄຂຂອງຄວາມໃໝ່ໄດ້ກໍຕໍ່ເມື່ອ ແບບອຸດສາຫະກຳນີ້ບໍ່ຄືກັນ ຫຼື ບໍ່ຄືກັນຫຼາຍກັບແບບກ່ອນໜ້ານັ້ນ ທີ່ຖືກເປີດເຜີຍຕໍ່ສາທາລະນະຊົນທີ່

[27] ເບິ່ງເພີ່ມເຕີມຢູ່ໃນ BN DA, s. 9; KH DL, ມາດຕາ 91; ID DL ມາດຕາ 2; LA IPL ມາດຕາ 15.1; MY DA, s. 12 (1), (2)(a); PH IP Code, s. 23, 24,113.1, IP Rules r. 1502; SG DA s. 5; TH DA s. 56, 57; VN IPL ມາດຕາ 63.1, 65.1 ເບິ່ງເພີ່ມເຕີມຢູ່ ຄູ່ມືແນະນຳຂອງສຳນັກງານ ຊັບສິນທາງປັນຍາຂອງສະຫະພາບເອີລົບ (EUIPO) (ການຖອນ) ຕອນ 5.5

[28] ກົດໝາຍຈຳນວນໜຶ່ງຂອງບັນດາປະເທດສະມາຊິກ ASEAN ກຳນົດເງື່ອນໄຂວ່າ ແບບອຸດສາຫະກຳ ຕ້ອງສອດຄ່ອງຕາມຈຸດປະສົງການຈົດທະບຽນ, ນອກຈາກນັ້ນ ຫຼື ອີກຢ່າງໜຶ່ງ ເງື່ອນໄຂຂອງຄວາມໃໝ່. ເງື່ອນໄຂດັ່ງກ່າວ, ຊຶ່ງລວມເອົາ "ຄວາມໃໝ່ທີ່ບໍ່ຊ້ຳໃຜ" ຫຼື "ຄວາມຄິດສ້າງສັນ" ແບບອຸດສາຫະກຳ ແມ່ນບໍ່ຖືກກຳນົດຢູ່ໃນຄູ່ມືເຫຼັ້ມນີ້.

ກ່ຽວຂ້ອງ ກ່ອນວັນຍື່ນຄຳຮ້ອງ.

2.1.1 ສາທາລະນະຊົນທີ່ເປັນກຸ່ມອ້າງອີງ

ສາທາລະນະຊົນທີ່ເປັນກຸ່ມອ້າງອີງໃນການຕັດສິນວ່າ ແບບອຸດສາຫະກຳນັ້ນຖືກເຜີຍແຜ່ມາກ່ອນຫຼືບໍ່ ບໍ່ພຽງແຕ່ສາທາລະນະຊົນ ຫຼື ຜູ້ບໍລິໂພກທົ່ວໄປເທົ່ານັ້ນ ແຕ່ສຳຄັນກວ່ານັ້ນກໍ່ຄື ກຸ່ມຜູ້ບໍລິໂພກທີ່ໄດ້ຮັບຂໍ້ມູນ ຊຶ່ງມັກ ຈະຊື້ ຫຼື ຊົມໃຊ້ຜະລິດຕະພັນທີ່ສະເໜີແບບອຸດສາຫະກຳດັ່ງກ່າວ. ຜູ້ບໍລິໂພກທີ່ໄດ້ຮັບຂໍ້ມູນກຸ່ມນີ້ ມັກຈະຮັບຮູ້ ຫຼາຍກວ່າກ່ຽວກັບການມີຢູ່ຂອງແບບອຸດສາຫະກຳຂອງບາງຜະລິດຕະພັນ ຫຼາຍກວ່າສາທາລະນະຊົນທົ່ວໄປ ຊຶ່ງ ຕາມປົກກະຕິແມ່ນບໍ່ມີຄວາມສຳຄັນຕໍ່ບັນດາຜະລິດຕະພັນເຫຼົ່ານີ້.

ນອກຈາກສາທາລະນະຊົນທີ່ເປັນກຸ່ມອ້າງອີງແລ້ວ ຍັງຄວນລວມເອົາຄົນໃນວົງການທາງການຄ້າ, ອຸດສາ ຫະກຳ ແລະ ທຸລະກິດ ຊຶ່ງຕາມປົກກະຕິມີການກ່ຽວຂ້ອງກັບການຜະລິດ, ການນຳເຂົ້າ, ການຈຳໜ່າຍ ຫຼື ການຕະ ຫຼາດຂອງຜະລິດຕະພັນທີ່ນຳສະເໜີໃນແບບອຸດສາຫະກຳ. ຜູ້ຄົນເຫຼົ່ານີ້ມີການຕິດຕໍ່ພົວພັນໃກ້ຊິດຫຼາຍກວ່າ ກັບແຫຼ່ງຂໍ້ມູນທີ່ມີການເປີດເຜີຍແບບອຸດສາຫະກຳ ແລະ ເຂົ້າເຖິງແຫຼ່ງຂໍ້ມູນດັ່ງກ່າວໄດ້ງ່າຍກວ່າ. ເວົ້າສະເພາະ, ຄົນກຸ່ມນີ້ຮູ້ແຫຼ່ງການສະໜອງ, ກາຕາລ້ອກ ແລະ ຖານຂໍ້ມູນຜະລິດຕະພັນປະເພດຕ່າງໆ ແລະ ເຂົ້າເຖິງຜູ້ສະໜອງ, ບຸກຄົນຕິດຕໍ່, ງານວາງສະແດງສິນຄ້າ ແລະ ແຫຼ່ງອື່ນໆທີ່ເຮັດໃຫ້ພວກເຂົາໄດ້ຮັບຂໍ້ມູນຫຼ້າສຸດໃນຂົງເຂດທີ່ກ່ຽວຂ້ອງ ຢ່າງມີອະພິສິດ.

ການທີ່ສາທາລະນະຊົນທົ່ວໄປ ສາມາດເຂົ້າເຖິງແຫຼ່ງທີ່ມີການເປີດເຜີຍຂໍ້ມູນແບບອຸດສາຫະກຳ ບໍ່ຈຳເປັນ ວ່າຈະເຮັດໃຫ້ແບບອຸດສາຫະກຳຂາດຄວາມໃໝ່ສະເໜີໄປ. ຖ້າຫາກຜູ້ບໍລິໂພກທີ່ໄດ້ຮັບຂໍ້ມູນ ຫຼື ວົງການທຸລະກິດ ເຄີຍ ຫຼື ໜ້າຈະເຄີຍເຂົ້າເຖິງແຫຼ່ງທີ່ມີການເປີດເຜີຍຂໍ້ມູນກ່ອນວັນທີກ່ຽວຂ້ອງ ຈະຖືວ່າບໍ່ມີຄວາມໃໝ່ຕາມທີ່ ກຳນົດໄວ້.

ແບບອຸດສາຫະກຳ ບໍ່ຄວນຖືວ່າຖືກເປີດເຜີຍຕໍ່ສາທາລະນະຊົນ ຍ້ອນຖືກເປີດເຜີຍຕໍ່ບຸກຄົນ ທີ່ຜູກພັນໃນຂໍ້ຕົກລົງການຮັກສາຄວາມລັບ ຫຼື ໂດຍຂໍ້ຜູກພັນທາງສັນຍາທີ່ກຳນົດວ່າຫ້າມບໍ່ໃຫ້ບຸກຄົນເຫຼົ່ານັ້ນເປີດເຜີຍ ຫຼື ສື່ສານແບບດັ່ງກ່າວ. ນອກຈາກນັ້ນ, ການເປີດເຜີຍແບບອຸດສາຫະກຳພາຍໃນກຸ່ມຄົນທີ່ຈຳກັດຄຸນລັກສະນະ ທີ່ສາທາລະນະຊົນ ຫຼື ວົງການທາງການຄ້າສະເພາະດ້ານບໍ່ສາມາດເຂົ້າເຖິງຂໍ້ມູນໄດ້ຕາມປົກກະຕິ ຫຼື ຢ່າງທີ່ຄວນເປັນ ກໍບໍ່ໃຫ້ຖືວ່າເປັນການເປີດເຜີຍທີ່ກ່ຽວຂ້ອງກັບຄວາມໃໝ່.

2.1.2 ວັນທີກ່ຽວຂ້ອງກັບຄວາມໃໝ່

ໂດຍທົ່ວໄປ ວັນທີກ່ຽວຂ້ອງໃນການກຳນົດຄວາມໃໝ່ ຈະເປັນວັນທີຍື່ນຄຳຮ້ອງຂໍຈົດທະບຽນແບບ

ອຸດສາ ຫະກຳຕາມປົກກະຕິຕໍ່ອົງການຄຸ້ມຄອງຊັບສິນອຸດສາຫະກຳ. ຄຳຮ້ອງຂໍຈົດທະບຽນແບບ ປົກກະຕິ ແມ່ນຄຳຮ້ອງ ທີ່ມີເງື່ອນໄຂຄົບຖ້ວນໃນການໄດ້ຮັບວັນທີຍື່ນຄຳຮ້ອງ.

2.1.2.1 ວັນບຸລິມະສິດ

ຖ້າຜູ້ຍື່ນຄຳຮ້ອງຫາກຮຽກຮ້ອງສິດຕໍ່ບຸລິມະສິດຕາມສົນທິສັນຍາປາຣິ, ວັນທີກ່ຽວຂ້ອງຈະເປັນວັນທີ ທີ່ມີການ ຍື່ນຄຳຮ້ອງຂໍຈົດທະບຽນທີ່ຍື່ນກ່ອນໝູ່ໝົດທີ່ອ້າງເຖິງ. ໄລຍະເວລາບຸລິມະສິດສຳລັບແບບ ອຸດສາຫະກຳ ແມ່ນຫົກເດືອນ. ໝາຍຄວາມວ່າ, ເພື່ອເຮັດໃຫ້ຄຳຮ້ອງທີ່ຍື່ນກ່ອນມີຜົນບັງຄັບໃຊ້ ຕ້ອງ ຍື່ນຄຳຮ້ອງຂໍຈົດທະບຽນຕໍ່ຫ້ອງການຈົດທະບຽນ ຊ້າສຸດບໍ່ໃຫ້ກາຍຫົກເດືອນ ຫຼັງຈາກວັນຍື່ນຄຳຮ້ອງ ຂໍບຸລິມະສິດເປັນຕົ້ນໄປ. ຖ້າຜູ້ຍື່ນຄຳຮ້ອງຂໍຈົດທະບຽນຫາກອ້າງບຸລິມະສິດຂອງຄຳຮ້ອງທີ່ຍື່ນກ່ອນ ສອງ ຫຼື ຫຼາຍສະບັບ ໃຫ້ຖືເອົາວັນທີຍື່ນຄຳຮ້ອງ ສະບັບທີ່ຍື່ນກ່ອນໝູ່.

ອີງຕາມຫຼັກການກ່ຽວກັບສິດຕໍ່ບຸລິມະສິດດັ່ງທີ່ໄດ້ກຳນົດໄວ້ໃນສົນທິສັນຍາປາລີ, ການຍື່ນຄຳຮ້ອງຂໍ ຈົດ ທະບຽນຕາມປົກກະຕິຢູ່ປະເທດທີ່ມີພົວພັນກັບສົນທິສັນຍາ ຄວນຖືວ່າເປັນວັນທີກ່ຽວຂ້ອງໃນ ການຕັດສິນໃຈ ກ່ຽວກັບຄວາມໃໝ່ ໃນກໍລະນີຫາກມີຄຳຮ້ອງຂໍ, ຂໍ້ມູນທີ່ຖືກເປີດເຜີຍ ຫຼື ການດຳ ເນີນການອື່ນທີ່ກ່ຽວຂ້ອງກັບແບບອຸດສາຫະກຳ. ຂໍ້ 4.B ຂອງສົນທິສັນຍາປາລີ ກຳນົດ ດັ່ງນີ້:

> "B. ດັ່ງນັ້ນ, ການຍື່ນຄຳຮ້ອງຂໍຈົດທະບຽນຕາມພາຍຫຼັງຢູ່ປະເທດອື່ນໃນ
>
> ສະຫະພາບເອີລົບ ກ່ອນໝົດ ອາຍຸທີ່ໄດ້ກ່າວມາຂ້າງເທິງ ຕ້ອງບໍ່ຖືວ່າລົບລ້າງ ຍ້ອນເຫດຜົນ ທີ່ວ່າ ການດຳເນີນການໃດກໍຕາມທີ່ມີ ຂຶ້ນຢູ່ໃນຊ່ວງໄລຍະນັ້ນ, ໂດຍສະເພາະ ການຍື່ນຄຳ ຮ້ອງຂໍຈົດທະບຽນອີກສະບັບໜຶ່ງ, ການເຜີຍແຜ່ ຫຼື ການໃຊ້ປະ�โຫຍດຈາກສິ່ງປະດິດ, ການ ສະເໜີຂາຍແບບ ຫຼື ການນຳໃຊ້ເຄື່ອງໝາຍ ແລະ ການກະທຳ ດັ່ງກ່າວ ບໍ່ອາດກໍ່ໃຫ້ເກີດ ສິດຂອງບຸກຄົນທີສາມ ຫຼື ສິດໃດກໍຕາມ ທີ່ຢູ່ໃນການຄອບຄອງຂອງສ່ວນ ບຸກຄົນ."

ສິດໃນການຮຽກຮ້ອງບຸລິມະສິດ ອາດຈະມີຜົນພຽງແຕ່ໃນກໍລະນີທີ່ມີການຮຽກຮ້ອງກ່ຽວກັບແບບ ອຸດ ສາຫະກຳທີ່ຄືກັນທັງຄຳຮ້ອງທີ່ໄດ້ຮັບບຸລິມະສິດ ແລະ ຄຳຮ້ອງຂໍຈົດທະບຽນທີ່ໄດ້ຍື່ນຕໍ່ຫ້ອງການ ຈົດທະບຽນ.ຖ້າຫາກແບບອຸດສາຫະກຳທີ່ຢູ່ໃນຄຳຮ້ອງຂໍຈົດທະບຽນ ທີ່ກຳລັງຖືກພິຈາລະນາຢູ່ ຫາກນຳສະເໜີຄວາມປ່ຽນແປງ ຫຼື ຄວາມແຕກຕ່າງທີ່ສັງເກດເຫັນໄດ້ ສິດຕໍ່ບຸລິມະສິດຈະບໍ່ມີຜົນ.

ໃນກໍລະນີທີ່ແບບຢູ່ໃນຄຳຮ້ອງຂໍຈົດທະບຽນຫາກມາຈາກການຍື່ນຄຳຮ້ອງຂໍຈົດທະບຽນທີ່ມີວັນບຸລິ ມະ ສິດ ຜູ້ຍື່ນຄຳຮ້ອງຂໍຈົດທະບຽນສາມາດອ້າງສິ່ງທີ່ມີມາກ່ອນຫຼາຍທຍ່າງ ຕະຫຼອດຮອດ ສິ່ງທີ່ມີມາ

ກ່ອນບາງສ່ວນ ທີ່ໄດ້ຮັບອະນຸຍາດຕາມສົນທິສັນຍາປາລີ[29].

2.1.2.2 ໄລຍະຜ່ອນຜັນ

ໃນກໍລະນີທີ່ກົດໝາຍທີ່ມີຜົນບັງຄັບໃຊ້ ຫາກກຳນົດໄລຍະຜ່ອນຜັນ ຫຼື ໄລຍະທີ່ພົ້ນຈາກ ພາລະຄວາມ ຮັບ ຜິດຊອບເພື່ອຜົນປະ�โຫຍດຂອງນັກອອກແບບ ຫຼື ຜູ້ສືບທອດສິດ ຊຶ່ງນັ້ນຖືກວ່າເປັນການ ເປີດເຜີຍແບບອຸດສາຫະກຳ ກ່ອນການຍື່ນຄຳຮ້ອງຂໍຈົດທະບຽນ ຊຶ່ງການເປີດເຜີຍດັ່ງກ່າວອາດຈະ ກ່ຽວຂ້ອງກັບກຳນົດວ່າ ມີການປະຕິບັດ ຕາມເງື່ອນໄຂຄວາມໃໝ່ນັ້ນຫຼືບໍ່[30].

ເງື່ອນໄຂກ່ຽວກັບຄວາມໃໝ່ໂດຍສົມບູນ ແມ່ນຂ້ອນຂ້າງເຂັ້ມງວດ. ດັ່ງນັ້ນ, ທຸກການເປີດເຜີຍແບບ ອຸດສາຫະກຳ ກ່ອນໜ້າການຍື່ນຄຳຮ້ອງທີ່ກ່ຽວຂ້ອງ ຫຼື ວັນບຸລິມະສິດ ອາດຈະທຳລາຍຄວາມໃໝ່ ຕາມທີ່ກຳນົດ. ການເປີດເຜີຍຂໍ້ມູນທີ່ອາດຈະສົ່ງຜົນຕໍ່ຄວາມໃໝ່ຂອງແບບອຸດສາຫະກຳ ປະກອບ ດ້ວຍ ການເປີດເຜີຍທີ່ມາຈາກ ການກະທຳຂອງຜູ້ອອກແບບເອງ ຫຼື ຜູ້ສືບທອດຕຳແໜ່ງ ຫຼື ມາຈາກ ການກະທຳຂອງບຸກຄົນທີ່ໄດ້ຮັບແບບນີ້ທາງກົງ ຫຼື ທາງອ້ອມຈາກຜູ້ອອກແບບ ຢ່າງຖືກຕ້ອງຕາມກົດ ໝາຍ ຫຼື ຢ່າງຜິດກົດໝາຍ.

ບັນດາກົດໝາຍທີ່ກຳນົດໄລຍະຜ່ອນຜັນ ຊຶ່ງອະນຸຍາດໃຫ້ມີໄລຍະຜ່ອນຜັນ ເພື່ອປະ�โຫຍດຂອງຜູ້ ອອກແບບ ມີຈຸດປະສົງປ້ອງກັນການເສຍສິດໃນກໍລະນີທີ່ມີການເປີດເຜີຍແບບມາກ່ອນ ຫຼື ການ ເປີດເຜີຍແບບສະໝັກ ໃຈ. ນອກຈາກນັ້ນ ຍັງຄຳນຶງເຖິງກໍລະນີທີ່ ໃນຫຼາຍໆຄັ້ງ ການເປີດເຜີຍດັ່ງກ່າວ ມີຄວາມຈຳເປັນໃນການທົດສອບແບບອຸດສາຫະກຳຂອງຜະລິດຕະພັນໃນຕະຫຼາດໃນການກະກຽມ ການອອກໃບອະນຸຍາດ ຫຼື ສັນຍາການຈຳໜ່າຍ ຫຼື ນຳສະເໜີແບບອຸດສາຫະກຳໃນງານວາງສະແດງທີ່ ເປັນທາງການ.

ໄລຍະຜ່ອນຜັນ ຖືກກຳນົດຢູ່ໃນກົດໝາຍ ເປັນຊ່ວງໄລຍະເວລາຫຼັງຈາກແບບອຸດສາຫະກຳຖືກ ເປີດເຜີຍ ຊຶ່ງເປັນຊ່ວງທີ່ນັກອອກແບບ (ຫຼື ຜູ້ສືບທອດຕຳແໜ່ງ) ອາດຈະຍື່ນຄຳຮ້ອງຂໍຈົດທະບຽນ ແບບອຸດສາຫະກຳ ໂດຍການເປີດເຜີຍດັ່ງກ່າວບໍ່ສົ່ງຜົນເສຍຫາຍຕໍ່ຄວາມໃໝ່ຕາມທີ່ກຳນົດ. ໃນ ກໍລະນີດັ່ງກ່າວ, ການເປີດເຜີຍແບບອຸດສາ ຫະກຳພາຍໃຕ້ສະຖານະການທີ່ກຳນົດ ຈະບໍ່ຖືກນຳມາ ພິຈາລະນາ ເພື່ອຈຸດປະສົງໃນການກຳນົດຄວາມໃໝ່ຂອງແບບອຸດສາຫະກຳ.

---

[29] ເບິ່ງເພີ່ມເຕີມຢູ່ ສົນທິສັນຍາປາລີ, ມາດຕາ 4.f

[30] ເບິ່ງເພີ່ມເຕີມຢູ່ບົດບັນຍັດຢູ່ໃນ BN DA s. 12, 13; KH ມາດຕາ 92; ID DL ມາດຕາ 3; LA IPL ມາດຕາ 30; MY DA, s. 12 (3); PH IP Code, s. 25, IP Rules r. 1503, 1601; SG DA s. 8, 9, 10; TH DA s. 6, 19, 57; ແລະ VN IPL ມາດຕາ 65.4. ເບິ່ງເພີ່ມເຕີມຢູ່ໃນຄູ່ມື EUIPO (ການຖອນ), ວັກ 5.5.1.9.

ຕາມປົກກະຕິ ໄລຍະຜ່ອນຜັນ ແມ່ນໄລຍະເວລາສິບສອງເດືອນກ່ອນວັນຍື່ນຄຳຮ້ອງຂໍຈົດທະບຽນຕໍ່ຫ້ອງການຈົດທະບຽນ. ໃນກໍລະນີທີ່ມີການອ້າງບຸລິມະສິດ, ໄລຍະຜ່ອນຜັນຈະມາກ່ອນວັນຍື່ນຄຳຮ້ອງຂໍວັນບຸລິມະສິດ. ເຖິງຢ່າງໃດກໍຕາມ, ກົດໝາຍອາດຈະກຳນົດໄລຍະຜ່ອນຜັນຫົກເດືອນ (ແທນທີ່ຈະເປັນສິບສອງເດືອນ), ຫຼື ອາດຈະຈຳກັດຜົນປະໂຫຍດຂອງໄລຍະຜ່ອນຜັນ ໃຫ້ແກ່ການເປີດເຜີຍໃນບາງກໍລະນີເທົ່ານັ້ນ, ຕົວຢ່າງ, ໃນກໍລະນີທີ່ການເປີດເຜີຍເກີດຂຶ້ນຢູ່ງານວາງສະແດງທາງການ ຫຼື ທີ່ຖືກຮັບຮູ້ຢ່າງເປັນທາງການ ຫຼື ເກີດຂຶ້ນຈາກການກະທຳທີ່ຜິດກົດໝາຍ ຫຼື ການລະເມີດຕໍ່ສິດຂອງນັກອອກແບບ ຫຼື ຜູ້ສືບທອດຕຳແໜ່ງ.

ນັກກວດສອບຕ້ອງພິຈາລະນາໄລຍະຜ່ອນຜັນ ຖ້າຫາກມີການຮ້ອງຂໍຈາກຜູ້ຍື່ນຄຳຮ້ອງ ຫຼື ໂດຍຜູ້ຖືສິດຕໍ່ການຈົດທະບຽນແບບອຸດສາຫະກຳເພື່ອປ້ອງກັນບໍ່ໃຫ້ມີການປະຕິເສດການຈົດທະບຽນ ຫຼື ການຖອນການຈົດທະບຽນດ້ວຍເຫດຜົນເລື່ອງການເປີດເຜີຍຂໍ້ມູນທີ່ເກີດຂຶ້ນໄລຍະຜ່ອນຜັນ. ຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ຫຼື ຜູ້ຖືສິດຈະເປັນຜູ້ຮັບພາລະໃນການພິສູດຂໍ້ເທັດຈິງ ທີ່ກ່ຽວຂ້ອງເພື່ອໃຫ້ບັງຄັບໃຊ້ໄລຍະຜ່ອນຜັນ.

2.1.3 <u>ແຫຼ່ງການເປີດເຜີຍທີ່ເປັນໄປໄດ້</u>

ການເປີດເຜີຍແບບອຸດສາຫະກຳໃນລັກສະນະທີ່ເຮັດໃຫ້ສາທາລະນະຊົນເຂົ້າເຖິງແບບອຸດສາຫະກຳນີ້ຕ້ອງໃຫ້ແບບອຸດສາຫະກຳນັ້ນເບິ່ງເຫັນໄດ້ ຫຼື ຄົ້ນຫາໄດ້ຈາກແຫຼ່ງຂໍ້ມູນທີ່ເປີດເປັນສາທາລະນະ. ຂ້າງລຸ່ມນີ້ຄືແຫຼ່ງ ທີ່ສຳຄັນທີ່ມີການເປີດເຜີຍຂໍ້ມູນແບບອຸດສາຫະກຳຕໍ່ສາທາລະນະຊົນ.

2.1.3.1 ການແຈກຢາຍເພື່ອການຄ້າ ແລະ ການນຳໃຊ້ໃນທາງການຄ້າ

ການເປີດເຜີຍແບບອຸດສາຫະກຳ ອາດຈະເກີດຈາກການນຳຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າທີ່ນຳສະ ເໜີແບບອຸດສາຫະກຳເຂົ້າສູ່ຕະຫຼາດ. ຖ້າສິ່ງຂອງທີ່ເປັນສິນຄ້າທີ່ນຳສະເໜີແບບອຸດສາຫະກຳຖືກວາງໃນຕະຫຼາດ, ສາທາລະນະຊົນໃນວົງກວ້າງ ກໍຈະອາດຈະເຂົ້າເຖິງແບບອຸດສາຫະກຳໄດ້ໃນທັນທີ ເນື່ອງຈາກຜູ້ບໍລິໂພກອາດຈະເຫັນ ແລະ ຊື້ຜະລິດຕະພັນໄດ້ໂດຍກົງ. ເຊັ່ນດຽວກັນກັບກໍລະນີທີ່ມີການແຈກຢາຍຜະລິດຕະພັນໃຫ້ປະຊາຊົນ ທົ່ວໄປໂດຍບໍ່ເສຍຄ່າໃນຮູບແບບຂອງຕົວຢ່າງຜະລິດຕະພັນ ຊຶ່ງເປັນການທົດສອບຕະຫຼາດ ຫຼື ເພື່ອຈຸດປະສົງຂອງ ການໂຄສະນ

2.1.3.2 ການເຜີຍແຜ່ທົ່ວໄປ

ການນຳສະເໜີທາງຮູບສະແດງ ຫຼື ຮູບຖ່າຍຜະລິດຕະພັນ ທີ່ນຳສະເໜີແບບອຸດສາຫະກຳ, ທັງໃນວາລະສານຂອງລັດ, ໜັງສືພິມ, ວາລະສານ ຫຼື ສິ່ງພິມອື່ນ ຈະເປີດເຜີຍຂໍ້ມູນໃນແບບອຸດສາຫະກຳ ຈົນເຖິງຂັ້ນທີ່ອາດຈະຈຳແນກຄວາມແຕກຕ່າງໃນແບບອຸດສາຫະກຳໄດ້ຢ່າງຊັດເຈນໃນການນຳສະເໜີ ເຫຼົ່ານັ້ນ. ເມື່ອມີການວິເຄາະວ່າ ການອອກແບບດັ່ງກ່າວຕ້ອງມີຄວາມໃໝ່ຕາມກົດໝາຍຫຼືບໍ່ ຈຳເປັນຕ້ອງນຳສິ່ງພິມເຫຼົ່ານີ້ມາພິຈາລະນາ.

ເຊັ່ນດຽວກັນກັບກໍລະນີທີ່ສິ່ງພິມສະເພາະດ້ານ ເຊັ່ນ: ວາລະສານດ້ານວິຊາການ ແລະ ວາລະສານສະເພາະ ເລື່ອງທີ່ກ່ຽວຂ້ອງກັບ ຕົວຢ່າງ, ແຟຊັນ, ເຄື່ອງນຸ່ງຫົ່ມ, ການຕົບແຕ່ງພາຍໃນ, ສະຖາປັດຕິຍະກຳ, ງານອະດິເລກ, ລົດຍົນ ຫຼື ເຕັກນິກ.

ກາຕາລ່ອກດ້ານອຸດສາຫະກຳ ແລະ ການຄ້າທີ່ແຈກໂດຍຜູ້ຜະລິດ ແລະ ຜູ້ຈຳໜ່າຍຜະລິດຕະພັນ ທີ່ນຳສະ ເໜີແບບອຸດສາຫະກຳ ເປັນຂໍ້ມູນອ້າງອີງທີ່ຖືກຕ້ອງໃນການພິຈາລະນາສີລະປະທີ່ມີກ່ອນໜ້າ ແລະ ການເປີດເຜີຍແບບອຸດສາຫະກຳທີ່ມີມາກ່ອນ. ເຊັ່ນດຽວກັບກໍລະນີທີ່ທັງກາຕາລ່ອກທີ່ແຈກໃຫ້ແກ່ປະຊາຊົນທົ່ວໄປໃນວົງກວ້າງ ບໍ່ວ່າຈະໃນຮູບແບບສິ່ງທີ່ພິມເຜີຍແຜ່ ຫຼື ຢູ່ໃນອິນເຕີເນັດ (ເບິ່ງ ຢູ່ຂ້າງລຸ່ມ).

2.1.3.3 ການເຜີຍແຜ່ທາງການ

ການເຜີຍແຜ່ທີ່ພິມໂດຍອົງການຄຸ້ມຄອງຊັບສິນອຸດສາຫະກຳແຫ່ງຊາດ (ສຳນັກງານ IP) ຂອງປະເທດ, ເຊັ່ນ: ຈົດໝາຍເຫດທາງລັດຖະການ ແລະ ສຳນັກຂ່າວສານ ເປັນແຫຼ່ງທີ່ມີການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງເຊັ່ນກັນ. ຖ້າກົດໝາຍຫາກກຳນົດເປັນຢ່າງອື່ນ, ການຜະລິດຊ້ຳແບບອຸດສາຫະກຳໃນການພິມເຜີຍແຜ່ທາງການ ໃຫ້ຖືວ່າເປັນການເປີດເຜີຍແບບອຸດສາຫະກຳຕໍ່ສາທາລະນະຊົນ. ຄວາມຈິງແລ້ວ, ອັນນີ້ເປັນຜົນທີ່ສຳຄັນທີ່ສຸດຕາມເຈຕະນາຂອງ ການປະກາດຜ່ານການເຜີຍແຜ່ທາງການດັ່ງກ່າວ.

ຜົນການເປີດເຜີຍເກີດຂຶ້ນ ເຖິງວ່າ ຈະເປັນຫົວຂໍ້ສະເພາະໃນຈົດໝາຍເຫດທາງລັດຖະການ ຫຼື ຂ່າວສານ ກໍຕາມ. ບໍ່ພຽງແຕ່ຂ່າວສານ ຫຼື ຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນແບບອຸດສາຫະກຳເທົ່ານັ້ນ ທີ່ຖືວ່າກ່ຽວຂ້ອງ, ແຕ່ຍັງລວມເອົາ ຂ່າວສານທີ່ປະກາດເລື່ອງເຄື່ອງໝາຍການຄ້າ, ສິດທິບັດ ແລະ ສິດຕໍ່ຊັບສິນ ທາງປັນຍາອື່ນອີກດ້ວຍ.

ການປະກາດຢ່າງເປັນທາງການໃນວາລະສານທີ່ບໍ່ລວມເອົາການສຳເນົາແບບອຸດສາຫະກຳ ແຕ່ຍັງເປັນການເປີດເຜີຍສຳນວນເອກະສານຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ໂດຍຈະສະແດງສຳເນົາແບບອຸດສາຫະກຳ ເມື່ອມີຜູ້ຮ້ອງຂໍ ກໍຄວນຖືເປັນການເປີດເຜີຍຢ່າງສົມບູນເຊັ່ນກັນ.

2.1.3.4 ການເປີດເຜີຍຂໍ້ມູນທາງອິນເຕີເນັດ

ເວັບໄຊ ແລະ ຖານຂໍ້ມູນ ຄວນຖືວ່າເປັນແຫຼ່ງຂໍ້ມູນທີ່ເປີດເຜີຍຕໍ່ສາທາລະນະຊົນ.

ການເປີດເຜີຍຂໍ້ມູນທາງອິນເຕີເນັດກ່ຽວກັບຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳ ໃນແບບທີ່ເຮັດໃຫ້ສາທາລະນະຊົນສາມາດເຂົ້າເຖິງຂໍ້ມູນກ່ຽວກັບຮູບລັກສະນະຂອງຜະລິດຕະພັນນັ້ນໄດ້ຢ່າງຊັດເຈນ ຈະເຮັດໃຫ້ຄວາມໃໝ່ຂອງແບບອຸດສາຫະກຳໝົດລົງໃນລັກສະນະດຽວກັບການແຈກຢາຍສິ່ງຂອງທີ່ເປັນສິນຄ້າເຫຼົ່ານັ້ນໃນ ທາງການຄ້າ.

ການນຳສະເໜີ ຫຼື ການສະເໜີຂາຍຜະລິດຕະພັນໃນເວັບໄຊ້ທາງອິນເຕີເນັດ ຄວນຖືວ່າ ເປັນການດຳເນີນການສ່ວນໜຶ່ງຂອງການໃຊ້ປະ�โຫຍດຂອງຜະລິດຕະພັນເຫຼົ່ານັ້ນໃນທາງການຄ້າ. ຄວນຮັບຮູ້ການເປີດເຜີຍແບບນີ້ ເຖິງວ່າເວັບໄຊ້ກຳນົດໄວ້ວ່າ ຕ້ອງມີການສະໝັກສະມາຊິກ ຫຼື ຈ່າຍເງິນ ຫຼື ມີການປ້ອງກັນດ້ວຍລະຫັດຜ່ານໃນການ ເຂົ້າເຖິງກຸ່ມບຸກຄົນໃນວົງຈຳກັດ. ຖ້າການເຂົ້າເຖິງເວັບໄຊ້ຫາກບໍ່ຖືກຈຳກັດໂດຍຂໍ້ກຳນົດກ່ຽວກັບການຮັກສາຄວາມ ລັບ ແລະ ສາມາດເຂົ້າເຖິງໄດ້ໂດຍທຸລະກິດການຄ້າ ແລະ ທຸລະກິດທີ່ກ່ຽວຂ້ອງກັບຜະລິດຕະພັນດັ່ງກ່າວ, ການເປີດເຜີຍໃນເວັບໄຊ້ນັ້ນ ຄວນຖືວ່າເປັນການເປີດເຜີຍຕໍ່ສາທາລະນະຊົນ.

ໃນທຸກກໍລະນີ ມີຄວາມຈຳເປັນຕ້ອງກວດສອບໃຫ້ແນ່ໃຈກ່ຽວກັບວັນທີທີ່ແນ່ນອນ ທີ່ມີການເປີດເຜີຍ ແບບອຸດສາຫະກຳໃນເວັບໄຊ້ ເພື່ອສົມທຽບວັນທີດັ່ງກ່າວ ກັບ ວັນທີຍື່ນຄຳຮ້ອງ ຫຼື ວັນບຸລິມະສິດຂອງຄຳຮອງຂໍຈົດທະບຽນ. ວັນທີທີ່ມີການເປີດເຜີຍຂໍ້ມູນທາງອິນເຕີເນັດ ອາດຈະບໍ່ພ້ອມມີຕະຫຼອດເວລາ. ຄູ່ມືການປະຕິບັດ ຂອງ OHIM (ການລົບລ້າງ) ກ່າວເຖິງການຊີ້ບອກດັ່ງຕໍ່ໄປນີ້ ສາມາດຖືໄດ້ວ່າວັນທີເປີດເຜີຍຂໍ້ມູນເທິງອິນເຕີເນັດ ມີຄວາມໜ້າເຊື່ອຖື[31]:

- ເວັບໄຊ້ໃຫ້ຂໍ້ມູນ ບັນທຶກເວລາທີ່ມີປະຫວັດການແກ້ໄຂແຟ້ມ ຫຼື ໜ້າເວັບ (ຕົວຢ່າງ ດັ່ງທີ່ມີຢູ່ໃນ ສາລານຸກົມ (Wikipedia) ຫຼື ທີ່ແນບໄປນຳເນື້ອໃນແບບອັດຕະໂນມັດ ເຊັ່ນ: ຂໍ້ຄວາມໃນກອງປະຊຸມ ແລະ ໜ້າເວັບໄຊສົນທະນາ);

- ສຳລັບໜ້າເວັບໂປຣແກຣມຄົ້ນຫາຂໍ້ມູນ ຈະສະແດງວັນທີຈັດດັດສະນີ (ເຊັ່ນ ຈາກ Google

[31] ເບິ່ງເພີ່ມເຕີມຢູ່ ຄູ່ມືແນະນຳຂອງ EUIPO (ການຍົກເລີກ), ວັກ 5.5.1.4

cache); ຫຼື

- ການຖ່າຍຮູບໜ້າຈໍເອົາໜ້າເວັບທີ່ສະແດງວັນທີທີ່ໃຫ້ມາ;
- ຂໍ້ມູນທີ່ຕິດພັນກັບຂໍ້ມູນທີ່ປັບເປັນປັດຈຸບັນໃນໜ້າເວັບ ເຫັນໄດ້ຈາກການບໍລິການເກັບເອກະສານ ທາງອິນເຕີເນັດ.

2.1.3.5 ການເປີດເຜີຍຂໍ້ມູນໃນງານວາງສະແດງ

ອາດຈະມີການກຳນົດໄລຍະຜ່ອນຜັນຕາມກົດໝາຍ ສຳລັບກໍລະນີທີ່ມີການເປີດເຜີຍແບບອຸດສາຫະກຳ ໃນງານວາງສະແດງທີ່ມີການແຍກເປັນງານຕ່າງຫາກ ຫຼື ຮ່ວມກັບການປະຕິບັດພັນທະພາຍໃຕ້ສົນທິສັນຍາປາຣີ ເພື່ອປົກປ້ອງຜະລິດຕະພັນທີ່ສະແດງໃນງານວາງສະແດງທາງການ ຫຼື ງານວາງສະແດງລະດັບສາກົນ ທີ່ຖືກຮັບຮູ້ ຈາກທາງການ[32].

ອາດຈະມີການເປີດເຜີຍແບບອຸດສາຫະກຳ ເປັນຄັ້ງທຳອິດຢູ່ໃນງານວາງສະແດງ ຫຼື ຕະຫຼາດນັດ ໂດຍສະເພາະ ໃນກໍລະນີທີ່ງານດັ່ງກ່າວຖືກໃຊ້ເພື່ອເປີດຕົວຜະລິດຕະພັນໃໝ່ ຫຼື ຜະລິດຕະພັນແຟຊັນ ທີ່ມີຍອດຂາຍ ເປັນໄລຍະໆ ຫຼື ມີຄວາມຕ້ອງການສະເພາະລະດູການ. ການນຳສະເໜີຜະລິດຕະພັນໃນງານວາງສະແດງ ຄວນນຳມາພິຈາລະນາໃນການກຳນົດຄວາມໃໝ່ຂອງແບບອຸດສາຫະກຳ.

ກົດໝາຍອາດຈະອະນຸຍາດໃຫ້ມີໄລຍະຜ່ອນຜັນແບບຈຳກັດ ພາຍຫຼັງການເປີດເຜີຍຜະລິດຕະພັນທີ່ມີການສະແດງແບບອຸດສາຫະກຳ (ເບິ່ງເພີ່ມເຕີມຢູ່ ຂໍ້ 2.1.2.2). ເຖິງຢ່າງໃດກໍຕາມ, ກົດໝາຍອາດຈະລະບຸວ່າ ໄລຍະຜ່ອນຜັນດັ່ງກ່າວ ອາດຈະນຳໃຊ້ໄດ້ສະເພາະແຕ່ການເປີດເຜີຍໃນງານວາງສະແດງທາງການ ຫຼື ງານວາງສະແດງ ລະດັບສາກົນທີ່ຖືກຮັບຮູ້ຢ່າງເປັນທາງການ. ດັ່ງນັ້ນ, ການເປີດເຜີຍຜະລິດຕະພັນໃນງານວາງສະແດງທີ່ບໍ່ຖືກຍອມຮັບຈາກທາງການ ອາດຈະເປັນການທຳລາຍຄວາມໃໝ່ຂອງແບບອຸດສາຫະກຳທີ່ນຳສະເໜີໃນຜະລິດຕະພັນດັ່ງກ່າວ.

ຕົວຢ່າງຕໍ່ໄປນີ້ສະແດງໃຫ້ເຫັນການເປີດເຜີຍທີ່ເປັນການທຳລາຍຄວາມໃໝ່ ໃນງານວາງສະແດງທີ່ບໍ່ຖືກ ຍອມຮັບຢ່າງເປັນທາງການ[33]:

---

[32] ສົນທິສັນຍາປາລີ ຂໍ້ 11(1) ກຳນົດວ່າ
ອີງຕາມກົດໝາຍພາຍໃນປະເທດ ປະເທດໃນສະຫະພາບເອີລົບ ຕ້ອງໃຫ້ການປົກປ້ອງຊົ່ວຄາວແກ່ສິ່ງປະດິດທີ່ສາມາດໄດ້ຮັບສິດທິບັດຜະລິດຕະພັນອັດຖະປະໂຫຍດ, ແບບອຸດສາຫະກຳ ແລະ ເຄື່ອງໝາຍການຄ້າ ສຳລັບສິນຄ້າທີ່ວາງສະແດງໃນງານວາງສະແດງລະດັບສາກົນທີ່ເປັນທາງການ ຫຼື ໄດ້ຮັບການຍອມຮັບຢ່າງເປັນທາງການ ຊຶ່ງຈັດຂຶ້ນໃນອານາເຂດຂອງຕົນ

[33] ຕົວຢ່າງຈາກ ອົງການຄຸ້ມຄອງຂອງຫວຽດນາມ

ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ:

ຄຳຮ້ອງຂໍຈົດທະບຽນ ເລກທີ: 3-2007-00452 – "ລົດຈັກ" LCL: 12-11

ວັນບຸລິມະສິດ: 4 ມັງກອນ 2007 – ວັນທີຍື່ນຄຳຮ້ອງ: 12 ເມສາ 2007

ການເປີດເຜີຍແບບທີ່ຖືກອ້າງເຖິງ:

ແບບອຸດສາຫະກຳນີ້ຖືກປະຕິເສດຍ້ອນຂາດຄວາມໃໝ່. ລົດຈັກທີ່ປະກົດຢູ່ໃນເອກະສານອ້າງອີງ ຖືກເປີດເຜີຍຢູ່ໃນງານວາງສະແດງທີ່ໄດ້ຈັດຂຶ້ນຢູ່ນະຄອນຫຼວງຈັກກາຕາ ປະເທດອິນໂດເນເຊຍ ກ່ອນວັນຍື່ນຄຳຮ້ອງຂໍຈົດ ທະບຽນຄັ້ງທຳອິດ. ຜູ້ຍື່ນຄຳຮ້ອງຂໍຈົດທະບຽນລະບຸວ່າ ແບບອຸດສາຫະກຳນີ້ຖືກເປີດເຜີຍຢູ່ໃນງານວາງສະແດງໃນລະດັບສາກົນ. ເຖິງຢ່າງໃດກໍຕາມ, ຜູ້ຍື່ນຄຳຮ້ອງຂໍຈົດທະບຽນບໍ່ສາມາດພິສູດໄດ້ວ່າ ງານວາງສະແດງດັ່ງກ່າວ ເປັນ ງານວາງສະແດງລະດັບສາກົນທີ່ເປັນທາງການ ຕາມກົດໝາຍຂອງຫວຽດນາມກຳນົດ.

ກົດໝາຍຂອງຫວຽດນາມ ຍັງກຳນົດໄລຍະຜ່ອນຜັນຫົກເດືອນ ຫຼັງຈາກການເປີດເຜີຍຜະລິດຕະພັນທີ່ມີການສະແດງແບບອຸດສາຫະກຳ ຢູ່ໃນງານວາງສະແດງທີ່ຖືກຍອມຮັບລະດັບຊາດຢູ່ຫວຽດນາມ.

2.2 ການປະເມີນຄວາມໃໝ່

2.2.1 <u>ຄຸນລັກສະນະຂອງແບບ</u>

ການປະເມີນຄວາມໃໝ່ ຖືກດຳເນີນໂດຍການສົມທຽບແບບອຸດສາຫະກຳທີ່ຢູ່ໃນການພິຈາລະນາ ກັບແບບອື່ນທີ່ຖືກເປີດເຜີຍກ່ອນວັນຍື່ນຄຳຮ້ອງ ຫຼື ວັນທີມີການຍື່ນຄຳຮ້ອງຂໍຈົດທະບຽນຄັ້ງທຳອິດຂອງແບບອຸດສາ ຫະກຳທີ່ກຳລັງຢູ່ໃນການພິຈາລະນາ.

ຕາມຫຼັກການແລ້ວ, ການຖືວ່າສອດຄ່ອງຕາມເງື່ອນໄຂກ່ຽວກັບຄວາມໃໝ່ ແມ່ນກໍລະນີທີ່ບໍ່ພົບເຫັນແບບ ກ່ອນໜ້ານີ້ທີ່ຄືກັນ ຊຶ່ງມີກ່ອນແບບອຸດສາຫະກຳທີ່ຢູ່ໃນການພິຈາລະນາກວດສອບ. ເຖິງຢ່າງໃດກໍຕາມ, ບໍ່ຄວນ ຄຳນຶງເຖິງຄວາມແຕກຕ່າງພຽງເລັກນ້ອຍ, ບໍ່ມີຄວາມສຳຄັນຫຼາຍ ຫຼື ບໍ່ສາມາດສັງເກດເຫັນຄວາມແຕກຕ່າງ ແລະ ບໍ່ຄວນພິຈາລະນາລາຍລະອຽດທີ່ບໍ່ເປັນເນື້ອໃນສຳຄັນ ໃນເວລາດຳເນີນການສົມທຽບແບບອຸດສາຫະກຳ ກັບ ການເປີດເຜີຍ ຫຼື ການອ້າງອີງເຖິງກ່ອນໜ້ານັ້ນ. ຄວາມແຕກຕ່າງພຽງເລັກນ້ອຍດັ່ງກ່າວ ບໍ່ຄວນສົ່ງຜົນກະທົບຕໍ່ຄວາມ ສຳຄັນຂອງການເປີດເຜີຍກ່ອນໜ້ານີ້ ສຳລັບຄວາມໃໝ່.

ຄວາມແຕກຕ່າງ ຫຼື ການປ່ຽນແປງຂອງຮູບລັກສະນະ ຄວນຖືວ່າເປັນເປັນເລື່ອງເລັກນ້ອຍ, ບໍ່ມີຄວາມ ສຳ ຄັນ, ບໍ່ສາມາດສັງເກດເຫັນໄດ້ ຫຼື ບໍ່ເປັນສາລະສຳຄັນ ແມ່ນກໍລະນີທີ່ເຫັນວ່າເປັນເລື່ອງທຳມະດາ ທີ່ຜູ້ບໍລິໂພກ ທົ່ວໄປຂອງຜະລິດຕະພັນທີ່ມີການໃຊ້ແບບອຸດສາຫະກຳນັ້ນ ຫາກບໍ່ສັງເກດເຫັນຈຸດດັ່ງກ່າວ ຫຼື ຫາກຈະອາດຈະຮັບຮູ້ຄຸນລັກສະນະທີກ່ຽວຂ້ອງໄດ້ ກໍຕໍ່ເມື່ອມີການພິຈາລະນາກວດສອບຢ່າງລະອຽດເທົ່ານັ້ນ. ຜູ້ບໍລິໂພກທົ່ວໄປອາດຈະມີຄວາມຮອບຄອບ ແລະ ໃສ່ໃຈໃນລະດັບທີ່ບໍ່ເທົ່າກັນ ຊຶ່ງຂຶ້ນກັບປະເພດ ຜະລິດຕະພັນ. ຄວນພິຈາລະນາສິ່ງດັ່ງກ່າວ ເພື່ອປະເມີນຄວາມໃໝ່ໃນກໍລະນີສະເພາະ.

ຕົວຢ່າງຕໍ່ໄປນີ້ ສະແດງໃຫ້ເຫັນກໍລະນີທີ່ຄວາມແຕກຕ່າງທີ່ມີຄວາມສຳຄັນຢູ່ໃນແບບອຸດສາຫະກຳ ບໍ່ໄດ້ ເປັນການຫຼີກເວັ້ນການພິຈາລະນາການຂາດຄວາມໃໝ່[34]:

[34] ຕົວຢ່າງຈາກອົງການຄຸ້ມຄອງຂອງຫວຽດນາມ

<u>ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ</u>: ຄຳຮ້ອງຂໍຈົດທະບຽນ ເລກທີ: 3-2006-01570

ວັນທີຍື່ນຄຳຮ້ອງ: 25 ທັນວາ 2006

"ແກ້ວນ້ຳປາ" – LCL: 09-01

<u>ແບບທີ່ຖືກອ້າງເຖິງ</u>: ການຈົດທະບຽນເລກທີ: HK 0211665.5M004

ສຳນັກງານຊັບສິນທາງປັນຍາ: ຮົ່ງກົ່ງ

ວັນພິມເຜີຍແຜ່: 8 ພະຈິກ 2002

"ກະຕຸກຢາງ" LCL: 09-01



ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ ຖືກປະຕິເສດເນື່ອງຈາກຂາດຄວາມໃໝ່. ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ ໄດ້ຍື່ນນຳຫຼັງແບບທີ່ຖືກອ້າງເຖິງ. ຄວາມແຕກຕ່າງຂອງຝາອັດ, ກົ້ນກະຕຸກ, ບ່າ ແລະ ລວດລາຍທີ່ເປັນຮູບໃບໄມ້ຢູ່ກະຕຸກ ຖືວ່າບໍ່ມີເນື້ອໃນສຳຄັນ.

ການປ່ຽນແປງທີ່ສຳຄັນຢູ່ໃນຄຸນລັກສະນະກ່ຽວກັບແບບອຸດສາຫະກຳ ທີ່ຢູ່ພາຍໃຕ້ການພິຈາລະນາກວດສອບ, ເມື່ອທຽບກັບແບບກ່ອນໜ້ານີ້ທີ່ຖືກເປີດເຜີຍ ຫຼື ຖືກອ້າງເຖິງເມື່ອທຽບກັບແບບທີ່ຖືກກວດສອບ ອາດຈະ ເຮັດໃຫ້ແບບທີ່ມີຕາມພາຍຫຼັງ ມີຄວາມແຕກຕ່າງຢ່າງສັງເກດເຫັນໄດ້ ແລະ ມີຄວາມໃໝ່ ເມື່ອທຽບກັບແບບ ກ່ອນໜ້ານີ້.

ໃນການກຳນົດລະດັບການປ່ຽນແປງ ແລະ ຄວາມໃໝ່ຂອງແບບທີ່ມີຕາມພາຍຫຼັງທີ່ຜົວພັນກັບແບບກ່ອນໜ້ານີ້ ຄວນນຳໃຊ້ມາດຕະຖານກ່ຽວກັບການຮັບຮູ້ໂດຍລວມ (ເບິ່ງເພີ່ມເຕີມຢູ່ ຂໍ້ 2.2.2, ຂ້າງລຸ່ມ).

2.2.2 <u>ການຮັບຮູ້ໂດຍລວມ</u>

ຄວນປະເມີນຄວາມໃໝ່ຕາມການຮັບຮູ້ໂດຍລວມຈາກແບບທີ່ຢູ່ໃນການພິຈາລະນາກວດສອບ ເມື່ອທຽບກັບການຮັບຮູ້ໂດຍລວມຈາກແຕ່ລະແບບກ່ອນໜ້ານີ້.

ການກວດສອບ ຕ້ອງພິຈາລະນາວ່າ ໃນການຮັບຮູ້ຄັ້ງທຳອິດນັ້ນ ມີການຮັບຮູ້ວ່າ ແບບທີ່ຢູ່ໃນການພິຈາ ລະນາ ມີຄວາມຄືກັນ ຫຼື ເກືອບຄືກັນ ຫຼື ບໍ່ຄືກັນກັບແບບທີ່ຖືກເປີດເຜີຍກ່ອນໜ້ານີ້ ຫຼື ຖືກອ້າງເຖິງ ເມື່ອທຽບກັບ ແບບທີ່ຢູ່ໃນການພິຈາລະນາ. ໜ່ວຍງານທີ່ກວດສອບ ຄວນໃຊ້ມາດຕະຖານນີ້ຈາກມຸມມອງຂອງຜູ້ທີ່ອາດຈະເປັນ ຜູ້ບໍລິໂພກຜະລິດຕະພັນ.

ຕົວຢ່າງຕໍ່ໄປນີ້ ສະແດງໃຫ້ເຫັນການທົດສອບຄວາມໃໝ່ຕາມການຮັບຮູ້ໂດຍລວມທີ່ມີຕໍ່ແບບອຸດສາຫະກຳທີ່ມີຂໍ້ຂັດແຍ່ງ:

ຕົວຢ່າງ 1[35]

<u>ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ:</u> ຄຳຮ້ອງຂໍຈົດທະບຽນ ເລກທີ: 3-2006-00347 –

"ຕົວຄວບຄຸມໄຟ"

ວັນທີຍື່ນຄຳຮ້ອງ: 27 ມີນາ 2006 LCL: 13-03

ແບບທີ່ຖືກອ້າງເຖິງ: ຄຳຮ້ອງຂໍຈົດທະບຽນ ເລກທີ: 3-2004-00180 – ສິດທິບັດ ເລກທີ: 8695 "ຕົວແປງຄວາມຖີ່" – LCL: 13-02

ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນຖືກປະຕິເສດຍ້ອນຂາດຄວາມໃໝ່. ແບບທີ່ໄດ້ຍື່ນຄຳ

[35] ຕົວຢ່າງຈາກອົງການຄຸ້ມຄອງຂອງຫວຽດນາມ

ຮ້ອງຂໍຈົດທະບຽນ ບໍ່ຄືກັບແບບທີ່ຖືກອ້າງເຖິງ (ແບບທີ່ຖືກອ້າງເຖິງ ມີປຸ່ມ ແລະ ໜ້າຈໍ LCD ຊຶ່ງບໍ່ປະກົດຢູ່ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ) ແຕ່ຢູ່ໃນແບບທີ່ອ້າງເຖິງ ມີການເປີດເຜີຍຄຸນລັກສະນະຕົ້ນຕໍທັງໝົດ.

ຕົວຢ່າງ 2[36]

ຄຳຮ້ອງຂໍຈົດທະບຽນສິດທິບັດແບບອຸດສາຫະກຳຂອງ "ອ່າງລ້າງໜ້າ" ທີ່ໄດ້ຍື່ນ ວັນທີ 2 ທັນວາ 2005.

ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ



ແບບທີ່ຖືກອ້າງເຖິງ

ການຄົ້ນຫາແບບທີ່ມີຢູ່ໃນປັດຈຸບັນ ພົບວ່າ "ອ່າງລ້າງໜ້າ" ທີ່ມີກ່ອນໜ້ານັ້ນໃນຖານຂໍ້ມູນຂອງສຳນັກງານສິດທິບັດ ແລະ ເຄື່ອງໝາຍການຄ້າຂອງສະຫະລັດ.

ທັງສອງແບບ ປະກົດເປັນຮູບສີ່ຫຼ່ຽມຈະຕຸລັດ ຊຶ່ງເນື້ອໃນສຳຄັນຢູ່ໃນແບບດັ່ງກ່າວແມ່ນ ຄວາມ ຊັນ ຢູ່ທາງກາງຂອງອ່າງລ້າງໜ້າ, ສ່ວນຂອບດ້ານເທິງໂຄ້ງຂຶ້ນ. ຄວາມແຕກຕ່າງຢູ່ດ້ານລຸ່ມຂອງແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນນັ້ນແມ່ນຕົ້ນກວ່າ ແລະ ສູງກວ່າແບບທີ່ຖືກອ້າງເຖິງ.

ແບບທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ ມີຮູບຊົງຂອບດ້ານເທິງຄືກັນກັບແບບທີ່ຖືກອ້າງເຖິງ ແຕ່ມີ ຄວາມສູງບໍ່ເທົ່າກັນ. ຄວາມສູງທີ່ແຕກຕ່າງກັນ ບໍ່ໄດ້ເຮັດໃຫ້ຮູບຊົງຂອງແບບທີ່ຂໍຈົດ

[36] ຕົວຢ່າງຈາກຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບຜະລິດຕະພັນຂອງປະເທດໄທ, ໜ້າ 73

ທະບຽນມີຄວາມ ແຕກຕ່າງຈາກແບບທີ່ມີຢູ່, ດັ່ງນັ້ນ, ຈຶ່ງບໍ່ຖືວ່າມີຄວາມໃໝ່[37].

2.2.3 ການລວມກັນຂອງແບບກ່ອນໜ້ານີ້

ຕາມຫຼັກການແລ້ວ, ຄວາມໃໝ່ຖືກກຳນົດຢ່າງພາວະວິໄສບົນພື້ນຖານການຮັບຮູ້ຄັ້ງທຳອິດໂດຍລວມ ກ່ຽວ ກັບຄວາມຄືກັນ, ຄວາມຄ້າຍຄືກັນ ຫຼື ຄວາມແຕກຕ່າງກັນ ລະຫວ່າງ ສອງແບບ (ຫຼື ຫຼາຍກວ່ານັ້ນ). ຄວນມີ ການສົມທຽບເທື່ອລະອັນ ແລະ ແຍກກັນໃຫ້ຄົບທັງໝົດ, ເນື່ງອຈາກມັນປະກົດຕໍ່ສາຍຕາຜູ້ບໍລິໂພກ ໃນລະຫວ່າງ ການໃຊ້ຜະລິດຕະພັນຕາມປົກກະຕິ.

ບໍ່ຄວນປະເມີນຄວາມໃໝ່ ໂດຍການສົມທຽບແບບອຸດສາຫະກຳ ກັບ ຄຸນລັກສະນະຕ່າງໆລວມກັນທີ່ໄດ້ຈາກແບບກ່ອນໜ້ານີ້ສອງແບບ ຫຼື ຫຼາຍກວ່ານັ້ນ. ໂດຍທົ່ວໄປຄຸນລັກສະນະຕ່າງໆລວມກັນທີ່ຜົບເຫັນຢູ່ໃນແບບກ່ອນໜ້ານີ້ ຈະເຮັດໃຫ້ເກີດແບບທີ່ມີຄວາມໃໝ່, ເວັ້ນເສຍແຕ່ການຮັບຮູ້ຄັ້ງທຳອິດ ທີ່ໄດ້ມາຈາກແບບນີ້ ບໍ່ແຕກຕ່າງ ຈາກການຮັບຮູ້ຄັ້ງທຳອິດໂດມລວມ ທີ່ໄດ້ຈາກການເປີດເຜີຍກ່ອນໜ້ານີ້ໜຶ່ງ ຫຼື ສອງແບບ.

ຖ້າການຮັບຮູ້ຄັ້ງທຳອິດໂດຍລວມຫາກຊີ້ໃຫ້ເຫັນວ່າ ແບບດັ່ງກ່າວມີຄວາມແຕກຕ່າງກັນ, ນັກກວດສອບບໍ່ຄວນກຳນົດໃຫ້ມີກໍລະນີຂອງຄວາມຄ້າຍຄືກັນ ໂດຍການລວມເອົາຄຸນລັກສະນະຕ່າງໆ ທີ່ຜົບໃນການເປີດເຜີຍ ກ່ອນໜ້ານີ້.

ເຖິງຢ່າງໃດກໍຕາມ, ຖ້າແບບອຸດສາຫະກຳ ທີ່ລວມເອົາຄຸນລັກສະນະຕ່າງໆທີ່ໄດ້ມາ ຫຼື ໄດ້ຮັບແຮງບັນດານ ໃຈຈາກແບບກ່ອນໜ້ານີ້ ຍັງຄ້າຍຄືຫຼາຍກັບໜຶ່ງໃນແບບທີ່ຖືກເປີດເຜີຍກ່ອນໜ້ານີ້ ເມື່ອມີການພິຈາລະນາຮູບຄຸນລັກສະນະໂດຍລວມ ອາດຈະພິຈາລະນາໄດ້ວ່າ ແບບອຸດສາຫະກຳນີ້ຂາດຄວາມໃໝ່ຕາມທີ່ກຳນົດ. ນອກຈາກນັ້ນ, ໃນກົດໝາຍພາຍໃນປະເທດ ອາດຈະມີຂໍ້ກຳນົດເພີ່ມເຕີມ ກ່ຽວກັບຄວາມໃໝ່ ເຊັ່ນ: ຄວາມຄິດສ້າງສັນ, ຂັ້ນຕອນການປະດິດ ຫຼື ຄຸນລັກສະນະຂອງແຕ່ລະສ່ວນ[38].

---

[37] ອີງຕາມຄຳອະທິບາຍທີ່ມີໃນຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບຜະລິດຕະພັນຂອງປະເທດໄທ, ໜ້າ 73

[38] ຢູ່ຫວຽດນາມ ມີການບັງຄັບໃຊ້ຂໍ້ກຳນົດວ່າດ້ວຍຄວາມຄິດສ້າງສັນ ອາດຈະມີການສົມທຽບແບບ ກັບ ຄຸນລັກສະນະລວມກັນທີ່ມາຈາກ ແບບກ່ອນໜ້ານີ້ ໜຶ່ງ ຫຼື ສອງຢ່າງ ແລະ ອາດຈະໄດ້ຮັບການປະຕິເສດເນື່ອງຈາກຂາດຄວາມຄິດສ້າງສັນ ຖ້າຫາກວ່າເປັນພຽງແຕ່ການ ລວມກັນຂອງຄຸນລັກສະນະທີ່ເປີດເຜີຍມາກ່ອນໜ້ານີ້ສອງ ຫຼື ຫຼາຍກວ່ານັ້ນ

2.2.4 ຄວາມເປັນອິສະຫຼະໃນການອອກແບບ

ສຳລັບຈຸດປະສົງຂອງການກຳນົດຄວາມໃໝ່ຂອງແບບອຸດສາຫະກຳ, ຄວນພິຈາລະນາວ່າ ນັກອອກແບບ ມີອິສະຫຼະລະດັບໃດ ໃນການກຳນົດຮູບຄຸນລັກສະນະຜະລິດຕະພັນ ທີ່ກຳລັງຢູ່ໃນການພິຈາລະນາ. ຄຸນລັກສະນະຂອງສິ່ງຂອງທີ່ເປັນສິນຄ້າທີ່ນຳສະເໜີແບບອຸດສາຫະກຳ ຈະສະແດງໃຫ້ເຫັນວ່າ ນັກອອກແບບມີຄວາມເປັນ ອິສະຫຼະ ຫຼາຍໜ້ອຍຂະໜາດໃດ ທີ່ຈະເພີ່ມຄຸນລັກສະນະທີ່ກຳນົດໄວ້ ເພື່ອຄວາມສວຍງາມໃນການອອກແບບສິ່ງຂອງທີ່ເປັນສິນຄ້າດັ່ງກ່າວນັ້ນ.

ແບບອຸດສາຫະກຳ ມີຈຸດປະສົງໃນການນຳສະເໜີໃນສິ່ງທີ່ເປັນສິນຄ້າອັດຖະປະໂຫຍດ ແລະ ຜະລິດຕະພັນອຸດສາຫະກຳ. ໂດຍສະເພາະ ຈຸດປະສົງຂອງແບບອຸດສາຫະກຳ ຄືການເຮັດໃຫ້ສິ່ງຂອງທີ່ເປັນສິນຄ້າ ຫຼື ຜະລິດຕະພັນ ມີຄວາມໜ້າເພິ່ງພໍໃຈ ຊຶ່ງຄວາມສວຍງາມທີ່ປະກົດຕໍ່ສາຍຕາ ແລະ ເປັນສິ່ງທີ່ປາຖະໜາຂອງຜູ້ທີ່ ຈະເປັນຜູ້ຊື້ ໂດຍບໍ່ແຊກແຊງໜ້າທີ່ການໃຊ້ງານດ້ານເຕັກນິກຂອງຜະລິດຕະພັນ. ຖ້າແບບອຸດສາຫະກຳຫາກມີ ຄຸນຄ່າດ້ານຄວາມສວຍງາມ ແຕ່ການນຳສະເໜີເປັນຕົວຂັດຂວາງ ຫຼື ເປັນອຸປະສັກຕໍ່ການນຳໃຊ້ ຫຼື ການໃຊ້ງານ ຕາມທີ່ໄດ້ຕັ້ງໃຈເອົາໄວ້ ສຳລັບສິ່ງຂອງທີ່ເປັນສິນຄ້າທີ່ນຳສະເໜີແບບອຸດສາຫະກຳ, ແບບດັ່ງກ່າວຈະບໍ່ບັນລຸ ຈຸດປະສົງທີ່ວາງໄວ້.

ຜົນຈາກການທີ່ແບບອຸດສາຫະກຳ ຖືກນຳສະເໜີໃນຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າຊຶ່ງມີໜ້າທີ່ຕາມທີ່ກຳນົດໄວ້ແລ້ວ ແມ່ນການທີ່ນັກອອກແບບຈະຖືກຈຳກັດອິສະຫຼະໃນການອອກແບບລະດັບໜຶ່ງ ຢູ່ຕະຫຼອດ ເວລາ ເນື່ອງຈາກວ່າ ຕ້ອງໄດ້ຄຳນຶງເຖິງຄຸນລັກສະນະຂອງຮູບຊົງຜະລິດຕະພັນນັ້ນໄດ້ເຮັດໜ້າທີ່ຕາມທີ່ເຈຕະນາ ແລະ ໃຊ້ວຽກໄດ້ຕາມຈຸດປະສົງ.

ຄຸນລັກສະນະຂອງຜະລິດຕະພັນ ທີ່ກ່ຽວຂ້ອງຈະເປັນຕົວຊີ້ໃຫ້ເຫັນວ່າ ຄວາມຄິດສ້າງສັນຂອງນັກອອກ ແບບຖືກປົດປ່ອຍອອກມາ ຫຼື ຖືກຈຳກັດຫຼາຍຂະໜາດໃດ. ຜະລິດຕະພັນຈຳນວນໜຶ່ງ ມີຄຸນລັກສະນະທີ່ຖືກປັບ ຕາມມາດຕະຖານໃຫ້ສອດຄ່ອງກັບຂໍ້ກຳນົດບາງຢ່າງໃນດ້ານໜ້າທີ່ ແລະ ເຕັກນິກ ຄຸນລັກສະນະເຫຼົ່ານັ້ນ ຈະພົບໄດ້ ທົ່ວໄປໃນຜະລິດຕະພັນປະເພດນັ້ນ. ນອກຈາກນັ້ນ ນັກອອກແບບ ເກືອບບໍ່ມີອິສະຫຼະ ຫຼື ບໍ່ມີອິສະຫຼະເລີຍໃນ ການດັດແກ້, ເຄື່ອນຍ້າຍ ຫຼື ເຊື່ອງຄຸນລັກສະນະທີ່ກ່າວມາ ໃນເວລາອອກແບບ ຜະລິດຕະພັນເຫຼົ່ານັ້ນ.

ຄວາມເປັນອິສະຫຼະຂອງນັກອອກແບບໃນການກຳນົດຮູບຊົງຜະລິດຕະພັນ, ຕົວຢ່າງ ຮູບຊົງຂອງໂທລະສັບມືຖື ຈະມີຂໍ້ຈຳກັດຫຼາຍກວ່າການອອກແບບອື່ນໆ, ຕົວຢ່າງ ລວດລາຍຂອງຜະລິດຕະພັນທີ່ເປັນພາບທີ່ເປັນພື້ນໜ້າຈໍ (wallpaper) ຫຼື ແຜ່ນແພ. ໂທລະສັບມືຖືມີຄຸນລັກສະນະຕ່າງໆຈຳນວນຫຼາຍ ຊຶ່ງຈະເປັນສ່ວນໜຶ່ງຂອງຮູບຄຸນລັກສະນະຂອງຜະລິດຕະພັນທີ່ບໍ່ສາມາດຫຼີກເວັ້ນໄດ້, ຕົວຢ່າງ ແປ້ນພິມ ຫຼື ໜ້າຈໍດ້ານໜ້າຂອງອຸປະກອນ. ຄຸນລັກສະນະດັ່ງກ່າວ ມີຄວາມຈຳເປັນໃນດ້ານໜ້າທີ່ ແລະ ນັກອອກແບບບໍ່ສາມາດເມີນເສີຍ ຫຼື ເຊື່ອງມັນໄດ້. ນັກອອກແບບຈະມີອິສະຫຼະໜ້ອຍທີ່ສຸດໃນການອອກແບບຮູບຄຸນລັກສະນະຂອງຜະລິດຕະພັນປະເພດນີ້.

ໃນຄຸນລັກສະນະດຽວກັນນີ້, ທຸກອຸປະກອນທີ່ມີຄຸນລັກສະນະດ້ານໜ້າທີ່ທີ່ການນຳໃຊ້ ແລະ ຂໍ້ຈຳກັດ ໃນການອອກແບບຄືກັນ ຫຼື ມີຄຸນລັກສະນະທີ່ຖືກປັບຕາມມາດຕະຖານ ມີທ່າອ່ຽງທີ່ຈະມີຄວາມ ຄ້າຍຄືກັນ. ໃນກໍລະນີນີ້, ການປະກອບສ່ວນຂອງນັກອອກແບບໃນການກຳນົດຮູບຄຸນລັກສະນະ ຜະລິດຕະພັນ ກໍມີທ່າອ່ຽງ ທີ່ຈະບໍ່ຊັດເຈນເທົ່າໃດ ແລະ ຊັດເຈນໜ້ອຍກວ່າໃນກໍລະນີຂອງຜະລິດຕະ ພັນ ທີ່ຕ້ອງຖືກປັບຕາມມາດຕະຖານ ໜ້ອຍກວ່າ ແລະ ເອື້ອອຳນວຍໃຫ້ມີອິສະຫຼະໃນການອອກແບບ ຫຼາຍກວ່າ.

3. ຄວາມສາມາດໃນການເບິ່ງເຫັນ

3.1 ຫຼັກການ

ແບບອຸດສາຫະກຳ ເຮັດໃຫ້ເກີດຮູບຄຸນລັກສະນະບາງຢ່າງແກ່ຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າ ອັດຖະປະໂຫຍດ. ແບບອຸດສາຫະກຳຄວນດຶງດູດສາຍຕາ ແລະ ຕັດສິນດ້ວຍສາຍຕາ. ດັ່ງນັ້ນ ແບບອຸດສາຫະກຳ ຄວນເຮັດໃຫ້ຜູ້ບໍລິໂພກທີ່ເປັນກຸ່ມເປົ້າໝາຍແບບອຸດສາຫະກຳນັ້ນອາດຈະເບິ່ງເຫັນໄດ້ ແລະ ເຮັດໃຫ້ຜູ້ໃຊ້ຜະລິດ ຕະພັນນັ້ນເບິ່ງເຫັນໄດ້ເຊັ່ນກັນ[39].

ຄຸນລັກສະນະຂອງແບບອຸດສາຫະກຳ ທີ່ບໍ່ສາມາດເບິ່ງເຫັນ ຫຼື ບໍ່ສາມາດສັງເກດໄດ້ໃນຊ່ວງການນຳໃຊ້ ຕາມປົກກະຕິ ທີ່ເຈຕະນາໄວ້ສຳລັບຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳນີ້ບໍ່ສາມາດອ້າງເພື່ອການຈົດທະບຽນເປັນແບບອຸດສາຫະກຳໄດ້. ໃນກໍລະນີດັ່ງກ່າວ, ການໃຊ້ຕາມປົກກະຕິ ໝາຍເຖິງການໃຊ້ໂດຍຜູ້ໃຊ້ສຸດທ້າຍຂອງຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າ ໂດຍບໍ່ຈຳແນກວ່າຈະເປັນປະຊາຊົນ ຫຼື ຜູ້ໃຊ້ທີ່ເປັນຜູ້ຊ່ຽວຊານດ້ານວິຊາຊີບ ຫຼື ຜູ້ໃຊ້ສະເພາະດ້ານ, ຍົກຕົວຢ່າງ ທ່ານໝໍ, ນັກຂຽນໂປແກຣມຄອມພິວເຕີ ຫຼື ຊ່າງແປງລົດ.

ການໃຊ້ຜະລິດຕະພັນຕາມປົກກະຕິ ບໍ່ລວມເອົາ ການແຊກແຊງເພື່ອຍົກເຄື່ອງ ຫຼື ການບຳລຸງຮັກສາເຄື່ອງ ຈັກ, ເຄື່ອງມື ຫຼື ອຸປະກອນທີ່ມີຊິ້ນສ່ວນ ແລະ ສ່ວນປະກອບພາຍໃນ. ຕາມປົກກະຕິແລ້ວ ຜູ້ຊົມໃຊ້ສຸດທ້າຍ ສິ່ງຂອງທີ່ເປັນສິນຄ້າດັ່ງກ່າວຈະບໍ່ເປີດເຜີຍ ຫຼື ຖອດແຍກສິນຄ້າດັ່ງກ່າວໃນລະຫວ່າງການນຳໃຊ້ປົກກະຕິ ຕາມໜ້າທີ່ ທີ່ຕັ້ງໃຈໄວ້ຂອງຜະລິດຕະພັນ.

ບັນຫາກ່ຽວກັບຄວາມອາດຈະໃນການເບິ່ງເຫັນໄດ້ ຕົ້ນຕໍຈະເກີດຂຶ້ນໂດຍກ່ຽວຂ້ອງກັບຜະລິດຕະພັນສອງກຸ່ມ ຄື ຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນທີ່ມີສ່ວນປະກອບ ແລະ ຜະລິດຕະພັນທີ່ສະແດງຕຳແໜ່ງສອງຕຳ ແໜ່ງ ຫຼື ຫຼາຍກວ່ານັ້ນໃນການໃຊ້ງານ ຫຼື ການນຳໃຊ້ຕາມປົກກະຕິ.

---

[39] ເບິ່ງເພີ່ມເຕີມຢູ່ໃນບົດບັນຍັດ ໃນ BN DA s. 2(1) “ແບບອຸດສາຫະກຳ”; KH DL ມາດຕາ 89; LA IPL ມາດຕາ 15.2; MY DA s. 3(1) “ແບບອຸດສາຫະກຳ”; PH IP Code, s. 112, IP Rules r. 1500; TH DA s. 3 “ແບບ”; VN IPL ມາດຕາ 64.3, DR r. 35.3.b(iii). ເບິ່ງເພີ່ມເຕີມຢູ່ ຄູ່ມື EUIPO ຄູ່ມື (ການຖອນ), ວັກ 5.5.2.1 “ເງື່ອນໄຂຂອງຄວາມອາດຈະໃນການເບິ່ງເຫັນ”.

3.2 ຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ແລະ ຕຳແໜ່ງທີ່ຕ່າງກັນຂອງຜະລິດຕະພັນ

ຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ແມ່ນຜະລິດຕະພັນທີ່ປະກອບດ້ວຍສ່ວນ ຫຼື ຊິ້ນສ່ວນຈຳນວນ ຫຼາຍ ທີ່ເອົາມາປະກອບເຂົ້າກັນເປັນອຸປະກອນ, ເຄື່ອງຈັກ ຫຼື ຜະລິດຕະພັນອື່ນໆທີ່ມີຂະໜາດໃຫຍ່ຂຶ້ນ. ສ່ວນ ແລະ ຊິ້ນສ່ວນເຫຼົ່ານີ້ ອາດຈະເອົາມາປະກອບເຂົ້າກັນຖອດອອກຈາກກັນ ແລະ ປ່ຽນແທນກັນໄດ້, ແຕ່ວ່າ ອາດຈະເບິ່ງ ເຫັນ ຫຼື ເບິ່ງບໍ່ເຫັນໃນຊ່ວງການນຳໃຊ້ ຫຼື ການໃຊ້ງານຕາມປົກກະຕິຂອງອຸປະກອນ.

ສ່ວນ ແລະ ຊິ້ນສ່ວນທີ່ຢູ່ໃນຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ຈະເບິ່ງບໍ່ເຫັນໂດຍຜູ້ທີ່ຈະຊື້ ຫຼື ຜູ້ໃຊ້ອຸປະກອນສຳເລັດຮູບ ໃນຊ່ວງການໃຊ້ງານຕາມປົກກະຕິ.

ກໍລະນີນີ້ ເກີດຂຶ້ນກັບອຸປະກອນເອເລັກໂຕຣນິກ ເຊັ່ນ: ຄອມພິວເຕີ ຫຼື ໂທລະສັບມືຖື ຫຼື ອຸປະກອນທີ່ມີກົນໄກ ເປັນຕົ້ນ ປັ໊ານ້ຳ ຫຼື ໃບພັດລົມ. ຜະລິດຕະພັນເຫຼົ່ານີ້ມີຄວາມສະຫຼັບຊັບຊ້ອນ ທີ່ປະກອບຂຶ້ນຈາກຫຼາຍສ່ວນ ແລະ ຫຼາຍຊິ້ນສ່ວນທີ່ເຊື່ອມຕໍ່ກັນ.

ຖ້າແບບອຸດສາຫະກຳທີ່ຖືການນຳສະເໜີໃນສິ່ງຂອງທີ່ເປັນສິນຄ້າທີ່ເປັນສ່ວນປະກອບ ຫຼື ເປັນຊິ້ນສ່ວນອຸປະກອນທີ່ມີຄວາມຊັບຊ້ອນ ແລະ ຜູ້ຊົມໃຊ້ສຸດທ້າຍ ເບິ່ງບໍ່ເຫັນສ່ວນ ຫຼື ຊິ້ນສ່ວນນັ້ນໃນລະຫວ່າງການນຳໃຊ້ອຸປະກອນດັ່ງກ່າວ ກໍອາດຈະຄັດຄ້ານການຈົດທະບຽນແບບອຸດສາຫະກຳສຳລັບສ່ວນປະກອບ ຫຼື ຊິ້ນສ່ວນນັ້ນໄດ້. ສິດຕໍ່ແບບອຸດສາຫະກຳ ຄວນຄວບຄຸມສະເພາະຜະລິດຕະພັນ ແລະ ສິ່ງຂອງທີ່ເປັນສິນຄ້າທີ່ຍັງຄົງເບິ່ງເຫັນໄດ້ທັງໝົດ ຫຼື ບາງສ່ວນໃນ ລະຫວ່າງການໃຊ້ງານ ຫຼື ການນຳໃຊ້[40].

ບໍ່ຈຳເປັນວ່າ ທຸກຊິ້ນສ່ວນຂອງສິ່ງຂອງທີ່ເປັນສິນຄ້າທີ່ຊັບຊ້ອນ ຈະຕ້ອງເບິ່ງເຫັນຕະຫຼອດເວລາ. ມັນຄົງພຽງພໍ ຖ້າຫາກເບິ່ງເຫັນສ່ວນໜຶ່ງໃນຕຳແໜ່ງໃດໜຶ່ງ ຫຼື ຂັ້ນຕອນໃດໜຶ່ງໃນການນຳໃຊ້ ຫຼື ການໃຊ້ງານຕາມປົກກະຕິຂອງຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ໃນຄຸນລັກສະນະທີ່ອາດຈະຮັບຮູ້ຄຸນລັກສະນະພື້ນຖານສຳຄັນ. ຕົວຢ່າງ ຖ້າຫາກການນຳໃຊ້ຕາມປົກກະຕິດັ່ງກ່າວ ມີການເປີດປິດຜະລິດຕະພັນທີ່ເປັນສິນຄ້າ, ຊິ້ນສ່ວນ ຫຼື ຄຸນລັກສະນະຂອງສິ່ງຂອງທີ່ເປັນສິນຄ້ານັ້ນ ທີ່ປະກົດໃຫ້ເຫັນໃນຂັ້ນຕອນການເປີດຕາມປົກກະຕິໃນຊ່ວງ ການນຳໃຊ້ ຄວນຖືເປັນຄຸນລັກສະນະທີ່ເບິ່ງເຫັນໄດ້ ເມື່ອພິຈະນາເຖິງການຈົດທະບຽນ ແລະ ຄວາມສົມບູນຕາມກົດໝາຍຂອງແບບອຸດສາຫະກຳ.

ຕົວຢ່າງການນຳສະເໜີສິ່ງຂອງທີ່ເປັນສິນຄ້າທີ່ມີຕຳແໜ່ງທີ່ຕ່າງກັນໃນຊ່ວງການນຳໃຊ້ຕາມປົກກະຕິ ສາມາດ ເບິ່ງໄດ້ຢູ່ຂ້າງລຸ່ມ, ໃນ ຂໍ້ 8.4 “ຮູບລັກສະນະຕ່າງໆຂອງຜະລິດຕະພັນ ໃນໄລຍະການໃຊ້

[40] ຂໍ້ກຳນົດທີ່ວ່າ ສ່ວນປະກອບ ແລະ ຊິ້ນສ່ວນຕ້ອງເບິ່ງເຫັນໄດ້ໃນຊ່ວງການໃຊ້ງານຕາມປົກກະຕິ ອາດຈະໃຊ້ບໍ່ໄດ້ໃນປະເທດສະມາຊິກ ອາຊຽນບາງປະເທດ

ງານ”.

ຕົວຢ່າງຕໍ່ໄປນີ້ ສະແດງໃຫ້ເຫັນສ່ວນ ແລະ ຊິ້ນສ່ວນຕ່າງໆທີ່ຢູ່ໃນຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ແລະ ມັກຈະເບິ່ງບໍ່ເຫັນໃນລະຫວ່າງການນຳໃຊ້ຜະລິດຕະພັນຕາມປົກກະຕິ:



ການລະບຸພາຍໃນສຳລັບຍານພາຫະນະ[41]

ຂໍ້ຕໍ່ສຳລັບຫຼັງຄາເລື່ອນສຳລັບລົດບັນທຸກ[42]



ຕົວແປງຄວາມຖີ່ [ໄຟຟ້າ][43]

[41] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM 085065

[42] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM/084724

[43] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM 085126



ພາຍໃນປະຕູລົດໃຫຍ່[44]

[44] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM/084240

4. ຄຸນລັກສະນະດ້ານ ເຕັກນິກ ແລະ ໜ້າທີ່ການໃຊ້ງານ

4.1 ເຫດຜົນໃນການປະຕິເສດ

ສິດຕໍ່ການອອກແບບອຸດສາຫະກຳ ປົກປ້ອງສະເພາະແຕ່ຮູບຄຸນລັກສະນະທີ່ສວຍງາມຂອງຜະລິດ ຕະພັນອັດຖະປະໂຫຍດເທົ່ານັ້ນ. ສິດດັ່ງກ່າວ ບໍ່ຄວບຄຸມເອົາຄຸນລັກສະນະດ້ານໜ້າທີ່ການໃຊ້ງານ ຫຼື ດ້ານເຕັກນິກ ຂອງຄຸນລັກສະນະຂອງຮູບຄຸນລັກສະນະທີ່ສ້າງການອອກແບບ[45].

ຄຸນລັກສະນະຂອງຮູບຊົງຜະລິດຕະພັນ ຈະບໍ່ຢູ່ໃນສິດໃນແບບອຸດສາຫະກຳ ຖ້າຫາກມີຜົນກະທົບດ້ານ ເຕັກນິກ ຫຼື ເຮັດໃຫ້ຜະລິດຕະພັນມີຂໍ້ໄດ້ປຽບດ້ານໜ້າທີ່ການໃຊ້ງານ ຫຼື ເສດຖະກິດທີ່ກ່ຽວຂ້ອງກັບ ຂະບວນ ການຜະລິດຂອງຜະລິດຕະພັນ, ການຂົນສົ່ງ ຫຼື ການຂ່ຽນຖ່າຍ ຫຼື ການໃຊ້ງານດ້ານ ຮ່າງກາຍ.

ຄຸນລັກສະນະຂອງຮູບຊົງ ທີ່ສອດຄ່ອງຕາມການພິຈາລະນາດ້ານການໃຊ້ງານ ຫຼື ໃຫ້ຜົນ ຫຼື ຂໍ້ໄດ້ປຽບ ດ້ານ ເຕັກນິກທີ່ມີຄ່າເທົ່າກັບ 'ການແກ້ໄຂບັນຫາດ້ານເຕັກນິກ' ຫຼື ສິ່ງປະດິດ. ຄຸນລັກສະນະດັ່ງກ່າວ ສາມາດຮຽກຮ້ອງສິດ ໃນຄຳຮ້ອງຂໍຈົດທະບຽນສິດທິບັດສິ່ງປະດິດ ຫຼື ສິດທິບັດ ຫຼື ການຈົດທະບຽນ ຜະລິດຕະພັນອັດຖະປະໂຫຍດ.

ເຫດຜົນທີ່ຢູ່ເບື້ອງຫຼັງສິ່ງດັ່ງກ່າວນີ້ກໍ່ຄື ການແກ້ໄຂດ້ານເຕັກນິກ ບໍ່ຄວນໄດ້ຮັບການຄຸ້ມຄອງແບບ ຜູກຂາດ ຖ້າຫາກບໍ່ເປັນໄປຕາມເງື່ອນໄຂ ແລະ ຂັ້ນຕອນການພິຈາລະນາກວດສອບທີ່ເຂັ້ມງວດທີ່ກຳ ນົດຂຶ້ນສຳລັບສິ່ງປະດິດ ແລະ ເນື້ອໃນສຳຄັນທາງເຕັກນິກອື່ນໆ. ມັນຕ່າງຈາກແບບອຸດສາຫະກຳ ການເຂົ້າເຖິງສິ່ງປະດິດ ແລະ ການແກ້ໄຂດ້ານເຕັກນິກອື່ນໆແຕ່ຫົວທີ ໃຫ້ຖືວ່າມີຄວາມສຳຄັນຢ່າງຍິ່ງ ຕໍ່ການພັດທະນາທາງເຕັກໂນໂລຊີ ແລະ ເສດຖະກິດ.

ເນື່ອງຈາກເປັນເລື່ອງນະໂຍບາຍຂອງລັດ ຈຶ່ງຄວນໃຫ້ສິດຕໍ່ຊັບສິນທາງປັນຍາທີ່ເປັນເອກະສິດແກ່ ຮູບຊົງທີ່ກຳນົດຂຶ້ນໃນທາງເຕັກນິກຜ່ານລະບົບສິດທິບັດເທົ່ານັ້ນ (ເປັນຕົ້ນ ການປົກປ້ອງຜະລິດຕະ

[45] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 2(1) "ແບບອຸດສາຫະກຳ" (a) ແລະ (b); KH ມາດຕາ 90; LA IPL ມາດຕາ 22.1; MY DA, s. 3(1) "ແບບອຸດສາຫະກຳ" (a) ແລະ (b); PH IP Code, s. 113.2, IP Rules r. 1501(a); SG DA s. 2(1) "ແບບອຸດສາຫະກຳ" (a) ແລະ (b); VN IPL ມາດຕາ 64.1, r. 33.7.b(i), 35.3.b. ເບິ່ງເພີ່ມເຕີມຢູ່ໃນ ຄູ່ມື EUIPO (ການຖອນ), ວັກ 5.3 ແລະ 5.5.2.1.

ພັນອັດຖະປະໂຫຍດ), ຊຶ່ງມີຊຸດເງື່ອນໄຂ ແລະ ຂໍ້ກຳນົດດ້ານກົດໝາຍທີ່ເໝາະສົມໃນການປະເມີນວ່າສົມຄວນໄດ້ຮັບເອກະສິດ ຫຼືບໍ່. ດັ່ງນັ້ນ ນະ�โยบายຂອງລັດ ຈຶ່ງກຳນົດວ່າ ຄວນມີການຄຸ້ມຄອງສິ່ງປະດິດສະເພາະຈາກການແຂ່ງຂັນໃນຕະຫຼາດ (ເປັນຕົ້ນ ໂດຍສິດທິບັດ) ເມື່ອເປັນໄປຕາມເງື່ອນໄຂທີ່ກຳນົດ.

ຄຸນລັກສະນະທີ່ກຳນົດຂຶ້ນໃນດ້ານໜ້າທີ່ການໃຊ້ງານ ແລະ ດ້ານເຕັກນິກຂອງຮູບຊົງ ອາດຈະບໍ່ສາມາດ ໄດ້ຮັບການປົກປ້ອງແບບອຸດສາຫະກຳ ເຖິງວ່າຈະມີຮູບຊົງດ້ານໜ້າທີ່ການໃຊ້ງານທີ່ເປັນທາງເລືອກຫຼືບໍ່ ໂດຍຈະ ໃຊ້ຫຼັກການ ແລະ ເຫດຜົນໃນການບໍ່ລວມເອົາຄຸນລັກສະນະດ້ານໜ້າທີ່ການໃຊ້ງານໄວ້ໃນການປົກປ້ອງແບບອຸດສາ ຫະກຳ ກັບຮູບຊົງອື່ນໆ ທີ່ຕັດສິນຈາກການພິຈາລະນາທາງເຕັກນິກຢ່າງເທົ່າທຽມກັນ.

ຜົນທີ່ເກີດຂຶ້ນໃນພາກປະຕິບັດຕົວຈິງຈາກການບໍ່ລວມເອົາການແກ້ໄຂດ້ານເຕັກນິກໃນແບບ
ອຸດສາຫະກຳ ເຂົ້າໃນການປົກປ້ອງແບບອຸດສາຫະກຳ ເປັນຕົ້ນ ໃນກໍລະນີທີ່ຮູບລັກສະນະ ຫຼື ຮູບຊົງ ໂດຍລວມຂອງຜະລິດຕະພັນ ຫຼື ຄຸນລັກສະນະພື້ນຖານສຳຄັນທັງໝົດຂອງຮູບລັກສະນະຖືກກຳນົດຂຶ້ນຈາກການພິຈາລະນາດ້ານເຕັກນິກ ຫຼື ໜ້າທີ່ການໃຊ້ງານແຕ່ພຽງຢ່າງດຽວ. ເຮົາຈະບໍ່ສາມາດຈົດທະບຽນຮູບຊົງນັ້ນເປັນແບບອຸດສາຫະກຳໄດ້ ເຖິງວ່າ ຜະລິດຕະພັນອັດຖະປະໂຫຍດສ່ວນໃຫຍ່ ຈະປ່ອຍໃຫ້ນັກອອກແບບມີອິສະຫຼະໃນການໃຊ້ເສລີພາບທາງສິລະປະ ແລະ ເພີ່ມຄຸນຄ່າດ້ານຄວາມສວຍງາມແກ່ຮູບຊົງຂອງຜະລິດຕະພັນ, ແຕ່ວ່າບັນດານັກກວດສອບຄວນຄັດຄ້ານການຈົດທະບຽນແບບອຸດສາຫະກຳ ໃນກໍລະນີທີ່ຮູບລັກສະນະຜະລິດຕະພັນຕອບສະໜອງສະເພາະໜ້າທີ່ການໃຊ້ງານເທົ່ານັ້ນ.

ຕົວຢ່າງ, ຮູບຊົງຜະລິດຕະພັນຕໍ່ໄປນີ້ ອາດຈະຖືກປະຕິເສດການຈົດທະບຽນແບບອຸດສາຫະກຳ ແລະ ການຈົດທະບຽນນີ້ ອາດຈະຖືກປະກາດລົບລ້າງ ຍ້ອນວ່າ ຄຸນລັກສະນະພື້ນຖານສຳຄັນທັງໝົດຂອງຮູບລັກສະນະຖືກກຳນົດຈາກຂໍ້ກຳນົດດ້ານເຕັກນິກ ຫຼື ການພິຈາລະນາດ້ານການໃຊ້ງານພຽງຢ່າງດຽວ:

ຮູບພາບມາຈາກ:

http://www.centralfasteners.co.uk/acatalog/Online_Catalogue_Hoses_Fittings_240.html ແລະ http://www.landwide-screw.com/en/product/HEX-HEAD/Self_Drilling_Screw_Hex_Head-001.html

ຄານ [ການກໍ່ສ້າງ][46]

4.2 ການປະເມີນໜ້າທີ່ການໃຊ້ງານ

ໃນການພິຈາລະນາວ່າ ເຫດຜົນຂອງການປະຕິເສດ (ຫຼື ການລົບລ້າງ) ໃນດ້ານໜ້າທີ່ການໃຊ້ງານ ຈະມີຜົນບັງຄັບຫຼືບໍ່ນັ້ນ ນັກກວດສອບຈະຕ້ອງພິຈາລະນາວ່າ ຈຸດປະສົງດ້ານໜ້າທີ່ ຫຼື ອັດຖະປະ�โຫຍດຂອງຜະລິດຕະພັນແມ່ນຫຍັງ. ຄວນພິຈາລະນາການຊີ້ບອກ ແລະ ການຈັດໝວດຜະລິດຕະພັນຈາກຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ຫຼື ຜູ້ຖືສິດຕໍ່ການຈົດທະບຽນ. ນອກຈາກນັ້ນ ນັກກວດສອບຍັງສາມາດພິຈາລະນາເອກະສານອື່ນໆ ທີ່ຖືກເປີດເຜີຍໃນສ່ວນທີ່ກ່ຽວຂ້ອງກັບຜະລິດຕະພັນ, ເປັນຕົ້ນ ການຍື່ນຄຳຮ້ອງຂໍຈົດທະບຽນສິດທິບັດສິ່ງປະດິດ ຫຼື ຜະລິດຕະພັນສຳລັບຜະລິດຕະພັນດຽວກັນ ທີ່ເກີດຂຶ້ນພ້ອມກັນໃນປະເທດ ຫຼື ຕ່າງປະເທດ ແລະ ສື່ໂຄສະນາທີ່ເຜີຍແຜ່ໂດຍຜູ້ຜະລິດ ຫຼື ຜູ້ຈຳໜ່າຍຜະລິດຕະພັນ.

ຕ້ອງມີການປະເມີນລັກສະນະດ້ານເຕັກນິກ ຫຼື ຜົນໃນດ້ານໜ້າທີ່ການໃຊ້ງານຂອງຄຸນລັກສະນະແບບອຸດສາຫະກຳນີ້ຢ່າງພາວະວິໄສດ້ານເຕັກນິກ. ການຮັບຮູ້ຂອງຜູ້ບໍລິໂພກ ຫຼື ຜູ້ໃຊ້ທົ່ວໄປໃນດ້ານໜ້າທີ່ການໃຊ້ງານດ້ານເຕັກນິກຂອງຄຸນລັກສະນະຂອງຮູບລັກສະນະຂອງອຸປະກອນ ຈະບໍ່ກ່ຽວຂ້ອງກັບຈຸດປະສົງດັ່ງກ່າວນີ້.

ຄວນຖືວ່າ ຮູບຊົງມີລັກສະນະດ້ານໜ້າທີ່ໃນກໍລະນີຕໍ່ໄປນີ້ ໂດຍສະເພາະ:

- ຮູບຊົງ ເປັນສິ່ງທີ່ຈຳເປັນໃນການເຮັດໃຫ້ຜະລິດຕະພັນສາມາດໃຊ້ງານໄດ້ຕາມຈຸດປະສົງທີ່

[46] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM/086395

ວາງໄວ້ ຫຼື ຮູບຊົງແບບກາຍະສາດສຳລັບຜະລິດຕະພັນດັ່ງກ່າວ;

- ຮູບຊົງ ເຮັດໃຫ້ມີການຜະລິດ ຫຼື ການປະກອບສິນຄ້າທີ່ມີປະສິດທິພາບຫຼາຍຂຶ້ນ ຫຼື ປະຢັດ ຫຼາຍຂຶ້ນ (ເຊັ່ນ: ປະຢັດວັດຖຸດິບ ຫຼື ພະລັງງານ);
- ຮູບຊົງ ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງ ຫຼື ການເກັບສິນຄ້າ;
- ຮູບຊົງ ເຮັດໃຫ້ຜະລິດຕະພັນມີຄວາມແຂງແຮງຫຼາຍຂຶ້ນ ຫຼື ເຮັດວຽກໄດ້ດີຂຶ້ນ ຫຼື ມີຄວາມ ທົນທານ ຫຼາຍຂຶ້ນ;
- ຮູບຊົງ ທີ່ເຮັດໃຫ້ຜະລິດຕະພັນສາມາດເຂົ້າກັບ ຫຼື ເຊື່ອມຕໍ່ຜະລິດຕະພັນອື່ນໄດ້.

ຍັງຄວນມີການຄັດຄ້ານຈາກການພິຈາລະນາກ່ຽວກັບໜ້າທີ່ການໃຊ້ງານ ໂດຍບໍ່ຄຳນຶງວ່າ ຄຸນ ລັກສະນະດ້ານໜ້າທີ່ນັ້ນ ສາມາດແທນທີ່ຄຸນລັກສະນະດ້ານການນຳໃຊ້ທີ່ເປັນທາງເລືອກໄດ້ຫຼືບໍ່. ໃນ ນີ້ ບໍ່ສາມາດເຮັດໃຫ້ ການຂັດຄ້ານຕົກໄປ ເຖິງວ່າ ຈະມີຮູບຊົງອື່ນໆທີ່ມີໜ້າທີ່ການໃຊ້ງານທຽບເທົ່າ ກັນ ຫຼື ໃຫ້ຜົນ ແລະ ມີຂໍ້ດີຄືກັນ.

ການບໍ່ພິຈາລະນາໜ້າທີ່ການໃຊ້ງານ ຍ້ອນຂໍ້ເທັດຈິງທີ່ວ່າ ບໍ່ມີຄຸນລັກສະນະໃດຂອງຜະລິດຕະພັນ ທີ່ ສ້າງ ຂຶ້ນຢ່າງອິສະຫຼະ ໂດຍນັກອອກແບບທີ່ມີຈຸດປະສົງເພີ່ມຄຸນຄ່າດ້ານຄວາມສວຍງາມ ແຕ່ວ່າທຸກ ຄຸນລັກສະນະ ແມ່ນກຳນົດຈາກຈຸດປະສົງດ້ານໜ້າທີ່ການໃຊ້ງານຜະລິດຕະພັນ ແລະ ນີ້ເປັນປັດໃຈ ດຽວທີ່ເຮັດໃຫ້ນຳມາພິຈາ ລະນາ. ໃນກໍລະນີດັ່ງກ່າວ ມັນບໍ່ສຳຄັນວ່າຈະເກີດຜົນໃນດ້ານໜ້າທີ່ການ ໃຊ້ງານຫຼືບໍ່ ຈາກການໃຊ້ຄຸນລັກສະນະ ດ້ານເຕັກນິກອື່ນໆ ທີ່ເປີດເຜີຍໃນສາດແຫ່ງສິລະປະ.

ຮູບຊົງທີ່ຖືກເປີດເຜີຍ ແລະ ຖືກຮຽກຮ້ອງສິດໃນເອກະສານສິດທິບັດການປະດິດ ຫຼື ໃນວັນນະກຳທາງ ເຕັກນິກ ທີ່ກ່ຽວຂ້ອງກັບປະເພດຜະລິດຕະພັນທີ່ຈະຈົດທະບຽນແບບອຸດສາຫະກຳ ຄວນຖືວ່າມີໜ້າທີ່ ການໃຊ້ງານ ເນື່ອງ ຈາກເລື່ອງທີ່ອ້າງໃນເອກະສານສິດທິບັດການປະດິດນັ້ນ ເປັນການແກ້ໄຂທາງ ດ້ານເຕັກນິກ.

ຕົວຢ່າງ: ຮູບຊົງຕໍ່ໄປນີ້ ມີໜ້າທີ່ການໃຊ້ງານສຳລັບຜະລິດຕະພັນທີ່ລະບຸໄວ້:



"ເກີບແຕະທີ່ມີສາຍ ທີ່ສ້າງຂຶ້ນມາ ແລະ ວິທີໃຊ້ງານ"[47]



"ຫວີສຳລັບຫວີຜົມໃຫ້ເປັນລອນ ແລະ ວິທີການນຳໃຊ້"[48]

ຮູບຊົງທີ່ມີໜ້າທີ່ການໃຊ້ງານ ປະເພດທີ່ອາດຈະບໍ່ເໝາະສົມໃນການຈົດທະບຽນແບບອຸດສາຫະກຳ ມີ ຄື ການອອກແບບພື້ນຜິວ ທີ່ມີໜ້າທີ່ໃນການຈັບຍຶດ, ການດຶງ ຫຼື ຜົນທາງການຍະພາບ ຫຼື ດ້ານ ເຕັກນິກອື່ນໆ. ການອອກແບບພື້ນຜິວດັ່ງກ່າວ ອາດຈະໜ້າເພິ່ງພໍໃຈໃນດ້ານຄວາມສວຍງາມໂດຍ ບັງເອີນ ຫຼື ເປັນການຕົບແຕ່ງກໍບໍ່ອາດຈະຫຼຸດພົ້ນຈາກການຄັດຄ້ານການຈົດທະບຽນດ້ວຍເຫດຜົນ ກ່ຽວກັບໜ້າທີ່ການໃຊ້ງານ (ຖ້າມີ) (ເບິ່ງເພີ່ມເຕີມຢູ່ ຂໍ້ 4.3, ຢູ່ຂ້າງລຸ່ມ).

[47] ຕົວຢ່າງໄດ້ມາຈາກ ເອກະສານສິທິບັດຂອງສະຫະລັດອາເມລິກາ US09089184 ສາມາດເຂົ້າເບິ່ງໄດ້ທີ່ patentscope.wipo.int/search/en

[48] ຕົວຢ່າງໄດ້ມາຈາກ ເອກະສານສິທິບັດ PCT/EP2014/056817 ສາມາດເຂົ້າເບິ່ງໄດ້ທີ່ patentscope.wipo.int/search/en

ຕົວຢ່າງ, ລວດລາຍພາຍນອກຕໍ່ໄປນີ້ ບໍ່ສາມາດຮຽກຮ້ອງສິດເປັນແບບອຸດສາຫະກຳສຳລັບຢາງລົດໄດ້ ຖ້າຮູບຊົງ ແລະ ຮູບລັກສະນະຫາກຖືກກຳນົດຈາກການໃຊ້ງານແຕ່ພຽງຢ່າງດຽວ:

[ຮູບມາຈາກ

http://www.cdxetextbook.com/steersusp/wheelsTires/construct/treaddesign. html]

4.3 ຂໍ້ຫ້າມການໃຊ້ງານທີ່ໂດດເດັ່ນກວ່າ ຄວາມສວຍງາມຂອງຜະລິດຕະພັນ

ການທີ່ຄຸນລັກສະນະດ້ານໜ້າທີ່ການໃຊ້ງານຂອງຮູບຊົງທີ່ຖືກກຳນົດຈາກການພິຈາລະນາດ້າເຕັກນິກ ແຕ່ພຽງຢ່າງດຽວ ຫຼື ການພິຈາລະນາຈາກຄວາມໜ້າດຶງດູດຈາກຄວາມສວຍງາມ ກໍບໍ່ອາດຫຼີກເວັ້ນ ຂໍ້ຈຳກັດດ້ານການປົກປ້ອງ ຍ້ອນມັນກ່ຽວຂ້ອງກັບໜ້າທີ່ການໃຊ້ງານ.

ຖ້າຮູບຊົງໂດຍລວມຂອງຜະລິດຕະພັນທີ່ຮຽກຮ້ອງສິດໃນຄຳຮ້ອງຂໍຈົດທະບຽນ ຫາກມີຄວາມຈຳເປັນ ໃນໜ້າທີ່ການໃຊ້ງານ ຫຼື ຖືກກຳນົດຈາກໜ້າທີ່ດ້ານເຕັກນິກແຕ່ພຽງຢ່າງດຽວ, ນັກກວດສອບຄວນ ຄັດຄ້ານຄຳຮ້ອງຂໍ ຈົດທະບຽນໂດຍບໍ່ຕ້ອງພິຈາລະນາຄຸນຄ່າດ້ານຄວາມສວຍງາມຂອງຮູບລັກສະນະ ຜະລິດຕະພັນ. ຖ້າຮູບຊົງ ນັ້ນຫາກໄດ້ຮັບການຈົດທະບຽນເປັນແບບອຸດສາຫະກຳແລ້ວ ການຈົດ ທະບຽນນັ້ນຄວນຖືກຖອນ, ຍົກເລີກ ຫຼື ລົບລ້າງ ຍ້ອນມັນກ່ຽວຂ້ອງກັບໜ້າທີ່ການໃຊ້ງານ.

ຕົວຢ່າງ, ຮູບຊົງຂອງກ້ຽງຫັນລົມ ອາດຈະມີຄວາມໜ້າເພິ່ງພໍໃຈດ້ານຄວາມສວຍງາມ (ເບິ່ງເພີ່ມເຕີມຢູ່ ຂ້າງລຸ່ມ). ເຖິງຢ່າງໃດກໍຕາມ, ຖ້າທຸກອົງປະກອບ ແລະ ລາຍລະອຽດຂອງຮູບຊົງໃນຄຸນລັກສະນະແຕ່ ລະດ້ານຂອງ ອຸປະກອນ ຫາກຖືກກຳນົດຈາກການພິຈາລະນາດ້ານໜ້າທີ່ການໃຊ້ງານ ແລະ ເຕັກນິກ ດ້ານກົນໄກ ແລະ ອາກາດ ພົນລະສາດ (aerodynamic) ກໍບໍ່ອາດຮຽກຮ້ອງສິດໃນຮູບລັກສະນະ ຜະລິດຕະພັນໃນຖານະແບບອຸດສາຫະກຳໄດ້. ໃນກໍລະນີດັ່ງກ່າວ, ນັກອອກແບບບໍ່ມີອິສະຫຼະໃນການ

ເຮັດວຽກດ້ານຄວາມສວຍງາມກັບຮູບຊົງຂອງຜະລິດຕະພັນ. ຮູບຊົງດັ່ງກ່າວ ສາມາດຮຽກຮ້ອງສິດຕໍ່ຮູບຊົງໃນຖານະສິ່ງປະດິດພາຍໃຕ້ກົດໝາຍວ່າດ້ວຍສິດທິບັດ ຖ້າຫາກເປັນໄປຕາມເງື່ອນໄຂກ່ຽວກັບຄວາມສາມາດໃນການຈົດທະບຽນສິດທິບັດ.

ຮູບມາຈາກ: https://grabcad.com/library/fan-for-turbofan-engine

4.4 ພາກສ່ວນຂອງອາໄຫຼ່ ແລະ ການເຊື່ອມຕໍ່ກັບພາຍນອກຂອງຜະລິດຕະພັນ

ສິດຕໍ່ແບບອຸດສາຫະກຳ ຈະບໍ່ຄວບຄຸມເອົາຄຸນລັກສະນະຂອງແບບທີ່ຈຳເປັນຕ້ອງຜະລິດຊ້ຳ ເພື່ອໃຫ້ຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳສາມາດຕິດຕັ້ງ, ເຊື່ອມຕໍ່ ຫຼື ປະກອບເຂົ້າຜະລິດຕະພັນອີກຊິ້ນໜຶ່ງ ທີ່ເປັນສ່ວນໜຶ່ງໃນນັ້ນ ເພື່ອວ່າທັງສອງສ່ວນຈະໄດ້ເຮັດໜ້າທີ່ຕາມທີ່ກຳນົດ[49]. ໃຫ້ຖືວ່າຄຸນລັກສະນະດັ່ງກ່າວ ເປັນຄຸນລັກສະນະດ້ານໜ້າທີ່ການໃຊ້ງານ ແລະ ຈະບໍ່ໄດ້ຮັບການຈົດທະບຽນແບບອຸດສາຫະກຳ. ອັນນີ້ ຈະມີການ ໃຊ້ມາດຕະຖານເລື່ອງໜ້າທີ່ການໃຊ້ງານ (ເບິ່ງເພີ່ມເຕີມຢູ່ ຂໍ້ 4.5, ຢູ່ຂ້າງລຸ່ມ).

ຕົວຢ່າງຕໍ່ໄປນີ້ສະແດງໃຫ້ເຫັນສ່ວນ (ກຽວລູກປືນ) ຂອງຜະລິດຕະພັນ (ຫົວທຽນ) ທີ່ບໍ່ສາມາດຮຽກຮ້ອງສິດໄດ້ ຍ້ອນມັນມີໜ້າທີ່ການໃຊ້ງານ ເນື່ອງຈາກມັນຊ່ວຍໃຫ້ຜະລິດຕະພັນຍຶດຕິດຢູ່

[49] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 2 ແລະ 10; KH Law, ມາດຕາ 90; LA IPL ມາດຕາ 22.1; MY DA, s. 3; PH IP Code, s. 113.2, IP Rules r. 1501(a); SG DA s. 2(1); VN IPL ມາດຕາ 64.1 ເບິ່ງເພີ່ມເຕີມ ຢູ່ ຄູ່ມືແນະນຳປະຕິບັດຂອງ EUIPO (ການຖອນ), ໝວດ 5.4

ໃນຕຳແໜ່ງໄດ້ ເພື່ອຈະສາມາດ ເຮັດວຽກໄດ້ຕາມຈຸດປະສົງທີ່ກຳນົດ[50].

ນອກຈາກນັ້ນ, ຮູບຊົງຂອງວັດຖຸໃດໜຶ່ງ ເຊັ່ນ: ອາໄຫຼ່ທີ່ຕ້ອງຜະລິດຊ້ຳ ທັງໃນຮູບແບບທີ່ມີຮູບຊົງ ແລະ ຮູບລັກສະນະທີ່ຄືກັນ ເພື່ອເຮັດໃຫ້ສ່ວນດັ່ງກ່າວເຂົ້າກັບຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ ທີ່ເປັນສ່ວນ ໜຶ່ງ ຊຶ່ງມີໜ້າທີ່ການໃຊ້ງານຢ່າງດຽວ. ດັ່ງນັ້ນ ຈຶ່ງບໍ່ໄດ້ຮັບການປົກປ້ອງໃນຖານະແບບ ອຸດສາຫະກຳ[51]. ກໍລະນີນີ້ ອາດໃຊ້ກັບອາໄຫຼ່ ແລະ ຊິ້ນສ່ວນຕ່າງໆໂດຍສະເພາະກັບສ່ວນທີ່ເອີ້ນວ່າ 'ສ່ວນທີ່ຕຳແລ້ວເຜ' ຂອງລົດຍົນ ແລະ ອຸປະກອນອື່ນທີ່ຈຳເປັນຕ້ອງຜະລິດຊ້ຳໃຫ້ອອກມາຄືກັນ ເພື່ອ ໃຫ້ເຂົ້າກັບສ່ວນທີ່ເຫຼືອຂອງຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ.

ຕົວຢ່າງຕໍ່ໄປນີ້ສະແດງໃຫ້ເຫັນແບບຂອງອາໄຫຼ່ທີ່ສາມາດຈົດທະບຽນໄດ້ ແຕ່ອາດຈະມີຂໍ້ຈຳກັດໃນ ເລື່ອງ ຄວາມເຂົ້າກັນໄດ້ 'ຕ້ອງເຂົ້າກັນໄດ້' ຫຼື 'ຕ້ອງຈັບຄູ່ກັນໄດ້', ໃນກໍລະນີທີ່ມີຂໍ້ຈຳກັດດັ່ງກ່າວ[52].





[50] ຕົວຢ່າງ ໄດ້ມາຈາກອົງການຄຸ້ມຄອງຊັບສິນທາງປັນຍາຂອງມາເລເຊຍ.

[51] ມາດຕະຖານ 'ຕ້ອງຈັບຄູ່ກັນໄດ້' ອາດຈະບໍ່ໄດ້ບັງຄັບໃຊ້ ໃນປະເທດສະມາຊິກ ASEAN ບາງປະເທດ.

[52] ຕົວຢ່າງໄດ້ມາຈາກ ການທົດທະບຽນແບບອຸດສາຫະກຳສາກົນ DM/053625





4.5 ການລວມເຂົ້າກັນຂອງຄຸນລັກສະນະການໃຊ້ງານ ແລະ ຄວາມສວຍງາມ

ອີງຕາມການອະທິບາຍຄຳສັບ ຖ້າແບບອຸດສາຫະກຳທີ່ຖືກນຳສະເໜີໃນວັດຖຸທີ່ມີລັກສະນະດ້ານໜ້າທີ່ການໃຊ້ງານ ແລະ ອັດຖະປະໂຫຍດ, ຄຸນລັກສະນະທັງໝົດລວມກັນຂອງແບບອຸດສາຫະກຳນີ້ ຄົງຈະຮັກສາໜ້າທີ່ການໃຊ້ງານ ແລະ ປະໂຫຍດດ້ານການນຳໃຊ້ຂອງວັດຖຸທີ່ເປັນສິນຄ້າທີ່ນຳສະເໜີແບບອຸດສາຫະກຳ. ແບບອຸດສາຫະກຳທີ່ດີ ຈະເພີ່ມຄຸນຄ່າດ້ານຄວາມສວຍງາມໃຫ້ແກ່ຮູບລັກສະນະຂອງສິ່ງຂອງທີ່ເປັນສິນຄ້າທີ່ມີປະໂຫຍດ ດ້ານການນຳໃຊ້ໂດຍບໍ່ຂັດຂວາງ, ບໍ່ເປັນອຸປະສັກ ຫຼື ບໍ່ແຊກແຊງໜ້າທີ່ການໃຊ້ງານ.

ເຖິງຢ່າງໃດກໍຕາມ, ສະເພາະແຕ່ໃນກໍລະນີທີ່ຮູບລັກສະນະຂອງຜະລິດຕະພັນໂດຍລວມທັງໝົດ ຖືກກຳນົດຈາກໜ້າທີ່ການໃຊ້ງານ ແລະ ບໍ່ມີຄຸນລັກສະນະໃດທີ່ໜັກໄປໃນດ້ານຄວາມສວຍງາມ ຄວນປະຕິເສດການຈົດທະບຽນແບບອຸດສາຫະກຳນີ້ (ເບິ່ງເພີ່ມເຕີມຢູ່ ຂໍ້ 4.1, ຂ້າງເທິງ).

ໂດຍສ່ວນໃຫຍ່ແລ້ວ ແບບອຸດສາຫະກຳ ເປັນຕົ້ນ ຮູບລັກສະນະຂອງຜະລິດຕະພັນທີ່ມີປະໂຫຍດໃຊ້ສອຍ ຈະລວມເອົາຄຸນລັກສະນະດ້ານໜ້າທີ່ການໃຊ້ງານ ແລະ ຄຸນລັກສະນະດ້ານຄວາມສວຍງາມເຂົ້ານຳກັນ. ຄວາມຈິງແລ້ວ, ຄຸນລັກສະນະດຽວກັນນີ້ ອາດຈະມີໜ້າທີ່ການໃຊ້ງານ ແລະ ຄວາມສວຍງາມຄຽງຄູ່ກັນ ໃນກໍລະນີທີ່ ນັກອອກແບບໄດ້ອອກແບບຄຸນລັກສະນະເຫຼົ່ານີ້ ເພື່ອບັນລຸຈຸດປະສົງທັງສອງດ້ານ.

ດັ່ງນັ້ນ, ການປົກປ້ອງແບບອຸດສາຫະກຳ ຈຶ່ງບໍ່ກວມໄປຮອດຄຸນລັກສະນະຂອງຮູບລັກສະນະຂອງວັດຖຸທີ່ທີ່ມີໜ້າທີ່ການໃຊ້ງານ ເພາະວ່າ ຄຸນລັກສະນະດັ່ງກ່າວມີຄວາມຈຳເປັນໃນການເຮັດໃຫ້ວັດຖຸນັ້ນສາມາດເຮັດໜ້າ ທີ່ຂອງມັນ ຫຼື ຍ້ອນວ່າຄຸນລັກສະນະເຫຼົ່ານີ້ມີຂໍ້ດີອື່ນໆດ້ານເຕັກນິກ ຫຼື ດ້ານເສດຖະກິດ. ໃນທາງກົງກັນຂ້າມ, ຄຸນລັກສະນະຂອງຮູບລັກສະນະ ແລະ ຮູບຊົງທີ່ຢ່າງໜ້ອຍກໍໃນລະດັບໜຶ່ງ ທີ່ສອດຄ່ອງຕາມເຈຕະນາຂອງນັກອອກແບບ ໃນການເຮັດໃຫ້ຜະລິດຕະພັນມີມູມທີ່ເປັນຕາເບິ່ງຫຼາຍຂຶ້ນ ແມ່ນຈະຖືກຄັດຄ້ານບໍ່ໄດ້ ຕາມມາດຕະຖານ ດ້ານໜ້າທີ່ການນຳໃຊ້.

ໃນພາກປະຕິບັດຕົວຈິງ, ໝາຍຄວາມວ່າ ການທີ່ຄຸນລັກສະນະຢ່າງໜຶ່ງ ຫຼື ຫຼາຍຢ່າງຂອງແບບອຸດສາຫະກຳຂອງຜະລິດຕະພັນ ຈະບໍ່ສາມາດຮຽກຮ້ອງສິດໄດ້ຕາມກົດໝາຍว่าด้วยแบบอุดสาหะกำ ຈະບໍ່ເປັນການຍົກເລີກແບບທັງໝົດ ເມື່ອພິຈາລະນາການຈົດທະບຽນ ຫຼື ຄວາມສົມບູນຢ່າງຕໍ່ເນື່ອງຕາມກົດໝາຍ. ພຽງແຕ່ໃນກໍລະນີທີ່ພົບว่า ຄຸນລັກສະນະພື້ນຖານສຳຄັນທຸກດ້ານຂອງຮູບລັກສະນະຂອງຜະລິດຕະພັນ ຖືກກຳນົດຈາກໜ້າທີ່ການໃຊ້ງານ ພຽງແຕ່ຢ່າງດຽວ ແລະ ຂາດຄຸນລັກສະນະທີ່ບໍ່ກ່ຽວຂ້ອງກັບໜ້າທີ່ການໃຊ້ງານຢ່າງສິ້ນເຊີງ ຈະຕ້ອງມີການຄັດຄ້ານ ແລະ ປະຕິເສດ ຫຼື ຍົກເລີກການຈົດທະບຽນ.

ຕົວຢ່າງ ເກີບແລ່ນຕໍ່ໄປນີ້ສະແດງໃຫ້ເຫັນການອອກແບບທີ່ລວມເອົາຄຸນລັກສະນະດ້ານໜ້າທີ່ການໃຊ້ງານທີ່ຈຳເປັນເພື່ອປະໂຫຍດໃນດ້ານການເກາະ, ຄວາມສະຖຽນ ແລະ ການຍະສາດ ເຂົ້າກັບຄຸນລັກສະນະ ດ້ານຄວາມ ສວຍງາມທີ່ລວມເຂົ້າກັນ ເພື່ອເຮັດໃຫ້ຜະລິດຕະພັນໜ້າເບິ່ງ:

ພາກທີ 1. ເຫດຜົນຂອງການປະຫວັດ ຫຼື ການຍົກເລີກການຈົດທະບຽນ

ຮູບມາຈາກຈາກ [ຕາມລຳດັບ]

http://strengthrunning.com/2013/04/newton-gravity-running-shoe-review/, http://runblogger.com/2012/09/saucony-grid-type-a5-running-shoe.html,

ແລະ http://runblogger.com/2012/04/womens-running-shoe-reviews-merrell.html

ຄວນຈົດທະບຽນແບບອຸດສາຫະກຳ ທີ່ມີຄຸນລັກສະນະດ້ານໜ້າທີ່ການໃຊ້ງານ ແລະ ຄຸນລັກສະນະດ້ານ ຄວາມສວຍງາມລວມກັນ ຫຼື ມີຄຸນລັກສະນະໜຶ່ງຢ່າງ ຫຼື ຫຼາຍກວ່ານັ້ນ ທີ່ນັກອອກແບບຕັ້ງໃຈກຳນົດໄວ້ ເພື່ອ ໃຫ້ເປັນໄປຕາມຈຸດປະສົງດ້ານຄວາມສວຍງາມ. ເຖິງຢ່າງໃດກໍຕາມ, ອີງຕາມກົດໝາຍທີ່ມີຜົນບັງຄັບໃຊ້ນັ້ນ ການຈົດທະບຽນແບບອຸດສາຫະກຳ ທີ່ລວມຄຸນລັກສະນະທີ່ປະສົມປະສານກັນເຫຼົ່ານີ້ ຈະຄວບຄຸມເອົາສະເພາະແຕ່ຄຸນລັກສະນະດ້ານຄວາມສວຍງາມໃນການອອກແບບ ແຕ່ຈະບໍ່ຄວບຄຸມເອົາຄຸນລັກສະນະດ້ານໜ້າທີ່ການໃຊ້ງານ. ຄຸນລັກສະນະ ແລະ ອົງປະກອບຂອງແບບອຸດສາຫະກຳທີ່ມີໜ້າທີ່ການໃຊ້ງານ ຫຼື ມີຄວາມຈຳເປັນດ້ານເຕັກນິກ ຈະບໍ່ຄວບຄຸມໃນການຈົດທະບຽນ, ເຖິງວ່າຈະເຊື່ອມໂຍງເຂົ້າໃນແບບໂດຍລວມຂອງຜະລິດຕະພັນກໍຕາມ.

ອີກຜົນໄດ້ຮັບໜຶ່ງທີ່ຈະເກີດຂຶ້ນຈາກຫຼັກການນີ້ກໍຄື ບໍ່ຄວນພິຈາລະນາຄຸນລັກສະນະຂອງແບບອຸດສາຫະກຳທີ່ມີຄວາມຈຳເປັນດ້ານໜ້າທີ່ການໃຊ້ງານ ຫຼື ທີ່ຖືກກຳນົດຈາກການພິຈາລະນາດ້ານເຕັກນິກ ເມື່ອສົມທຽບກັບແບບອຸດສາຫະກຳທີ່ກຳລັງຢູ່ໃນການພິຈາລະນາກັບແບບອື່ນ (ກ່ອນໜ້າ ຫຼື ຕາມພາຍຫຼັງ). ບໍ່ຄວນນຳເອົາຄຸນລັກສະ ນະດ້ານໜ້າທີ່ການໃຊ້ງານ ແລະ ເຕັກນິກມາພິຈາລະນາໃນການພິຈາລະນາຄວາມໃໝ່ຂອງແບບອຸດສາຫະກຳ ຫຼື ຄວາມຄ້າຍຄືກັນ ລະຫວ່າງສອງແບບ ຫຼື ຫຼາຍກວ່ານັ້ນ ເຊັ່ນ: ຄຸນລັກສະນະທີ່ຢູ່ນອກຂອບເຂດແບບອຸດສາຫະກຳ.

ຕົວຢ່າງຕໍ່ໄປນີ້ ສະແດງໃຫ້ເຫັນການອອກແບບທີ່ປະກອບດ້ວຍຄຸນລັກສະນະດ້ານໜ້າທີ່ການໃຊ້ງານ ແລະ ຄຸນລັກສະນະດ້ານຄວາມສວຍງາມລວມກັນໃນຜະລິດຕະພັນທີ່ມີປະໂຫຍດໃຊ້ສອຍ[53]:

[53] ຕົວຢ່າງໄດ້ມາຈາກສຳນັກງານຊັບສິນອຸດສາຫະກຳຂອງປະເທດມາເລເຊຍ

ພາກທີ 1. ເຫດຜົນຂອງການປະຫີເສດ ຫຼື ການຍົກເລີກການຈົດທະບຽນ

5. ການຂັດແຍ່ງກັບສິດທີ່ເກີດຂຶ້ນກ່ອນໜ້າ

ຖ້າກົດໝາຍພາຍໃນປະເທດຫາກມີການກຳນົດກ່ຽວກັບເລື່ອງນີ້ໄວ້ ແບບອຸດສາຫະກຳອາດຈະບໍ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ ຖ້າການຈົດທະບຽນແບບອຸດສາຫະກຳ ຫຼື ການນຳໃຊ້ໃນທາງການຄ້າ ຫາກຂັດແຍ່ງ ກັບສິດຕໍ່ຊັບສິນທາງປັນຍາທີ່ໄດ້ຈົດທະບຽນກ່ອນໜ້ານີ້.

ຂໍ້ຂັດແຍ່ງອາດຈະເກີດຂຶ້ນ ໂດຍສະເພາະ ທີ່ກ່ຽວຂ້ອງກັບແບບອຸດສາຫະກຳທີ່ໄດ້ຈົດທະບຽນກ່ອນໜ້ານີ້ ຫຼື ເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນກ່ອນໜ້ານີ້ ຫຼື ເຄື່ອງໝາຍທີ່ມີຊື່ສຽງ, ລິຂະສິດ ທີ່ມີກ່ອນໜ້ານີ້ ໃນຜົນງານທີ່ໄດ້ຮັບການປົກປ້ອງ ຫຼື ສິດທີ່ມີຢູ່ໃນຊື່ຂອງບຸກຄົນ, ຮູບຂອງບຸກຄົນ ຫຼື ຮູບພາບ[54].

5.1 ສິດທີ່ເກີດຂຶ້ນກ່ອນ ຂອງແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ

ຖ້າແບບອຸດສາຫະກຳ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນຫາກຄືກັນກັບແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນກ່ອນໜ້ານີ້ ຫຼື ມີຄວາມແຕກຕ່າງຈາກແບບທີ່ໄດ້ຮັບການຈົດທະບຽນກ່ອນໜ້ານີ້ ສະເພາະດ້ານຄຸນລັກສະນະ ຫຼື ລາຍລະອຽດທີ່ບໍ່ໄດ້ສ້າງການຮັບຮູ້ໂດຍລວມທີ່ຕ່າງອອກໄປຕໍ່ຜູ້ໃຊ້ທີ່ໄດ້ຮັບຂໍ້ມູນ ຫຼື ຜູ້ບໍລິໂພກຂອງຜະລິດຕະພັນເຫຼົ່ານັ້ນ, ໂດຍທົ່ວໄປ ໜ່ວຍງານຮັບຜິດຊອບ (ຝ່າຍບໍລິຫານ ຫຼື ຕຸລາການ) ຄວນຄັດຄ້ານການຈົດທະ ບຽນ ຖ້າແບບອຸດສາຫະກຳນັ້ນຫາກໄດ້ຮັບການຈົດທະບຽນ. ການຈົດທະບຽນດັ່ງກ່າວ ອາດຈະຖືກຖອນ, ຍົກເລີກ ຫຼື ລົບລ້າງ.

ໜ່ວຍງານຮັບຜິດຊອບ ຄວນໃຊ້ມາດຕະຖານດຽວກັນ ທີ່ນຳໃຊ້ໃນການກຳນົດຄວາມໃໝ່ຂອງແບບອຸດສາຫະກຳ ໃນສ່ວນທີ່ກ່ຽວຂ້ອງກັບແບບທີ່ຖືກເປີດເຜີຍກ່ອນໜ້ານີ້, ໂດຍບໍ່ຈຳແນກວ່າຈະໄດ້ຮັບ ຫຼື ຍັງບໍ່ໄດ້ຮັບການຈົດທະບຽນ (ເບິ່ງເພີ່ມເຕີມຢູ່ ຂໍ້ 2).

ໜ່ວຍງານຮັບຜິດຊອບ ຄວນສັນນິຖານວ່າ ແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນກ່ອນໜ້ານັ້ນ

[54] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 9(2)(a), DR, 13, 14; MY DA, s. 12(2)(b); SG DA s. 5(2)(a), 27(2)(a), DR r. 11. ນອກຈາກນັ້ນ ເບິ່ງເພີ່ມເຕີມຢູ່ໃນ ຄູ່ມືຂອງ EUIPO (ການຖອນ), ຂໍ້ 5.6, 5.7 ແລະ 5.8

ມີຄວາມ ຖືກຕ້ອງ. ເຖິງຢ່າງໃດກໍຕາມ, ຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ຫຼື ຜູ້ຖືສິດຕໍ່ແບບອຸດສາຫະກຳທີ່ມີມາຕາມພາຍຫຼັງ ສາມາດໂຕ້ແຍ້ງໃນເລື່ອງຄວາມຖືກຕ້ອງຕາມກົດໝາຍສຳລັບການຈົດທະບຽນທີ່ເປັນພື້ນຖານໃນຂະບວນການພິຈາລະນາການຄັດຄ້ານ ຫຼື ການຍົກເລີກ.

5.2 *ສິດທີ່ເກີດຂຶ້ນກ່ອນ ຂອງເຄື່ອງໝາຍທີ່ມີລັກສະນະສະເພາະ*

ຖ້າແບບອຸດສາຫະກຳ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນ ຫາກຄືກັນກັບເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນກ່ອນໜ້ານີ້ ຫຼື ເຄື່ອງໝາຍການຄ້າທີ່ມີຊື່ສຽງ ຫຼື ມີຄວາມແຕກຕ່າງຈາກເຄື່ອງໝາຍການຄ້າດັ່ງກ່າວ ສະເພາະໃນເລື່ອງຄຸນລັກສະນະ ຫຼື ລາຍລະອຽດທີ່ຈະບໍ່ສ້າງການຮັບຮູ້ໂດຍລວມທີ່ແຕກຕ່າງຕໍ່ຜູ້ໃຊ້ທີ່ໄດ້ຮັບຂໍ້ມູນ ຫຼື ຜູ້ບໍລິໂພກໂດຍລວມຂອງຜະລິດຕະພັນເຫຼົ່ານັ້ນ, ໜ່ວຍງານຮັບຜິດຊອບ (ຝ່າຍບໍລິຫານ ຫຼື ຕຸລາການ) ຄວນຄັດຄ້ານ ການຈົດທະບຽນ. ຖ້າວ່າແບບອຸດສາຫະກຳດັ່ງກ່າວຫາກໄດ້ຮັບການຈົດທະບຽນແລ້ວ, ເຖິງວ່າຈະມີເຄື່ອງໝາຍການຄ້າທີ່ກຳລັງຂັດແຍ່ງກັນ, ການຈົດທະບຽນອາດຈະຖືກຖອນ, ຍົກເລີກ ຫຼື ລົບລ້າງຈາກອົງການຄຸ້ມຄອງ ຊັບສິນທາງປັນຍາ ຫຼື ໂດຍສານ.

ສະຖານະການດັ່ງກ່າວອາດຈະເກີດຂຶ້ນ ໃນກໍລະນີທີ່ເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນກ່ອນ ໜ້ານີ້ ຫຼື ເຄື່ອງໝາຍການຄ້າທີ່ມີຊື່ສຽງ ຫາກເປັນເຄື່ອງໝາຍສາມມິຕິ ຫຼື ເຄື່ອງໝາຍຮູບພາບ. ຮູບຊົງຂອງຜະລິດຕະພັນ, ສິ່ງທີ່ໃສ່ຜະລິດຕະພັນ ຫຼື ການຫຸ້ມຫໍ່ຜະລິດຕະພັນ ອາດຈະຖືວ່າເປັນເຄື່ອງໝາຍການຄ້າ ແລະ ສາມາດ ໄດ້ຮັບການຈົດທະບຽນສຳລັບບາງຜະລິດຕະພັນ, ຖ້າຫາກມີການປະຕິບັດຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍເຄື່ອງໝາຍການຄ້າ ໂດຍສະເພາະ ຂໍ້ກຳນົດກ່ຽວກັບລັກສະນະສະເພາະ ແລະ ການບໍ່ມີໜ້າທີ່ການໃຊ້ງານ.

ຖ້າຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳຫາກໃຊ້, ສຳເນົາ ຫຼື ປະກອບດ້ວຍ ເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນ ຫຼື ເຄື່ອງໝາຍທີ່ມີຊື່ສຽງ ທີ່ເປັນຂອງບຸກຄົນທີສາມ (ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ), ບຸກຄົນດັ່ງກ່າວອາດຈະຄັດຄ້ານການຈົດທະບຽນ ຫຼື ຮ້ອງຂໍໃຫ້ການຈົດທະບຽນດັ່ງກ່າວຖືກຖອນ, ຍົກເລີກ ຫຼື ລົບລ້າງ. ເຖິງຢ່າງໃດກໍຕາມ, ອົງການກວດສອບບໍ່ຄວນຄັດຄ້ານ ຖ້າຜູ້ຍື່ນຄຳຮ້ອງຂໍຈົດທະບຽນຫາກຂໍເປັນຜູ້ຖືສິດໃນເຄື່ອງໝາຍທີ່ມີກ່ອນໜ້ານີ້ ຫຼື ຍື່ນຫຼັກຖານເພື່ອສະແດງການຍິນຍອມ ໂດຍຜູ້ຖືສິດເຄື່ອງໝາຍການຄ້າ ໂດຍທີ່ ເຄື່ອງໝາຍນັ້ນ ອາດຈະລວມຢູ່ໃນການຈົດທະບຽນແບບອຸດສາຫະກຳ.

ເຄື່ອງໝາຍສາມມິຕິ ແລະ ເຄື່ອງໝາຍຮູບພາບທີ່ເປັນລວດລາຍພື້ນຕ່ຳໄປນີ້ ເປັນຕົວຢ່າງກ່ຽວກັບຮູບຊົງ ແລະ ຮູບລັກສະນະຜະລິດຕະພັນ ທີ່ຖືກຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ແຕ່ຍັງ

ສາມາດຈົດທະບຽນເປັນແບບອຸດສາຫະກຳສຳລັບຜະລິດຕະພັນທີ່ນຳສະເໜີໃນແບບອຸດສາຫະກຳ:

ຕົວຢ່າງໄດ້ມາຈາກຄູ່ມືການກວດສອບເຄື່ອງໝາຍການຄ້າຂອງຝີລິບປິນ, ໜ້າ 126.



ຕົວຢ່າງໄດ້ມາຈາກຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າສາກົນ ເລກທີ 1061835 ທີ່ຍື່ນພາຍໃຕ້ລະບົບ ມາດຣິດສຳລັບການຈົດທະບຽນເຄື່ອງໝາຍການຄ້າ.



ຮູບມາຈາກ: http://knitcrochetpat.com/burberry- pattern-background/ ແລະ http://www.dailymail.co.uk/femail/article- 2515445/Is-Burberry-losing-rights-infamous-checked-design-Fashion- house-threat.htmlຕາມລຳດັບ

ຮູບມາຈາກ http://vector-magz.com/search/louis- vuitton-pattern/ ແລະ http://www.mycolorfashion.com/201108/louis-vuitton- romance-pump-in-monogram-idylle.html ຕາມລຳດັບ

5.3 ສິດທີ່ເກີດຂຶ້ນກ່ອນໃນຜົນງານທີ່ມີລິຂະສິດ

ແບບອຸດສາຫະກຳ ອາດຈະມີລັກສະນະຂອງໜ້າທີ່ການໃຊ້ງານ ແລະ ຄວາມສວຍງາມລວມກັນ. ທຸກແບບອຸດສາຫະກຳຕາມແນວຄວາມຄິດດ້ານສິລະປະ ທີ່ນຳໃຊ້ກັບຜະລິດຕະພັນອັດຖະປະໂຫຍດ ຫຼື ສິ່ງຂອງທີ່ເປັນ ສິນຄ້າອຸດສາຫະກຳ ຫຼື ຫັດຖະກຳ. ສະນັ້ນຈຶ່ງເປັນເຫດຜົນທີ່ວ່າເປັນຫຍັງແບບອຸດສາຫະກຳຈຶ່ງຖືກຮັບຮູ້ຢູ່ໃນກົດ ໝາຍວ່າດ້ວຍລິຂະສິດວ່າເປັນ 'ຜົນງານສິລະປະປັບໃຊ້'[55].

ຜົນງານດ້ານສິລະປະຊຶ່ງເປັນທີ່ມາຂອງທຸກແບບອຸດສາຫະກຳ ອາດຈະຖືກສ້າງຂຶ້ນໂດຍມີຈຸດປະສົງນຳສະ ເໜີໃນຜະລິດຕະພັນອຸດສາຫະກຳ ຫຼື ອາດຈະຖືກສ້າງຂຶ້ນເພື່ອຈຸດປະສົງທາງສິລະປະແຕ່ພຽງຢ່າງດຽວ ແລະ ຕໍ່ມາ ຖືກນຳສະເໜີໃນສິ່ງຂອງທີ່ເປັນສິນຄ້າອັດຖະປະໂຫຍດ. ໃນທຸກກໍລະນີ, ຜູ້ສ້າງຜົນງານຈະໄດ້ຮັບສິດມາແຕ່ຕົ້ນຢູ່ ແລ້ວ ແລະ ສາມາດຄວບຄຸມການນຳໃຊ້ດັ່ງກ່າວທີ່ມີຕາມພາຍຫຼັງ.

ຖ້າຫາກບໍ່ໄດ້ໃຫ້ສິດດ້ານເສດຖະກິດຕໍ່ຜົນງານທີ່ເປັນພື້ນຖານຢ່າງພຽງພໍແກ່ຜູ້ຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ຜູ້ທີ່ຢູ່ໃນຕຳແໜ່ງກ່ອນໜ້ານີ້, ການຈົດທະບຽນອາດຈະຖືກຄັດຄ້ານ ຫຼື ຖືກຖອນໂດຍຜູ້ຖືລິຂະສິດ.

ນອກຈາກນັ້ນ, ຖ້າແບບອຸດສາຫະກຳຫາກຖືກຍື່ນຄຳຮ້ອງຂໍຈົດທະບຽນເຮັດຊ້ຳ ຫຼື ນຳສະເໜີຜົນງານ

[55] ເບິ່ງເພີ່ມເຕີມຢູ່ບົດບັນຍັດກ່ຽວກັບ 'ຜົນງານສິລະປະປະຍຸກ' ໃນກົດໝາຍວ່າດ້ວຍລິຂະສິດຂອງ BN, s. 2 ແລະ 6; KH ມາດຕາ 7(h); ID ມາດຕາ 12(1)(f); LA ມາດຕາ 92.1.1.9; MY, s. 3, 7(1)(c), 7(5) ແລະ 7(6); PH, s. 171.10; SG DA s. 2(1); TH s. 4; ແລະ VN IPL ມາດຕາ 14.g

ສິລະ ປະແບບປະຕິມາກຳ ຫຼື ແບບຮູບພາບ ຫຼື ຜົນງານສິລະປະປັບໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສິລະປິນ ຫຼື ນັກອອກແບບຜົນງານດັ່ງກ່າວ, ການຈົດທະບຽນອາດຈະຖືກຄັດຄ້ານ ໂດຍອີງການກວດ ສອບ (ຝ່າຍບໍລິຫານ ຫຼື ຕຸລາການ) ຈາກການຄັດຄ້ານຂອງຜູ້ຖືລິຂະສິດຕໍ່ຜົນງານດັ່ງກ່າວ. ຖ້າແບບ ອຸດສາຫະກຳຫາກໄດ້ຮັບການຈົດທະບຽນ, ການຈົດທະບຽນດັ່ງກ່າວ ອາດຈະຖືກຖອນ, ຍົກເລີກ ຫຼື ລົບລ້າງ ຕາມການຮ້ອງຂໍຂອງຜູ້ຖືສິດ.

6. ນະໂຍບາຍຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ

6.1 ການພິຈາລະນາເບື້ອງຕົ້ນ

ຄວນມີການກຳນົດກ່ຽວກັບການບົ່ງບອກສະເພາະ ລະຫວ່າງ ແນວຄິດໃນດ້ານໜຶ່ງແມ່ນ 'ນະໂຍບາຍ ຂອງລັດ' ແລະ 'ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ' ແລະ ອີກດ້ານໜຶ່ງ 'ຮີດຄອງປະເພນີອັນ ດີງາມຂອງຊາດ'.

'ນະໂຍບາຍຂອງລັດ' ແລະ 'ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ' ໝາຍເຖິງ ຂອບກົດໝາຍທົ່ວ ໄປ ຢູ່ລັດໃດໜຶ່ງ ຈົນຮອດເຫດຜົນ ແລະ ຈຸດປະສົງພື້ນຖານຂອງຂອບກົດໝາຍດັ່ງກ່າວ. ນອກຈາກ ນິຕິກຳທີ່ສະໜັບ ສະໜູນ ແລະ ບົດບັນຍັດຂອງຝ່າຍບໍລິຫານທີ່ມີຜົນບັງຄັບໃຊ້ຢູ່ພາຍໃນປະເທດແລ້ວ ຂອບກົດໝາຍຍັງລວມເອົາ ສົນທິສັນຍາສາກົນ ແລະ ພັນທະຕໍ່ສັນຍາສາກົນອື່ນໆ ທີ່ລັດສະມາຊິກ ເປັນພາຄີ, ຕະຫຼອດຮອດ ຫຼັກກົດໝາຍ ທີ່ຖືເອົາຄຳພີພາກສາເປັນບັນທັດຖານ. ແຫຼ່ງທີ່ມາຂອງກົດ ໝາຍເຫຼົ່ານີ້ສະທ້ອນ ແລະ ສະແດງໃຫ້ເຫັນນະໂຍບາຍ, ຫຼັກການພື້ນຖານ ແລະ ຄ່ານິຍົມຂອງລັດ ດັ່ງກ່າວ.

'ຮີດຄອງປະເພນີອັນດີງາມຂອງຊາດ' ເປັນຊຸດຫຼັກການທີ່ຍອມຮັບໂດຍທົ່ວໄປໃນສັງຄົມ ທີ່ກຳນົດ ແນວ ທາງປະຕິບັດ ແລະ ກົດການປະພຶດໃນສັງຄົມ ຫຼື ຊຸມຊົນໃດໜຶ່ງ. ຫຼັກການ ແລະ ລະບຽບການ ເຫຼົ່ານີ້ ບໍ່ໄດ້ອະທິ ບາຍໄວ້ໃນກົດໝາຍຝ່າຍບ້ານເມືອງ (positive legislation) ຫຼື ບົດບັນຍັດຂອງ ຝ່າຍບໍລິຫານ ແລະ ອາດຈະປ່ຽນແປງເປັນແຕ່ລະໄລຍະເມື່ອເວລາຜ່ານໄປ. ຫຼັກການ ແລະ ລະບຽບ ການເຫຼົ່ານີ້ ຂ້ອນຂ້າງແຕກຕ່າງກັນໃນ ແຕ່ລະປະເທດ ຫຼື ພາຍໃນເຂດ ແລະ ຊຸມຊົນຕ່າງໆຢູ່ປະເທດ ດຽວກັນ. ຫຼັກການ ແລະ ກົດດ້ານສິນທຳ ສະທ້ອນ ຄ່ານິຍົມທີ່ສັງຄົມພາຍໃນຊາດ ຫຼື ຊຸມຊົນ ຕ້ອງການຮັກສາໄວ້. ຮີດຄອງປະເພນີອັນດີງາມຂອງຊາດຖືກນຳໃຊ້ ຄຽງຄູ່ກັບບັນທັດຖານທາງກົດ ໝາຍຝ່າຍບ້ານເມືອງ ຊຶ່ງໂດຍທົ່ວໄປບໍ່ກ່ຽວຂ້ອງກັບປະເດັນ ຫຼື ລາຍລະອຽດ ປະເພດນີ້ ທີ່ເປັນຫົວຂໍ້ ຂອງ 'ຮີດຄອງປະເພນີອັນດີງາມຂອງຊາດ'.

ເນື່ອງຈາກ ການການອະທິບາຍຄຳສັບກ່ຽວກັບ 'ນະໂຍບາຍຂອງລັດ', 'ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ' ແລະ 'ຮີດຄອງປະເພນີອັນດີງາມຂອງຊາດ' ເປັນເລື່ອງພາຍໃນແຕ່ລະປະເທດ ຊຶ່ງອາດຈະຖືກພິຈາລະນາ ແລະ ຕັດສິນໂດຍອົງການທີ່ມີສິດອຳນາດພາຍໃນປະເທດເປັນກໍລະນີພາຍໃນປະເທດເປັນແຕ່ລະກໍລະນີ. ການກຳນົດວ່າສິ່ງໃດຂັດຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ມາດຕະຖານດ້ານຮີດຄອງປະເພນີອັນດີງາມຂອງຊາດທີ່ມີຢູ່ ຈະຕ້ອງຂຶ້ນກັບບໍລິບົດທາງການເມືອງ, ວັດທະນະທຳ ແລະ ສາສະໜາທີ່ມີຢູ່ໃນປະເທດທີ່ກ່ຽວຂ້ອງ[56].

ນອກຈາກນັ້ນ, ບັນດາປັດໃຈຕ່າງໆ ເຊັ່ນ: ລະດັບການລະເມີດທີ່ໄດ້ວາງແຜນໄວ້ກ່ອນ ທີ່ເກີດຈາກການນຳໃຊ້ເຄື່ອງ ໝາຍທີ່ກໍ່ໃຫ້ເກີດຄວາມບໍ່ພໍໃຈ ແລະ ຂະໜາດ ແລະ ພາກສ່ວນຂອງຊຸມຊົນທີ່ອາດຈະໄດ້ຮັບຜົນກະທົບຈາກ ເຄື່ອງໝາຍດັ່ງກ່າວ ແມ່ນບັນດາປັດໃຈຕ່າງໆ ທີ່ຈະຕ້ອງໄດ້ຮັບການພິຈາລະນາເປັນແຕ່ລະກໍລະນີ.

ນັກກວດສອບຄວນປະຕິເສດການຈົດທະບຽນແບບອຸດສາຫະກຳ ໃນກໍລະນີທີ່ພົບເຫັນການລະເມີດມາດຕະຖານດັ່ງກ່າວ ຕາມການກຳນົດຈາກການອ້າງອີງໃສ່ການຮັບຮູ້ຂອງຄົນໃນທ້ອງຖິ່ນນັ້ນ ແລະ ບໍລິບົດຂອງປະເທດ ໃນກໍລະນີທີ່ມີການກວດສອບຄຳຮ້ອງຂໍຈົດທະບຽນ.

6.2 ບັນຫາສະເພາະ

6.2.1 <u>ລັກສະນະຂອງແບບອຸດສາຫະກຳ</u>

ຖ້າກົດໝາຍພາຍໃນປະເທດຫາກກຳນົດກ່ຽວກັບເລື່ອງນີ້ໄວ້ ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ອາດຈະຖືກຄັດຄ້ານຈາກນັກກວດສອບ ຖ້າເຫັນວ່າການໃຊ້ປະໂຫຍດແບບອຸດສາຫະກຳດັ່ງກ່າວໃນທາງການຄ້າ ຫາກຂັດກັບນະໂຍບາຍຂອງລັດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ຂັດກັບຫຼັກການດ້ານຮີດຄອງປະເພນີອັນດີງາມຂອງຊາດຊຶ່ງເປັນທີ່ຍອມຮັບຢູ່ປະເທດທີ່ກ່ຽວຂ້ອງ.

ໃນກໍລະນີທີ່ເຫດຜົນດັ່ງກ່າວຫາກຖືກປະຕິເສດ ຄວນໝາຍເຖິງແບບອຸດສາຫະກຳ. ການປະຕິເສດຄວນອີງຕາມຂໍ້ເທັດຈິງທີ່ວ່າ ຮູບຊົງ ຫຼື ລວດລາຍທີ່ຂໍຈົດທະບຽນແບບອຸດສາຫະກຳ ໃນຕົວມັນເອງນັ້ນ ຂັດກັບນະໂຍ ບາຍຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ຫຼັກການດ້ານຮີດຄອງປະເພນີອັນດີງາມຂອງຊາດທີ່ຖືກຍອມຮັບ. ເຫດຜົນສຳລັບການປະຕິເສດ ຫຼື ການລົບລ້າງ ກໍຍັງຈະ

[56] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 11; KH DL ມາດຕາ 93; ID DL ມາດຕາ 4, DR, r. 25(1); LA IPL ມາດຕາ 22.2; MY DA, s. 13; PH IP Rules r. 1501(c); SG DA s. 6; TH DA 58(1); VN IPL ມາດຕາ 8.1. ເບິ່ງເພີ່ມເຕີມຢູ່ ຄູ່ມືຂອງ EUIPO (ຄຳຮ້ອງ), ຂໍ້ 4.2.

ຖືກນຳມາໃຊ້ ໃນກໍລະນີທີ່ການນຳໃຊ້ ໃນທາງການຄ້າຂອງຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳ ຫາກຂັດກັບນະ�โยบายຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ.

ຕົວຢ່າງ, ແບບຕໍ່ໄປນີ້ ບໍ່ສາມາດຈົດທະບຽນໄດ້ໃນປະເທດໄທ ເນື່ອງຈາກຂັດກັບຫຼັກຮີດຄອງປະເພນີອັນດີງາມຂອງຊາດ ແລະ ມາດຕະຖານຄວາມເໝາະສົມທີ່ມີຢູ່[57]:

ການປະຕິເສດດ້ວຍເຫດຜົນຂອງນະ�โยบายຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ ຍັງອາດຈະເກີດຂຶ້ນໃນກໍລະນີທີ່ບັນຫາບໍ່ໄດ້ຢູ່ທີ່ແບບອຸດສາຫະກຳນີ້ ແຕ່ຢູ່ທີ່ການນຳໃຊ້ສິ່ງຂອງທີ່ເປັນສິນຄ້າທີ່ນຳສະເໜີແບບອຸດສາຫະກຳນີ້. ກໍລະນີຂອງສັນຍາລັກ ຫຼື ຮູບພາບບາງຢ່າງເປັນທີ່ ເຄົາລົບນັບຖືຢ່າງສູງ ຫຼື ມີການໃຊ້ທີ່ຈຳກັດໃນບາງປະເທດ. ການໃຊ້ສັນຍາລັກດັ່ງກ່າວ (ຕົວຢ່າງ, ສັນຍາລັກຂອງລາຊະວົງ) ຫຼື ຮູບພາບ (ຕົວຢ່າງ, ຮູບກ່ຽວກັບຄວາມສຳຄັນທາງສາສະໜາ) ທີ່ຖືກນຳສະເໜີໃນຜະລິດຕະພັນທີ່ມີການຄ້າຂາຍໃນ ຕະຫຼາດ ຈະຖືວ່າສ້າງຄວາມບໍ່ພໍໃຈ ແລະ ຂັດກັບນະ�โยบายຂອງລັດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ທີ່ມີການຍອມຮັບ.

ຕົວຢ່າງ, ແບບຕໍ່ໄປນີ້ບໍ່ສາມາດຈົດທະບຽນໄດ້ ເນື່ອງຈາກມັນຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ[58].

[57] ຕົວຢ່າງໄດ້ມາຈາກ ຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນແບບສິດທິບັດຂອງປະເທດໄທ, ໜ້າ 65

[58] ຕົວຢ່າງໄດ້ມາຈາກອົງການຄຸ້ມຄອງຊັບສິນອຸດສາຫະກຳຂອງມາເລເຊຍ.

ແບບຕໍ່ໄປນີ້ ບໍ່ສາມາດຈົດທະບຽນຢູ່ປະເທດໄທ ເນື່ອງຈາກມັນ ຂັດກັບຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ນະ�โยบายของลัด[59]:

> "ການອອກແບບທີ່ມີຮູບຊົງ ທີ່ຊີ້ໃຫ້ເຫັນການບໍ່ເຄົາລົບສາສະໜາ ພະມະຫາກະສັດ ຫຼື ລາຊະວົງ ຊຶ່ງເປັນທີ່ເຄົາລົບນັບຖືຂອງສາສະນິກະຊົນ ເຊັ່ນ: ການໃຊ້ພະພຸດທະຮູບເປັນສິ່ງປະດັບ ຕົບແຕ່ງ ຫຼື ເຄື່ອງໃຊ້ ເຊັ່ນ ເຊີງທຽນ ຫຼື ຖານโต๊ะ ຫຼື ການອອກແບບເຄື່ອງລາງເພື່ອໂຊກລາບ ຫຼື ຂອງຂັງ:"

6.2.2 <u>ລັກສະນະຂອງຜະລິດຕະພັນທີ່ມີການນຳໃຊ້ແບບອຸດສາຫະກຳ</u>

ໃນບາງກໍລະນີ ຄຸນລັກສະນະຂອງຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳ ອາດຈະກະທົບຕໍ່ຄວາມສາມາດໃນການຈົດທະບຽນແບບອຸດສາຫະກຳ. ອາດຈະສ້າງຄວາມແຕກຕ່າງລະຫວ່າງ ກໍລະນີທີ່ຜະລິດຕະພັນ ຫາກຜິດກົດໝາຍ ຫຼື ຂັດກັບສິນລະທຳໃນຕົວມັນເອງ ກັບ ກໍລະນີທີ່ຜະລິດຕະພັນຕ້ອງ

[59] ຕົວຢ່າງໄດ້ມາຈາກ ຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບອຸດສາຫະກຳຜະລິດຕະພັນຂອງປະເທດໄທ, ໜ້າ 64.

ມີການຄວບຄຸມ, ມີການ ອະນຸມັດກ່ອນການເຮັດການຕະຫຼາດ ຫຼື ມີການຫ້າມເພື່ອຄວບຄຸມການນຳເຂົ້າ, ການຜະລິດ ຫຼື ການຈຳໜ່າຍ ພາຍໃນໃນປະເທດ.

ໃນກໍລະນີທີ່ຜະລິດຕະພັນຈຳນວນໜຶ່ງ ຫຼື ທັງໝົດ ທີ່ນຳສະເໜີແບບອຸດສາຫະກຳ ຫາກບໍ່ສາມາດ ຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ໃຊ້ປະ�โຫຍດທາງການຄ້າພາຍໃນປະເທດໄດ້ ໃນກໍລະນີທີ່ມີການຍື່ນຄຳຮ້ອງຂໍຈົດທະບຽນ ເນື່ອງຈາກຂໍ້ຈຳກັດດ້ານຂັ້ນຕອນທາງກົດໝາຍ ຫຼື ບໍລິຫານ ແມ່ນສາມາດ ອະນຸຍາດໃຫ້ການຈົດທະບຽນແບບອຸດສາ ຫະກຳເພື່ອດຳເນີນການຕໍ່ໄດ້. ຕົວຢ່າງ, ເປັນເລື່ອງປົກກະຕິ ທີ່ກົດໝາຍພາຍໃນປະເທດຈະກຳນົດເຫດຜົນດ້ານ ຄວາມປອດໄພ, ສຸຂະພາບ ແລະ ສິ່ງແວດລ້ອມ ທີ່ ຜະລິດຕະພັນບາງຢ່າງຕ້ອງໄດ້ຮັບການອະນຸຍາດ ເພື່ອການຄວບ ຄຸມ ຫຼື ການອະນຸຍາດໃຫ້ດຳເນີນ ການຕະຫຼາດ ກ່ອນທີ່ຈະສາມາດຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ໃຊ້ປະ�โຫຍດດ້ານ ການຄ້າພາຍໃນ ປະເທດ.

ນອກຈາກນັ້ນ ປະກົດວ່າ ໃນບາງປະເທດ, ການນຳເຂົ້າ ແລະ ການຈຳໜ່າຍສິນຄ້າສະເພາະ ຫຼື ການນຳ ສະເໜີການບໍລິການບາງຢ່າງ ແມ່ນຖືກກົດໝາຍຈຳກັດ ຫຼື ຫ້າມທັງໝົດ.

ໃນກໍລະນີທີ່ມີຂໍ້ສົງໄສ ນັກກວດສອບສາມາດປະຕິເສດທີ່ຈະຟັງຄວາມເຫັນຂອງຜູ້ຍື່ນຄຳຮ້ອງ ຫຼື ຊີ້ ແຈງ ຂອບເຂດຄຳຮອງຂໍຈົດທະບຽນ.

6.2.3 <u>ການພິຈາລະນາດ້ານຄວາມສວຍງາມ</u>

ແບບອຸດສາຫະກຳ ໃຊ້ກັບຜະລິດຕະພັນທີ່ມີປະโຫຍດໃຊ້ສອຍ ໂດຍມຫວັງທີ່ຈະເຮັດໃຫ້ແບບຂອງ ຜະລິດຕະພັນດຶງດູດໃຈຜູ້ບໍລິโພກຫຼາຍຂຶ້ນ. ຄຸນຄ່າທີ່ແບບອຸດສາຫະກຳເພີ່ມໃຫ້ແກ່ສິ່ງຂອງທີ່ເປັນ ສິນຄ້າອັດຖະ ປະโຫຍດ ຄືຄຸນຄ່າໃນການເພີ່ມຄວາມໜ້າເປັນເຈົ້າຂອງ ແລະ ດັ່ງນັ້ນ ລາຄາທີ່ ຜະລິດຕະພັນອາດຈະຖືກ ກຳນົດຂຶ້ນ ສະເພາະບາງຕະຫຼາດ ຫຼື ປະຊາຊົນບາງກຸ່ມ.

ເຖິງຢ່າງໃດກໍຕາມ, ບໍ່ຄວນພິຈາລະນາມາດຕະຖານ ແລະ ເກນດ້ານຄວາມສວຍງາມໃນເລື່ອງການ ຈົດທະ ບຽນແບບອຸດສາຫະກຳ. ນັກກວດສອບບໍ່ຄວນພິຈາລະນາມາດຕະຖານ ແລະ ເກນດ້ານຄວາມ ສວຍງາມໃນເລື່ອງ ຂອງຄວາມນິຍົມດີ ຫຼື ບໍ່ດີ ທີ່ເປັນມາດຕະຖານສ່ວນຕົວຂອງປະເທດ ຫຼື ຕ່າງປະເທດ, ແຟຊັນ ຫຼື ການຍອມຮັບ ໄດ້ທາງຄວາມສວຍງາມມາຕັດສິນວ່າ

ມີການປະຕິບັດຕາມມາດຕະຖານດ້ານນະ�โยบายຂອງລັດ ຫຼື ຣິດຄອງປະເພນີອັນດີງາມຂອງຊາດອັນ ດີງາມ.

7. ຂໍ້ຫ້າມຕາມລະບຽບການສະເພາະ

7.1 ຂໍ້ຫ້າມຕາມລະບຽບການ

ຖ້າກົດໝາຍ ຫຼື ລະບຽບການທີ່ມີຜົນບັງຄັບໃຊ້ພາຍໃນປະເທດ ຫາກອະນຸຍາດໃຫ້ມີຂໍ້ຈຳກັດການປົກປ້ອງ ອຸປະກອນ, ຮູບພາບ, ການນຳສະເໜີທີ່ລະບຸໄວ້ ຫຼື ວັດຖຸສິ່ງຂອງອື່ນໃນການຈົດທະບຽນແບບອຸດສາຫະກຳ, ນັກກວດສອບຄວນໃຊ້ຂໍ້ຈຳກັດການປົກປ້ອງໂດຍໜ້າທີ່ ແລະ ຄັດຄ້ານຄຳຮ້ອງຂໍຈົດທະບຽນທີ່ມີເລື່ອງທີ່ຖືກຈຳກັດ ການປົກປ້ອງ.

ເຫດຜົນຂອງການປະຕິເສດ ເປັນສ່ວນເສີມຂໍ້ຈຳກັດການປົກປ້ອງ ດ້ວຍເຫດຜົນດ້ານຄວາມເປັນລະບຽບ ຮຽບຮ້ອຍຂອງສັງຄົມ ຫຼື ນະໂຍບາຍຂອງລັດ. ມີການກຳນົດ ແລະ ເຜີຍແຜ່ກ່ຽວກັບ ຂໍ້ຈຳກັດການປົກປ້ອງ ຕາມ ຂໍ້ຫ້າມທີ່ກົດໝາຍໄດ້ກຳນົດໄວ້ກ່ອນແລ້ວ ຊຶ່ງແຕກຕ່າງຈາກຂໍ້ຈຳກັດການປົກປ້ອງຕາມຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ນະໂຍບາຍຂອງລັດ ຊຶ່ງຈຳເປັນຕ້ອງມີການຕີຄວາມໝາຍ ແລະ ນຳໃຊ້ເປັນແຕ່ລະກໍລະນີ[60].

ຕົວຢ່າງ, ໃນປະເທດຕໍ່ໄປນີ້ ເນື້ອໃນທີ່ລະບຸໄວ້ ບໍ່ລວມຢູ່ໃນການຈົດທະບຽນແບບອຸດສາຫະກຳທັງໝົດ ຫຼື ບາງສ່ວນ:

<u>ບຣູໄນ ດາຣຸສາລາມ</u>

(a) ຜົນງານດ້ານປະຕິມາກຳ (ນອກເໜືອຈາກຮູບຫຼໍ່ ຫຼື ຫຸ່ນແບບທີ່ນຳໃຊ້ ຫຼື ເຈຕະນານຳໃຊ້ເປັນຫຸ່ນແບບ ຫຼື ລວດລາຍ ທີ່ຈະຖືກຜະລິດຊ້ຳໂດຍຜ່ານຂະບວນການອຸດສາຫະກຳ);

(b) ໂລ້ຕິດຜາ, ຫຼຽນປະເພດຕ່າງໆ;

[60] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DR, r. 4; PH IP Rules r. 1501(b); SG DA s. 7(1) ແລະ (3), DR r. 9; TH DA s. 58(2); VN IPL ມາດຕາ 64.2.

(c) ສິ່ງພິມທີ່ມີລັກສະນະທາງວັນນະກຳ ຫຼື ສິລະປະກຳ, ເປັນຕົ້ນ ຫຼັກປົກປື້ມ, ປະຕິທິນ, ໃບຢັ້ງຢືນ, ຄູປ່ອງ, ລວດລາຍເຄື່ອງນຸ່ງຫົ່ມ, ບັດອວຍພອນ, ສະຫຼາກ, ແຜ່ນໂຄສະນາ, ແຜນທີ່, ແຜນຜັງ, ໄພ້, ບັດໄປສະນີ, ສະແຕມ, ການໂຄສະນາທາງການຄ້າ, ແບບຟອມ ແລະ ບັດທາງການຄ້າ, ການໂອນເງິນ ແລະ ສິ່ງຂອງທີ່ຄ້າຍຄືກັນ[61].

ຟິລິບປິນ

ການຕົບແຕ່ງພື້ນຜິວທີ່ຢູ່ແຍກຈາກຜະລິດຕະພັນອຸດສາຫະກຳ ຫຼື ຫັດຖະກຳ[62].

ສິງກະ�โป

(a) ຜົນງານປະຕິມານກຳ (ນອກຈາກຮູບຫຼໍ່ ຫຼື ຫຸ່ນແບບທີ່ນຳໃຊ້ ຫຼື ເຈຕະນານຳໃຊ້ເປັນຫຸ່ນແບບ ຫຼື ລວດລາຍເພື່ອຜະລິດຊ້ຳ ໂດຍຜ່ານຂະບວນການອຸດສາຫະກຳ);

(b) ໂລ້ຕິດຝາ, ຫຼຽນປະເພດຕ່າງໆ;

(c) ສິ່ງພິມທີ່ມີລັກສະນະທາງວັນນະກຳ ຫຼື ສິລະປະກຳ, ເປັນຕົ້ນ ຫຼັກປົກປື້ມ, ປະຕິທິນ, ໃບຢັ້ງຢືນ, ຄູປ່ອງ, ລວດລາຍເຄື່ອງນຸ່ງຫົ່ມ, ບັດອວຍພອນ, ສະຫຼາກ, ແຜ່ນໂຄສະນາ, ແຜນທີ່, ແຜນຜັງ, ໄພ້, ບັດໄປສະນີ, ສະແຕມ, ການໂຄສະນາທາງການຄ້າ, ແບບຟອມ ແລະ ບັດທາງການຄ້າ, ການໂອນເງິນ ແລະ ສິ່ງຂອງທີ່ຄ້າຍຄືກັນ[63].

ຫວຽດນາມ

ຮູບຄຸນລັກສະນະການກໍ່ສ້າງທາງໂຍທາ ຫຼື ອຸດສາຫະກຳ[64]

---

[61] BN DR r. 4.

[62] PH IP ລະບຽບການ r. 1501(b).

[63] SG DA s. 7(3) ແລະ DR r. 9.

[64] VN IPL ມາດຕາ 64.2.

7.2 ສັນຍາລັກປະຈຳລັດ ແລະ ເຄື່ອງໝາຍທາງລັດຖະການ

ກົດໝາຍອາດຈະກຳນົດວ່າ ແບບອຸດສາຫະກຳ ບໍ່ສາມາດຈົດທະບຽນໄດ້ ຖ້າຫາກປະກອບດ້ວຍ ຫຼື ບັນຈຸເອົາສັນຍາລັກ, ເຄື່ອງໝາຍປະຈຳຕະກູນ, ເຄື່ອງຍົດ, ລຳດັບຍົດອັດສະວິນ, ເຄື່ອງລາຊະອິສະລິຍາກອນ, ທຸງ ຫຼື ອຸປະກອນຂອງປະເທດ, ລັດ, ເມືອງ, ອົງການຈັດຕັ້ງລັດ, ຄະນະກຳມະການຕາມກົດໝາຍ ຫຼື ສະຖາບັນທາງ ການອື່ນໆ.

ໃນກໍລະນີດັ່ງກ່າວ, ໂດຍດຳເນີນການຕາມໜ້າທີ່ ນັກກວດສອບຕ້ອງຮຽກໃຫ້ຜູ້ຍື່ນຄຳຮ້ອງຂໍຈົດທະບຽນສະແດງຫຼັກຖານການສະແດງຄວາມຍິນຍອມການຈົດທະບຽນ ແລະ ນຳໃຊ້ການເຄື່ອງໝາຍ ຫຼື ເຄື່ອງໝາຍດັ່ງກ່າວ. ນັກກວດສອບຕ້ອງປະເມີນຄວາມເປັນໄປໄດ້ຢ່າງສົມເຫດສົມຜົນວ່າ ເອກະສານສະແດງຄວາມຍິນຍອມນັ້ນ ມີຄວາມຖືກຕ້ອງ ແລະ ຄົນທີ່ໃຫ້ຄວາມຍິນຍອມມີສິດທີ່ຈະເຮັດໄດ້ຫຼື ບໍ່[65].

ຕົວຢ່າງ, ໃນປະເທດບຣູໄນດາຣູສາລາມ ສັນຍາລັກຕໍ່ໄປນີ້ ບໍ່ສາມາດຈົດທະບຽນເປັນແບບອຸດສາຫະກຳໄດ້[66]:

1. ທຸງພຣະອິສະຣິຍະຍົດ, ການາມ ແລະ ຕາປະທັບທາງການຂອງອົງສຸນຕານ ແລະ ສົມເດັດພຣະຣາຊາທິບໍດີ ແລະ ສົມເດັດພະລາຊິນີຣາຍາອິສະຕຣີ.

2. ຕາປະທັບປະຈຳລັດ ບຣູໄນດາຣູສາລາມ.

3. ການາມຂອງລັດບຣູໄນດາຣຸສາລາມ.

4. ການສັນຍາລັກ ຫຼື ການຳຄັນຂອງອົງການສະຫະປະຊາຊາດ.

5. ລຳດັບຍົດ, ເຄື່ອງຍົດ, ຫຼຽນ, ຫຼຽນເຂັມ ແລະ ເຄື່ອງຣາຊະອິສະຣິຍາພອນ ຈາກສຸນຕານ.

---

[65] ຕົວຢ່າງ ເບິ່ງຢູ່ໃນ BN DR r. 12 ແລະ Chap. 94 s.3(c), Schedule; MY DR r.16; SG DA s. 7(3) ແລະ DR r. 10

[66] ໝວດ 94 -- ການເຄື່ອງໝາຍ ແລະ ຊື່ (ການປ້ອງກັນການໃຊ້ງານທີ່ບໍ່ເໝາະສົມ) 20 ປີ 1967, 3 ປີ 1974 - ແກ້ໄຂເພີ່ມເຕີມໂດຍ: S 128/80 S 163/81.

6. ການສັນຍາລັກ ຫຼື ການສຳຄັນຂອງອົງການຕຳຫຼວດອາຊະຍາກຳລະຫວ່າງປະເທດ (Interpol).

7. ການສັນຍາລັກ, ເຄື່ອງໝາຍປະຈຳຕົວ ຫຼື ທຸງປະຈຳຕຳແໜ່ງຂອງບໍລິຫານຂອງບຣູໄນ ດາຣູສາລາມ [...]

ແບບທີ່ປະກອບດ້ວຍການເຄື່ອງໝາຍຂອງປະເທດ ຫຼື ລັດ ທີ່ບໍ່ມີການອະນຸຍາດຢ່າງຖືກຕ້ອງ ຄວນຖືກຄັດຄ້ານ ຈາກເຈົ້າໜ້າທີ່ກວດສອບໂດຍໜ້າທີ່. ຕົວຢ່າງ, ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ປະກອບດ້ວຍການເຄື່ອງ ໝາຍ ເຊັ່ນ: ການດັ່ງຕໍ່ໄປນີ້ຂອງບັນດາປະເທດສະມາຊິກ ASEAN ແລະ ອົງການຈັດຕັ້ງ ASEAN, ບໍ່ຄວນໄດ້ຮັບ ອະນຸຍາດໃຫ້ດຳເນີນການ ຖ້າຫາກບໍ່ໄດ້ຮັບການຍິນຍອມຢ່າງຖືກຕ້ອງຈາກອົງການທີ່ມີສິດອຳນາດ:

BERSEKUTU
BERTAMBAH MUTU

REPUBLIKA NG PILIPINAS

MAJULAH SINGAPURA

VIỆT NAM

asean

7.3 ການນຳສະເໜີບຸກຄົນ ແລະ ບຸກຄົນທີ່ມີຕຳແໜ່ງສູງ

ກົດໝາຍອາດຈະຫ້າມບໍ່ໃຫ້ມີການຈົດທະບຽນແບບອຸດສາຫະກຳ ທີ່ຜະລິດຊ້ຳ ຫຼື ນຳສະເໜີຮູບບຸກຄົນ ທີ່ຍັງມີຊີວິດຢູ່ ຫຼື ຫາກໍເສຍຊີວິດຢ່າງຊັດເຈນ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກບຸກຄົນທີ່ກ່ຽວຂ້ອງ ຫຼື ຕົວແທນທີ່ຖືກຕ້ອງຕາມກົດໝາຍ. ໃນກໍລະນີນີ້ ບໍ່ວ່າໂດຍຕຳແໜ່ງໜ້າທີ່ ຫຼື ເມື່ອມີການຮ້ອງຂໍຈາກຝ່າຍໜຶ່ງ ໃນຂະບວນການພິຈາລະນາການຄັດຄ້ານ, ສຳນັກງານຊັບສິນທາງປັນຍາຄວນຄັດຄ້ານການຈົດທະບຽນດັ່ງກ່າວ ແລະ ໃຫ້ຜູ້ຍື່ນຄຳຮ້ອງຂໍຈົດທະບຽນສິ່ງຫຼັກຖານການສະແດງຄວາມຍິນຍອມຈາກບຸກຄົນ ຫຼື ຜູ້ຕາງໜ້າຢ່າງຖືກຕ້ອງຕາມ ກົດໝາຍ[67].

ນອກຈາກນັ້ນ, ກົດໝາຍອາດຈະກຳນົດວ່າ ຮູບ ຫຼື ການນຳສະເໜີບຸກຄົນທີ່ມີຕຳແໜ່ງສູງບາງຄົນ ຊຶ່ງເປັນ ທີ່ຮູ້ຈັກຂອງສັງຄົມ ອາດຈະບໍ່ລວມຢູ່ໃນແບບອຸດສາຫະກຳ. ໃນກໍລະນີດັ່ງກ່າວ ອົງການກວດສອບ ໂດຍຕຳແໜ່ງ ໜ້າທີ່ ຄວນໃຫ້ຜູ້ຍື່ນຄຳຮ້ອງຂໍຈົດທະບຽນສິ່ງຫຼັກຖານສະແດງການອະນຸຍາດຢ່າງຖືກຕ້ອງຈາກອົງການທີ່ສິດອຳນາດ.

ຕົວຢ່າງ, ຢູ່ປະເທດໄທ ການນຳສະເໜີບຸກຄົນທີ່ມີຕຳແໜ່ງສູງຈາກທາງການຕໍ່ໄປນີ້ ບໍ່ສາມາດຈົດທະບຽນແບບອຸດສາຫະກຳ:

> ຮູບຂອງເຈົ້າມະຫາຊີວິດ ຫຼື ຮູບປັ້ນເຈົ້າມະຫາຊີວິດ ຫຼື ສະມາຊິກລາຊະວົງ ທີ່ຈະສ້າງເປັນຮູບເຄົາລົບ ບູຊາ ຫຼື ການຕົບແຕ່ງ ເຊັ່ນ: ເຊົ້າຊີວິດລາຊະການທີ V ແລະ ອື່ນໆ[68]

[67] ຕົວຢ່າງ ເບິ່ງເພີ່ມເຕີມຢູ່ SG DA s. 7(3) ແລະ DR r. 11

[68] ຕົວຢ່າງມາຈາກຄູ່ມືການກວດສອບຄຳຮ້ອງຂໍຮັບສິດທິບັດແບບຜະລິດຕະພັນຂອງປະເທດໄທ, ໜ້າ 65

8. ການນຳສະເໜີແບບ

8.1 ຂໍ້ກຳນົດທົ່ວໄປ

ການນຳສະເໜີແບບ ເປັນພື້ນຖານສຳຄັນຂອງຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ. ເຖິງວ່າ ເງື່ອນໄຂ ທີ່ໄດ້ກຳນົດໄວ້ ທີ່ຕ້ອງຍື່ນພ້ອມຄຳຮອງຂໍຈົດທະບຽນ ແຕ່ກໍກ່ຽວຂ້ອງໂດຍກົງກັບຂໍ້ກຳນົດ ທີ່ເປັນເນື້ອໃນສຳຄັນ ກ່ຽວກັບການປະຕິບັດຕາມການອະທິບາຍຄຳສັບກ່ຽວກັບແບບອຸດສາຫະກຳ, ຄວາມສາມາດໃນການປະຍຸກໃຊ້ທາງອຸດສາຫະກຳຂອງແບບອຸດສາຫະກຳນີ້ ແລະ ຄວາມສາມາດໃນ ການເບິ່ງເຫັນຂອງແບບອຸດສາຫະກຳ[69].

ການນຳສະເໜີທີ່ພຽງພໍ, ຄົບຖ້ວນ ແລະ ຊັດເຈນສຳລັບການນຳສະເໜີຂອງແຕ່ແບບອຸດສາຫະກຳ ທີ່ຢູ່ ໃນ ຄຳຮ້ອງຂໍຈົດທະບຽນຈະມີຄວາມສຳຄັນຢ່າງຍິ່ງຕໍ່ການໄດ້ຮັບການຈົດທະບຽນ ແລະ ໃນພາຍຫຼັງ ທີ່ຈະເປັນສິ່ງທີ່ ກຳນົດຂອບເຂດການປົກປ້ອງແບບອຸດສາຫະກຳ.

ການນຳສະເໜີ ຈາກຜູ້ຍື່ນຄຳຮ້ອງ ຄວນມີພຽງພໍໃນການນຳສະເໜີຕົວຜະລິດຕະພັນຢ່າງຊັດເຈນ ແລະ ກົງໄປກົງມາຈົນບໍ່ຈຳເປັນຕ້ອງມີຕົວຢ່າງຜະລິດຕະພັນ ໂດຍປົກກະຕິ ສຳນັກງານບໍ່ຄວນຂໍຕົວຢ່າງຂອງ ຜະລິດຕະພັນ ທີ່ນຳສະເໜີແບບອຸດສາຫະກຳ.

ວັນຍື່ນຄຳຮ້ອງຂໍຈົດທະບຽນຄວນເປັນໄປຕາມການປະຕິບັດຕາມຂໍ້ກຳນົດກ່ຽວກັບການນຳສະເໜີ ແບບໃນລະດັບທີ່ຫຼາຍພໍ. ຖ້າການນຳສະເໜີຫາກມີຄວາມບົກຜ່ອງໃນດ້ານໃດກໍຕາມ ຫ້ອງການຈົດ ທະບຽນຄວນຄັດຄ້ານການຈົດທະບຽນ.

ຜູ້ຍື່ນຄຳຮ້ອງຂໍຈົດທະບຽນອາດຈະໄດ້ຮັບອະນຸຍາດໃຫ້ແກ້ໄຂຂໍ້ບົກຜ່ອງ ໂດຍການສົ່ງສິ່ງທີ່ຖືກປັບປຸງ ຕາມທີ່ກຳນົດ. ເຖິງຢ່າງໃດກໍຕາມ, ບໍ່ຄວນມີການຮັບຄຳຮ້ອງຈົດທະບຽນແບບອຸດສາຫະກຳທີ່ມີການ ເພີ່ມເຕີມໃໝ່ ຫຼື ຄຸນລັກສະນະການອອກແບບທີ່ແຕກຕ່າງຈາກເດີມ ທີ່ໄດ້ສ້າງຂຶ້ນຕອນທີ່ມີການແກ້

[69] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 15(2)(b), DR r. 6(2)(b), 7; KH DL ມາດຕາ 95; ID DL ມາດຕາ 11(4)(a), DR r. 1; LA IPL ມາດຕາ 32.3; MY DA, s. 14(1)(b), DR 10, 15; PH IP Code, s. 114.1(d), DR r. 1510(c); SG DA s. 11(2)(c), DR r. 14; TH DA s. 59(1), DR r. 17, 19; VN IPL ມາດຕາ 103, DR r. 33.5.d, 33.6. ເບິ່ງເພີ່ມເຕີມຢູ່ ຄູ່ມື EUIPO (ຄຳຮ້ອງ), ຂໍ້ 3.3.

ໄຂຂໍ້ບົກຜ່ອງຂອງການ ນຳສະເໜີເດີມ.

8.2 ຮູບແບບການນຳສະເໜີ

ການນຳສະເໜີ ອາດຈະປະກອບດ້ວຍຮູບແຕ້ມ, ຮູບຖ່າຍ ຫຼື ພາບອອກແບບທີ່ສ້າງດ້ວຍຄອມພິວເຕີ. ຖ້າ ຫາກການຍື່ນການນຳສະເໜີນັ້ນໃນແບບເອເລັກໂຕຣນິກ, ເອກະສານເອເລັກໂຕຣນິກ ຕ້ອງ ສອດຄ່ອງຕາມຂໍ້ກຳນົດ ດຽວກັນກັບພາບທີ່ມີຢູ່ໜ້າຈໍ ຫຼື ພິມອອກມາ.

8.2.1 <u>ພື້ນຫຼັງຂອງການນຳສະເໜີ</u>

ຄວນນຳສະເໜີພື້ນຫຼັງແບບລຽບ ໂດຍສະເພາະ ເມື່ອການນຳສະເໜີເຮັດຜ່ານຮູບຖ່າຍ, ພື້ນຫຼັງຕ້ອງ ເປັນ ກາງພໍທີ່ຈະເຮັດໃຫ້ເສັ້ນຮອບຂອບຜະລິດຕະພັນ ຫຼື ສ່ວນຂອງຜະລິດຕະພັນທີ່ນຳສະເໜີແບບ ໄດ້ ຕັດກັບສະພາບ ແວດລ້ອມຂອງພື້ນຫຼັງຢ່າງຊັດເຈນ.

ພື້ນຫຼັງບໍ່ຄວນລົບກວນ ຫຼື ຂັດຂວາງຄວາມຊັດເຈນຂອງແບບທີ່ຖືກຮຽກຮ້ອງສິດ, ຊຶ່ງຄວນໂດດເດັ່ນ ຈາກພື້ນຫຼັງ ຢ່າງຊັດເຈນ.

ຕໍ່ໄປນີ້ເປັນຕົວຢ່າງຂອງພື້ນຫຼັງທີ່ລຽບແບບຕ່າງໆ ທີ່ເຮັດໃຫ້ແບບໂດດເດັ່ນອອກມາ ໂດຍມີການຕັດ ກັນ ຢ່າງຊັດເຈນ[70].



[70] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM/087075, DM/086317 ແລະ DM/087323.

1.1

8.2.2 ຄວາມຊັດເຈນ/ຈະແຈ້ງຂອງແບບ ທີ່ນຳສະເໜີ

ການນຳສະເໜີ ຄວນສະແດງໃຫ້ເຫັນຊັດເຈນວ່າ ສ່ວນໃດຂອງຜະລິດຕະພັນມີຄວາມໂປ່ງໃສ ຖ້າມີ. ໃນກໍລະນີຮູບຖ່າຍ ຊຶ່ງຄຸນນະພາບຄວນດີພໍຈົນສະແດງໃຫ້ເຫັນສ່ວນທີ່ມີຄວາມໂປ່ງໃສ.

ໃນກໍລະນີຂອງການນຳສະເໜີແບບ ໂດຍຮູບແຕ້ມ, ຄວນລະບຸສິ່ງສະທອ້ນ (ເອັບເຟັກ) ຂອງຄວາມໂປ່ງໃສດ້ວຍລາຍເສັ້ນບາງໆ ທີ່ຂະໜານກັນໄປ ຢູ່ພື້ນ ຫຼື ສ່ວນທີ່ໂປ່ງໃສ. ຮູບຄຸນລັກສະນະຂອງຜະລິດຕະພັນ ທີ່ຢູ່ດ້ານຫຼັງ ພື້ນໂປ່ງໃສຄວນເບິ່ງເຫັນໄດ້.

ຮູບແຕ້ມຕໍ່ໄປນີ້ ສະແດງໃຫ້ເຫັນເອັບເຟັກຂອງຄວາມໂປ່ງໃສໃນການນຳສະເໜີແບບອຸດສາຫະກຳ ໂດຍ ຮູບແຕ້ມ[71]:



[71] ຕົວຢ່າງຈາກຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບອຸດສາຫະກຳຜະລິດຕະພັນຂອງປະເທດໄທ, ໜ້າ 31 ແລະ 68, ຕາມລຳດັບ.

8.2.3 ຄຸນນະພາບຂອງການນຳສະເໜີ

ການນຳສະເໜີ ຄວນມີຄຸນນະພາບສູງພໍທີ່ຈະຜະລິດຊ້ຳ ແລະ ເຮັດເອກະສານດິຈິຕອນໄດ້ (ການສະແກນ) ໂດຍບໍ່ເສຍຄຸນນະພາບຫຼາຍ.

ນອກຈາກນີ້ ການນຳສະເໜີເພື່ອການພິມ ເຊັ່ນ: ການພິມແບບ ຄວນມີຄຸນນະພາບສູງເຊັ່ນກັນ.

8.3 ຈຳນວນ ແລະ ຄວາມສອດຄ່ອງຂອງຮູບພາບ

ການນຳສະເໜີແບບອຸດສາຫະກຳ ຄວນເປີດເຜີຍຄຸນລັກສະນະ ແລະ ລາຍລະອຽດທີ່ກ່ຽວຂ້ອງທັງໝົດຂອງຮູບສັກສະນະຜະລິດຕະພັນໃຫ້ຄົບຖ້ວນ. ຄຸນລັກສະນະທີ່ບໍ່ສະແດງອອກມາຢ່າງຊັດເຈນໃນການນຳສະເໜີ ຈະບໍ່ໄດ້ຮັບການຄຸ້ມຄອງໃນການຈົດທະບຽນແບບອຸດສາຫະກຳ.

ຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ມີອິສະຫຼະທີ່ຈະເລືອກວ່າ ຈະນຳສະເໜີຮູບພາບຈັກມຸມ ຊຶ່ງຫາກຈຳນວນດັ່ງກ່າວພຽງພໍທີ່ຈະເຜີຍໃຫ້ເຫັນຄຸນລັກສະນະທຸກຢ່າງທີ່ຕົນປະສົງຈະຮຽກຮ້ອງສິດໃນການອອກແບບໃນການຈົດທະບຽນ. ຕາມປົກກະຕິ, ສາມາດເປີດເຜີຍວັດຖຸສາມມິຕິໄດ້ຢ່າງຄົບຖ້ວນ ໂດຍໃຊ້ມຸມມອງຫົກທິດທາງ (ຈາກດ້ານໜ້າ, ດ້ານຫຼັງ, ດ້ານຂ້າງ, ດ້ານລຸ່ມ ແລະ ດ້ານເທິງ) ແລະ ຮູບລວມລວມທັງໝົດເຈັດມຸມ.

ຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ນອກເໜືອໄປຈາກມຸມມອງມາດຕະຖານທັງເຈັດແລ້ວ ຜູ້ຍື່ນຄຳຮ້ອງສາມາດ ສົ່ງມຸມມອງພາບຕັດຂວາງຂອງການອອກແບບໄດ້, ຖ້າຫາກວ່າຈຳເປັນຕໍ່ການນຳສະເໜີຄຸນລັກສະນະການ ອອກແບບຢ່າງຄົບຖ້ວນ.

ຕໍ່ໄປນີ້ ເປັນຕົວຢ່າງຂອງມຸມມອງມາດຕະຖານທັງເຈັດ[72]:

[72] ຕົວຢ່າງ ຈາກຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບອຸດສາຫະກຳຜະລິດຕະພັນຂອງປະເທດໄທ, ໜ້າ 27.



ຮູບທີ 1



ຮູບທີ 2



ຮູບທີ 3



ຮູບທີ 4



ຮູບທີ 5

ຮູບທີ 6

ຮູບທີ 7

ຍື່ນຄຳຮ້ອງຂໍຈົດທະບຽນ ສາມາດເລືອກທີ່ຈະນຳສະເໜີມຸມມອງໃນຈຳນວນທີ່ນ້ອຍລົງ ຖ້າຫາກເຫັນວ່າ ມຸມມອງທັງເຈັດຮວມກັນ ບໍ່ຈຳເປັນຕໍ່ແບບບາງຢ່າງ. ອັນນີ້ອາດຈະເປັນໄປໄດ້, ຕົວຢ່າງ ຈາກຄວາມສົມຄູ່ກັນ ໂດຍລວມຂອງວັດຖຸທີ່ນຳສະເໜີແບບອຸດສາຫະກຳໃຫ້ມຸມມອງທີ່ເພີ່ມເຂົ້າມາມີຫຼາຍເກີນຄວາມຈຳເປັນ ຫຼື ເນື່ອງ ຈາກເປັນຄຳຮ້ອງຂໍຈົດທະບຽນສ່ວນໜຶ່ງຂອງຜະລິດຕະພັນເທົ່ານັ້ນ ຊຶ່ງເບິ່ງເຫັນໄດ້ຢ່າງຊັດເຈນ ໂດຍໃຊ້ມຸມມອງ ໃນຈຳນວນນ້ອຍລົງ.

ຖ້ານັກກວດສອບຫາກພົບວ່າ ການນຳສະເໜີຈາກຜູ້ຍື່ນຄຳຮ້ອງຂໍຈົດທະບຽນບໍ່ໄດ້ນຳສະເໜີແບບທີ່ຊັດ ເຈນຫຼາຍພໍ, ນັກກວດສອບຄວນຄັດຄ້ານ ແລະ ຂໍໃຫ້ຍື່ນການນສຳເໜີທີ່ຊັດເຈນກວ່າເດີມ. ເຖິງຢ່າງໃດກໍຕາມ, ບໍ່ສາມາດຮັບຈົດທະບຽນຄຸນລັກສະນະຂອງການອອກແບບທີ່ເພີ່ມເຕີມເຂົ້າມາ ຫຼື ທີ່ແຕກຕ່າງອອກໄປໃນສ່ວນຂອງການອອກແບບທີ່ຍື່ນຈົດທະບຽນຫຼັງຈາກຄຳຮ້ອງໄດ້ວັນທີຍື່ນເອກະສານແລ້ວ.

ແບບແຕ່ລະແບບທີ່ຢູ່ໃນຄຳຮ້ອງຂໍຈົດທະບຽນຄວນມີໝາຍເລກທີ່ຕ່າງກັນ ແລະ ມຸມມອງຕ່າງໆຂອງການ ອອກແບບແຕ່ລະແບບ ຄວນໃສ່ໝາຍເລກທີ່ເປັນຕົວເລກຍ່ອຍຂອງໝາຍເລກການອອກແບບ ໂດຍຮຽບແບບ ອະນຸກົມ.

ມຸມມອງທີ່ຍື່ນໃນການນຳສະເໜີການອອກແບບແຕ່ລະຄັ້ງ ຄວນສອດຄ່ອງກັນ. ນັກກວດສອບຄວນກວດສອບໃຫ້ແນ່ໃຈວ່າ ມຸມມອງດັ່ງກ່າວສອດຄ່ອງຕາມການນຳສະເໜີແບບໃດແບບໜຶ່ງໃນຄຳຮ້ອງຂໍຈົດທະບຽນ, ແລະ ກວດສອບໃຫ້ແນ່ໃຈວ່າ ການໃສ່ເລກໝາຍແບບອຸດສາຫະກຳ ແລະ ມຸມມອງແຕ່ລະດ້ານ ສາມາດເຂົ້າໃຈໄດ້ ຢ່າງຊັດເຈນ. ຖ້າຫາກມຸມມອບຂອງການອອກແບບໃດບໍ່ສອດຄ່ອງກັນ ຫຼື ສອດຄ່ອງກັບການອອກແບບທີ່ແຕກຕ່າງອອກໄປ ຕ້ອງຖືວ່າ ເປັນຄຳຮ້ອງຂໍການປົກປ້ອງແບບຫຼາຍກວ່າ 1 ແບບ ໃນຄຳຮ້ອງສະບັບດຽວກັນ.

8.4 ຮູບລັກສະນະຕ່າງໆຂອງຜະລິດຕະພັນໃນໄລຍະການໃຊ້ງານ

ຜະລິດຕະພັນ ຫຼື ອຸປະກອນ ສາມາດນຳສະເໜີຕຳແໜ່ງທີ່ເປັນທາງເລືອກສອງຕຳແໜ່ງ ຫຼື ຫຼາຍກວ່ານັ້ນ ໃນຊ່ວງການໃຊ້ງານຕາມປົກກະຕິ ໂດຍສະເພາະ ໃນກໍລະນີຂອງສິ່ງຂອງທີ່ຕ້ອງມີການປິດເປີດໃນການໃຊ້ງານ ຫຼື ອຸປະກອນທີ່ຕ້ອງພັບ ຫຼື ມ້ວນໃນການເຮັດວຽກ. ຕຳແໜ່ງທີ່ເປັນທາງເລືອກຂອງອຸປະກອນ ຈະສ້າງຮູບລັກຕ່າງໆ ທີ່ເບິ່ງເຫັນໄດ້ຂອງຜະລິດຕະພັນທີ່ສອດຄ່ອງກັນ ຊຶ່ງທັງໝົດ ຄວນນຳສະເໜີໃນຄຳຮ້ອງ.

ໃນກໍລະນີດັ່ງກ່າວ ຄວນນຳສະເໜີ ແລະ ຮຽກຮ້ອງສິດການອອກແບບແຕ່ລະແບບໃນທຸກຕຳແໜ່ງ ຫຼື ທຸກຊ່ວງ ທີ່ສາມາດເບິ່ງເຫັນໄດ້ ໂດຍຜູ້ໃຊ້ສຸດທ້າຍໃນລະຫວ່າງການເຮັດວຽກປົກກະຕິຂອງຜະລິດຕະພັນ. ນີ້ຈຳເປັນຕ້ອງ ສະທ້ອນອອກມາຢ່າງຊັດເຈນໃນການນຳສະເໜີ ຫຼື ຮູບແຕ້ມທີ່ຍື່ນ ເພື່ອ

ຂໍ້ຈົດທະບຽນ ແລະ ສາມາດເສີມດ້ວຍ ຄຳອະທິບາຍ.

ຕົວຢ່າງຕໍ່ໄປນີ້ ສະແດງໃຫ້ເຫັນການນຳສະເໜີຂອງຕຳແໜ່ງຕ່າງໆ (ເປີດ ແລະ ປິດ) ຂອງຜະລິດຕະພັນ ໃນລະຫວ່າງການໃຊ້ງານປົກກະຕິ:



ຫີບເດີນທາງ[73]



[ຮູບທີ 8] [ຮູບທີ 7]

ໂທລະສັບມືຖື[74]

[73] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM/086304.

[74] ຕົວຢ່າງໄດ້ມາຈາກຄູ່ມືການກວດສອບຄຳຮ້ອງຂໍ້ຈົດທະບຽນສິດທິບັດແບບອຸດສາຫະກຳຜະລິດຕະພັນຂອງປະເທດໄທ, ໜ້າ 32.

8.5 ຜະລິດຕະພັນທີ່ມີຄວາມຊັບຊ້ອນ, ຊຸດຜະລິດຕະພັນ ແລະ ຄວາມຫຼາກຫຼາຍ ຂອງແບບຜະລິດຕະພັນ

8.5.1 ຜະລິດຕະພັນທີ່ມີຄວາມຊັບຊ້ອນ

ຜະລິດຕະພັນທີ່ມີຄວາມຊັບຊ້ອນ ຄືຜະລິດຕະພັນ, ສິ່ງຂອງທີ່ເປັນສິນຄ້າ ຫຼື ອຸປະກອນ ທີ່ມີສ່ວນປະກອບຕ່າງໆຫຼາກຫຼາຍທີ່ສາມາດນຳມາປະກອບກັນ ແລະ ຖອດແຍກ ແລະ ສາມາດຖືກແທນທີ່ ຫຼື ໃຊ້ແທນກັນ ລະຫວ່າງສອງຕຳແໜ່ງ ຫຼື ຫຼາຍກວ່ານັ້ນໃນຈຸດຂອງມັນ.

ໃນບາງກໍລະນີ ແຕ່ລະສ່ວນຂອງຜະລິດຕະພັນທີ່ມີຄວາມຊັບຊ້ອນ ອາດຈຖືວ່າເປັນແບບອຸດສາຫະກຳທີ່ແຍກອອກໄປໃນຕົວເອງ. ດັ່ງນັ້ນ, ໃນກໍລະນີທີ່ອະນຸຍາດໃຫ້ອອກແບບຜະລິດຕະພັນທີ່ມີຄວາມຊັບຊ້ອນຈົດທະບຽນແບບອຸດສາຫະກຳພຽງການອອກແບບດຽວ, ການນຳສະເໜີການອອກແບບຄວນມີການນຳສະເໜີແຕ່ລະສ່ວນ (ຫຼື ແຕ່ລະຄຸນລັກສະນະ) ແຍກກັນ ລວມທັງມີການນຳສະເໜີຂອງທັງຊຸດທີ່ເບິ່ງໃນພາບລວມ ໂດຍທີ່ສ່ວນຕ່າງໆມີການເຊື່ອມໂຍງກັນ ອາດຂໍໃຫ້ມີການນຳສະເໜີການອອກແບບ ທັງໝົດຢ່າງຄົບຖ້ວນ[75].

ຈຳເປັນຕ້ອງມີມຸມມອງຂອງທັງຊຸດ ເພື່ອໃຫ້ຄຳຮ້ອງຂໍຈົດທະບຽນສາມາດເປັນຄຳຮ້ອງຂໍການປົກປ້ອງແບບ 1 ແບບ ແຕ່ບໍ່ແມ່ນຄຳຮ້ອງຂໍການປົກປ້ອງແບບຫຼາຍກວ່າ 1 ແບບໃນຄຳຮ້ອງສະບັບດຽວ. ຖ້າຫາກສ່ວນຕ່າງໆ ບໍ່ໄດ້ຖືກນຳສະເໜີຢ່າງຊັດເຈນໃນການນຳສະເໜີແບບດຽວ ທີ່ສະແດງທຸກສ່ວນທີ່ເຊື່ອມໂຍງກັນໃນຖານະຜະລິດຕະພັນທີ່ມີຄວາມຊັບຊ້ອນ, ນັກກວດສອບຄວນຖືວ່າ ຄຳຮ້ອງຂໍຈົດທະບຽນ ເປັນຄຳຮ້ອງຂໍຮັບການຄຸ້ມຄອງແບບ ອຸດສາຫະກຳຫຼາຍກວ່າ 1 ແບບ ຫຼື ຕ້ອງມີການແຍກຄຳຮອງຂໍຈົດທະບຽນ ຖ້າຫາກບໍ່ເປັນໄປຕາມມາດຕະຖານດ້ານ ຄວາມເປັນເອກະພາບຂອງແບບ (ເບິ່ງເພີ່ມເຕີມຢູ່ ໝວດທີ 10, ຂ້າງລຸ່ມ).

ການນຳສະເໜີຜະລິດຕະພັນທີ່ມີຄວາມຊັບຊ້ອນທັງຊຸດ ບໍ່ຈຳເປັນຕ້ອງເປັນຊຸດຜະລິດຕະພັນທີ່ ນຳສະເໜີແບບທີ່ເປັນໄປບໍ່ໄດ້ ພຽງແຕ່ຊຸດດຽວ ຖ້າອີງປະກອບເອື້ອອຳນວຍໃຫ້ມີຫຼາຍກວ່າ 1 ຊຸດ[76].

---

[75] ຢູ່ຫວຽດນາມ, ການນຳສະເໜີແບບ ຕ້ອງປະກອບດ້ວຍການນຳສະເໜີໃຫ້ຄົບຖ້ວນ (ມຸມມອງທັດສະນະມິຕິ ແລະ ມຸມມອບທິດທາງ) ຂອງທັງຊຸດໂດຍທີ່ແຕ່ລະສ່ວນ ທັງໝົດມີການເຊື່ອມໂຍງກັນ. ສາມາດສົ່ງການນຳສະເໜີແຕ່ລະສ່ວນແຍກກັນ ເພື່ອການອ້າງອີງ. ຜູ້ຍື່ນຄຳຮ້ອງຂໍຈົດທະບຽນມີສິດໃນທັງຊຸດ ແລະ ບໍ່ມີສິດໃນແຕ່ລະສ່ວນ. ຕ້ອງມີການນຳສະເໜີທັງໝົດ (ມຸມມອງທັດສະນະມິຕິ ແລະ ມຸມມອງທິດທາງ) ຂອງທັງຊຸດ.

[76] ຢູ່ຫວຽດນາມ, ຖືວ່າ ແຕ່ລະຊຸເປັນການອອກແບບແຕ່ລະອັນ. ຖ້າມັນແຕກຕ່າງກັນຫຼາຍ, ຕ້ອງໄດ້ຍື່ນຜ່ານ ຄຳຮ້ອງຂໍບໍ່ຢູ່ສະບັບດຽວກັນ

ຕົວຢ່າງ, ການອອກແບບໝາຍເລກ 1 ເປັນເປັນຊຸດທີ່ລວມສອງອົງປະກອບ ຫຼື ຫຼາຍກວ່ານັ້ນ ຂອງ ການອອກ ແບບໝາຍເລກ 3 ແລະ 4[77]:

8.5.2 <u>ຊຸດຜະລິດຕະພັນ</u>

ຊຸດຜະລິດຕະພັນ ຄືກຸ່ມ ຫຼື ຊຸດສິ່ງຂອງທີ່ເປັນສິນຄ້າທີ່ມີຮູບລັກສະນະ ຫຼື ການອອກແບບທີ່ຄືກັນ ຫຼື ຄ້າຍຄືກັນ ໂດຍປົກກະຕິ ສິ່ງຂອງທີ່ເປັນສິນຄ້າທີ່ປະກອບກັນເປັນຊຸດຖືກໃຊ້ປະໂຫຍດໃນທາງການ ຄ້າ ໃນຮູບແບບຂອງການສະສົມ ແລະ ມີຄວາມຕັ້ງໃຈໃຫ້ໃຊ້ຮ່ວມກັນ[78]. ສຳລັບຄຳຖາມທີ່ພົບເຫັນ

[77] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ No DM/086204.

[78] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 2 “ຊຸດສິ່ງຂອງທີ່ເປັນສິນຄ້າ”, 15(6), DR r. 7(2); ID DL ມາດຕາ 13(b); LA IPL ມາດຕາ 32; MY DA, s. 3(1) “ຊຸດສິ່ງຂອງທີ່ເປັນສິນຄ້າ”, s. 3(2); PH IP Code, s. 115, DR r. 1515; SG DA s. 2(1) “ສິ່ງຂອງທີ່ເປັນສິນຄ້າ” (b), “ຊຸດສິ່ງຂອງທີ່ເປັນສິນຄ້າ”, DR r. 22(b); VN IPL ມາດຕາ 101.3.a, IPR r. 33.2.b. ເບິ່ງເພີ່ມເຕີມຢູ່ ຄູ່ມືຂອງ EUIPO (ຄຳຮ້ອງຂໍຈົດທະບຽນ), ຂໍ້ 3.2.3.

ທົ່ວໄປກ່ຽວກັບຄວາມເປັນເອກະພາບຂອງແບບ, ເບິ່ງເພີ່ມເຕີມຢູ່ ຂໍ້ 10.1, ຢູ່ຂ້າງລຸ່ມ.

ຊຶ່ງແຕກຕ່າງຈາກຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ, ຊຸດຜະລິດຕະພັນ ທີ່ປະກອບກັນເປັນຊຸດ ບໍ່ໄດ້ມີຄວາມສຳຄັນກັນທາງກາຍະພາບ ຫຼື ບໍ່ໄດ້ຢູ່ຕິດກັນ ແລະ ບໍ່ຈຳເປັນຕ້ອງເອົາມາຕໍ່ກັນ ຫຼື ຕິດຕັ້ງ ໃນລັກສະນະກົນຈັກເພື່ອໃຫ້ສາມາດເຮັດໜ້າທີ່ການໃຊ້ງານໄດ້.

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ໝາຍເຖິງຊຸດຜະລິດຕະພັນ ຄວນຖືວ່າເປັນຄຳຮ້ອງຂໍຈົດ ທະ ບຽນການອອກແບບດຽວ ຖ້າຫາກວ່າ ຄວາມຈິງແລ້ວ ສິ່ງຂອງທີ່ເປັນສິນຄ້າແຕ່ລະຊິ້ນ ມີຄຸນ ລັກສະນະຂອງຮູບລັກສະນະຮ່ວມກັນ ແລະ ໃນເວລາທີ່ນຳມາໃຊ້ ກໍສິ່ງເສີມກັນໃນດ້ານໜ້າທີ່ການໃຊ້ ງານ. ໂດຍທົ່ວໄປ ການອອກ ແບບເປັນຊຸດຕ່າງໆ ພົບເຫັນໃນຜະລິດຕະພັນ ເຊັ່ນ ເຄື່ອງໃຊ້ເທິງໂຕະ, ເຄື່ອງຈານບ່ວງ, ເຄື່ອງຄົວກິນ, ເຄື່ອງຕ່ຳ, ເຟີນິເຈີ.

ດັ່ງນັ້ນ ການນຳສະເໜີທີ່ໄດ້ຍື່ນໃນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳສຳລັບຊຸດຜະລິດຕະພັນ ຄວນມີການນຳສະເໜີແຍກກັນໄປສຳລັບສິ່ງຂອງທີ່ເປັນສິນຄ້າແຕ່ລະອັນ ແລະ ການນຳສະເໜີສິ່ງຂອງ ທີ່ເປັນສິນຄ້າທັງໝົດເປັນຊຸດ ທີ່ເບິ່ງເຫັນທັງຊຸດ. ຕ້ອງສະເໜີມຸມມອງທັງຊຸດ ເພື່ອຈະໄດ້ຖືວ່າ ຄຳ ຮ້ອງດັ່ງກ່າວ ເປັນຄຳຮ້ອງຂໍຈົດທະ ບຽນແບບອຸດສາຫະກຳແບບດຽວ ແລະ ບໍ່ໄດ້ເປັນຄຳຮ້ອງຂໍຮັບ ການປົກປ້ອງແບບອຸດສາຫະກຳຫຼາຍກວ່າ 1 ແບບໃນຄຳຮ້ອງສະບັບດຽວ. ຖ້າຫາກສິ່ງຂອງທີ່ເປັນ ສິນຄ້າແຕ່ລະຢ່າງທີ່ປະກອບເປັນຊຸດ ບໍ່ຖືກນຳສະເໜີຢ່າງຊັດ ເຈນໃນການນຳສະເໜີທີ່ສະແດງໃຫ້ ເຫັນສິ່ງທັງໝົດເປັນຊຸດ ນັກກວດສອບຄວນຄັດຄ້ານ ແລະ ໃຫ້ຖືວ່າ ຄຳຮ້ອງນີ້ ເປັນຄຳຮ້ອງຂໍຮັບ ການປົກປ້ອງແບບອຸດສາຫະກຳຫຼາຍກວ່າ 1 ແບບໃນຄຳຮ້ອງສະລັບດຽວ.

ເຖິງຢ່າງໃດກໍຕາມ, ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳສຳລັບຊຸດຜະລິດຕະພັນ ບໍ່ຖືວ່າເປັນຄຳ ຮ້ອງຂໍຈົດທະບຽນແບບອຸດສາຫະກຳດຽວໃນຫວຽດນາມ, ຍ້ອນວ່າ ການອອກແບບແຕ່ລະແບບໃນ ຊຸດ ໄດ້ຮັບການປົກປ້ອງແຍກອອກມາໂດຍມີຂອບເຂດການປົກປ້ອງຕ່າງຫາກ.

ຕໍ່ໄປນີ້ເປັນຕົວຢ່າງການອອກແບບຊຸດຜະລິດຕະພັນ:



ຈານ[79]

ດ້າມຈັບສຳລັບຊຸດເຄື່ອງໃຊ້ເທິງโต๊ะ[80]

8.5.3 <u>ຄວາມຫຼາກຫຼາຍຂອງແບບອຸດສາຫະກຳ</u>

ແບບອຸດສາຫະກຳ ເປັນຮູບລັກສະນະທີ່ມີແຕກຕ່າງກັນຊັດເຈນ ຊຶ່ງເຫັນໄດ້ຈາກຜະລິດຕະພັນ ຫຼື ສິ່ງ ຂອງ ທີ່ເປັນສິນຄ້າ. ທຸກຮູບລັກສະນະທີ່ມີຄວາມແຕກຕ່າງກັນຊັດເຈນຂອງຂອງຜະລິດຕະພັນ ຖືເປັນ ການອອກແບບອຸດສາຫະກຳຄົນລະອັນ. ເຖິງຢ່າງໃດກໍຕາມ, ໃນກໍລະນີນີ້ ໄດ້ພິຈາລະນາຂໍ້ຍົກເວັ້ນ

[79] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ No DM/087020.

[80] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ No DM/087026.

ສອງປະການ. ໜຶ່ງ, ເປັນກໍລະນີ ຂອງການອອກແບບຜະລິດຕະພັນທີ່ມີຄວາມສະຫຼັບຊັບຊ້ອນ (ເບິ່ງເພີ່ມເຕີມຢູ່ ຂໍ້ 8.5.1, ຂ້າງເທິງ) ແລະ ສອງ, ໝາຍເຖິງ ແບບຊຸດຜະລິດຕະພັນ (ເບິ່ງເພີ່ມເຕີມຢູ່ ຂໍ້ 8.5.2), ຊຶ່ງອາດຖືວ່າເປັນການອອກແບບດຽວ ເປັນສິນຄ້າ ທີ່ອາໄສຮູບປະກອບເພື່ອອຳນວຍຄວາມສະດວກໃຫ້ແກ່ການຈົດທະບຽນຜະລິດຕະພັນປະເພດດັ່ງກ່າວ.

ໃນກໍລະນີທີ່ການອອກແບບຕ່າງໆ ປະກອບດ້ວຍຂອງຮູບລັກສະນະຂອງຜະລິດຕະພັນ ທີ່ມີຫຼາກຫຼາຍຮູບແບບ ຈະບໍ່ຖືວ່າເປັນຜະລິດຕະພັນທີ່ມີຄວາມຊັບຊ້ອນ ຫຼື ຊຸດຜະລິດຕະພັນ. ການອອກ ແບບທີ່ມີຄວາມແຕກຕ່າງກັນຊັດເຈນ ບໍ່ອາດຖືວ່າເປັນສິນຄ້າການອອກແບບດຽວ ແຕ່ສາມາດຍື່ນການອອກແບບ ດັ່ງກ່າວຮ່ວມກັນໄດ້ໃນຄຳຮ້ອງຂໍການປົກປ້ອງແບບອຸດສາຫະກຳຫຼາຍກວ່າ 1 ແບບໃນຄຳຮ້ອງສະບັບດຽວ ຖ້າຫາກ ເປັນໄປຕາມຂໍ້ກຳນົດດ້ານຄວາມເປັນເອກະພາບຂອງແບບ (ເບິ່ງເພີ່ມເຕີມຢູ່ ໝວດ 10, ຂ້າງລຸ່ມ).[81]

ຕໍ່ໄປນີ້ ເປັນຕົວຢ່າງຂອງຄຳຮ້ອງຂໍຮັບການປົກປ້ອງແບບອຸດສາຫະກຳຫຼາຍກວ່າ 1 ແບບໃນຄຳຮ້ອງຂໍຈົດທະບຽນສະບັບດຽວ ຊຶ່ງປະກອບດ້ວຍ ການອອກແບບຜະລິດຕະພັນຕ່າງໆທີ່ຢູ່ໃນໝວດດຽວກັນຂອງການ ຈັດປະເພດສາກົນ (LCL Cl. 07-03, 04, 06) ແລະ ສາມາດຍື່ນພ້ອມກັນໄດ້ ຖ້າຫາກ ເປັນໄປຕາມຂໍ້ກຳນົດດ້ານ ຄວາມເປັນເອກະພາບທີ່ບັງຄັບໃຊ້ກັບການອອກແບບ[82]:

[81] ຢູ່ຫວຽດນາມ, ມາດຕະຖານດ້ານເອກະພາບໃນການອອກແບບ ບໍ່ໄດ້ອີງໃສ່ສັນຍາວ່າດ້ວຍການຈັດໝວດສາກົນ Locarno. ຄວາມຈິງແລ້ວ, ຄຳຮ້ອງຂໍຮັບການປົກປ້ອງ ແບບອຸດສາຫະກຳສຳລັບຜະລິດຕະພັນຫຼາຍກວ່າ 1 ແບບໃນຄຳຮ້ອງສະບັບດຽວ ຈະເປັນໄປຕາມມາດຕະຖານດ້ານເອກະພາບຂອງການອອກແບບ ຖ້າຫາກການອອກແບບ ທັງໝົດໃນຄຳຮ້ອງຫາກຖືກນຳສະເໜີໃນຜະລິດຕະພັນຕົວດຽວກັນ ແລະ ພວກມັນບໍ່ໄດ້ແຕກຕ່າງກັນຫຼວງຫຼາຍ.

[82] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ No DM/084120.



8.6 ການນຳສະເໜີແບບ ທີ່ເປັນພາກສ່ວນໜຶ່ງຂອງຜະລິດຕະພັນ

8.6.1 <u>ການນຳສະເໜີພາກສ່ວນທີ່ຖືກຮຽກຮ້ອງສິດ</u>

ໃນກໍລະນີທີ່ກົດໝາຍອະນຸຍາດ ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ອາດຈະຮຽກຮ້ອງສິດພຽງແຕ່ສ່ວນ ດຽວ ຫຼື ຄຸນລັກສະນະໜຶ່ງຢ່າງຂອງຜະລິດຕະພັນຂະໜາດໃຫຍ່ກວ່າ. ເບິ່ງເພີ່ມເຕີມຢູ່ ຂໍ້ 1.2.2.5 ຂ້າງເທິງ.

ໃນກໍລະນີທີ່ຄຳຮ້ອງຂໍຈົດທະບຽນຫາກໄດ້ຮຽກຮ້ອງສິດສະເພາະພາກສ່ວນໜຶ່ງຂອງຜະລິດຕະພັນ ຂະໜາດໃຫຍ່ກວ່າ, ການນຳສະເໜີສ່ວນທີ່ຖືກຮຽກຮ້ອງສິດ ຄວນລະບຸສ່ວນນັ້ນຢ່າງຊັດເຈນ ການ ລະບຸສ່ວນ ຫຼື ຄຸນລັກສະນະທີ່ຖືກຮຽກຮ້ອງສິດ ມີຄວາມສຳຄັນ ຍ້ອນວ່າຂອບເຂດການປົກປ້ອງແບບ ອຸດສາຫະກຳຂອງສ່ວນ ຫຼື ຄຸນລັກສະນະນັ້ນ ຈະກຳນົດຈາກການນຳສະເໜີແບບທີ່ຢູ່ໃນການຈົດ ທະບຽນ.

ຫວຽດນາມ ກຳນົດໃຫ້ມີການຈົດທະບຽນແບບອຸດສາຫະກຳສຳລັບອາໄຫຼ່ທີ່ແຍກອອກຈາກກັນໄດ້. ເຖິງວ່າ ການນຳສະເໜີຕ້ອງສະແດງຮູບອາໄຫຼ່ເປັນຂອງທີ່ຢູ່ໄດ້ດ້ວຍຕົວເອງ ຊຶ່ງຕັດອອກຈາກ ຜະລິດຕະພັນຂະ ໜາດໃຫຍ່ ແຕ່ຫວຽດນາມບໍ່ຮັບຈົດທະບຽນການນຳສະເໜີ ທີ່ສະແດງຜະລິດຕະພັນ ທີ່ໃຫຍ່ ທີ່ມີສ່ວນທີ່ຖືກ ຮຽກຮ້ອງສິດວາງຢູ່ເທິງມັນ.

8.6.2 <u>ວິທີລະບຸສ່ວນທີ່ຖືກຮຽກຮ້ອງສິດ</u>

ເພື່ອນິຍາມສ່ວນຂອງຜະລິດຕະພັນທີ່ມີການຮຽກຮ້ອງສິດການອອກແບບຢ່າງຊັດເຈນ ແລະ ຊັດແຈ້ງ

ແລະ ເພື່ອປະຫີເສດຄວາມຮັບຜິດຊອບໃນສ່ວນທີ່ເຫຼືອຂອງຜະລິດຕະພັນຂະໜາດໃຫຍ່ທີ່ບໍ່ໄດ້ຂໍຈົດທະບຽນ ຜູ້ຍື່ນຄຳຮ້ອງສາມາດລະບຸສ່ວນທີ່ຄວາມກ່ຽວຂ້ອງໂດຍໃຊ້ວິທີຕໍ່ໄປນີ້:

- ເສັ້ນຈໍ້າຈຸດໆ ແລະ ເສັ້ນສີເຂັ້ມ
- ຮູບສະແດງຂອບເຂດ, ຂີດເສັ້ນອ້ອມຮູບ
- ຮູບເປັນເງົາ ແລະ ຮູບມົວ
- ຮູບຕັດ ແລະ ຮູບທີ່ແຍກອອກມາ

8.6.2.1 ເສັ້ນຈໍ້າຈຸດໆ ແລະ ເສັ້ນສີເຂັ້ມ

ໃນການນຳສະເໜີແບບ, ສາມາດໃຊ້ເສັ້ນເຂັ້ມອະທິບາຍສ່ວນ ຫຼື ຄຸນລັກສະນະຂອງສິ່ງຂອງທີ່ເປັນສິນຄ້າ ຂະໜາດໃຫຍ່ທີ່ຖືກຮຽກຮ້ອງສິດເປັນພິເສດ. ໃນຂະນະທີ່ໃຊ້ເສັ້ນຈໍ້າຈຸດ ຫຼື ເສັ້ນທີ່ບໍ່ຕໍ່ເນື່ອງ ນຳສະເໜີສ່ວນທີ່ເຫຼືອຂອງ ສິ່ງຂອງທີ່ເປັນສິນຄ້າຂະໜາດໃຫຍ່.

ການນຳສະເໜີສ່ວນຕ່າງໆ ຫຼື ຄຸນລັກສະນະກ່ຽວກັບຂອງແບບອຸດສາຫະກຳ ເຮັດໃຫ້ສາທາລະນະຊົນເຂົ້າໃຈວ່າ ມີການຮຽກຮ້ອງສິດສະເພາະສ່ວນທີ່ຖືກສະເໜີດ້ວຍເສັ້ນເຂັ້ມ ໃນຂະນະທີ່ເສັ້ນຈໍ້າຈຸດ ຫຼື ເສັ້ນທີ່ບໍ່ຕໍ່ເນື່ອງ ນຳສະເໜີ ສ່ວນຂອງແບບອຸດສາຫະກຳນີ້ທີ່ບໍ່ຖືກຮຽກຮ້ອງສິດ.

ການນຳສະເໜີການອອກແບບອຸດສາຫະກຳຕໍ່ໄປນີ້ ສະແດງພາບຂອງເສັ້ນທັງສອງແບບ[83]:

8.6.2.2 ຮູບສະແດງຂອບເຂດທີ່ຂີດເສັ້ນອ້ອມຮູບ

[83] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ No DM/084120.

ຮູບສະແດງຂອບເຂດທີ່ຂີດເສັ້ນອ້ອມຮູບ ເປັນເສັ້ນເຂັ້ມທີ່ເຫັນໄດ້ຊັດເຈນ, ທີ່ແຕ້ມໂດຍໃຊ້ສີຕັດກັນ ທີ່ອ້ອມຮອບ ແລະ ລະບຸສ່ວນຂອງຜະລິດຕະພັນຂະໜາດໃຫຍ່ທີ່ຖືກຮຽກຮ້ອງສິດໃນຄຳຮ້ອງຂໍຈົດທະບຽນ ແລະ ເປັນຂອງການ ອອກແບບທາງແບບອຸດສາຫະກຳ.

ຮູບສະແດງຂອບເຂດທີ່ຂີດເສັ້ນອ້ອມຮູບ ຄວນແຍກໃຫ້ຊັດເຈນ ລະຫວ່າງ ສ່ວນທີ່ຖືກຮຽກຮ້ອງສິດ ແລະ ສ່ວນທີ່ບໍ່ຖືກຮຽກຮ້ອງສິດຂອງຜະລິດຕະພັນ ທີ່ມີການຍື່ນການນຳສະເໜີ. ຕ້ອງຖືວ່າ ສ່ວນຕ່າງໆຂອງການນຳສະເໜີ ທີ່ຢູ່ນອກຂອບເຂດທີ່ຂີດເສັ້ນອ້ອມ ແມ່ນ ມີຈຸດປະສົງພຽງເພື່ອອະທິບາຍບໍລິບົດທີ່ມີການນຳສະເໜີສ່ວນທີ່ຖືກຮຽກຮ້ອງສິດ ແລະ ນັກກວດສອບ ບໍ່ຄວນໃຫ້ຄວາມສຳຄັນມັນ ເມື່ອປະເມີນການອອກແບບ. ຕົວຢ່າງ[84]:



8.6.2.3 ຮູບເປັນເງົາ ແລະ ຮູບມືອ

ໃນກໍລະນີທີ່ຄຳຮ້ອງຂໍຈົດທະບຽນຫາກອ້າງເຖິງສະເພາະສ່ວນຂອງຜະລິດຕະພັນຂະໜາດໃຫຍ່ກວ່າ, ຜູ້ຍື່ນຄຳຮ້ອງຂໍຈົດທະບຽນອາດຈະເລືອກ ລະບຸແບບອຸດສາຫະກຳຂອງສ່ວນນັ້ນ ໂດຍການເຮັດເປັນເງົາ ຫຼື ການເຮັດ ໃຫ້ມືອສ່ວນທີ່ບໍ່ຖືກຮຽກຮ້ອງສິດ. ການນຳສະເໜີຈະສະເໜີພາບທີ່ຊັດເຈນຂອງສ່ວນທີ່ຖືກຮຽກຮ້ອງສິດ ແລະ ໃຫ້ສ່ວນ ທີ່ບໍ່ຖືກຮຽກຮ້ອງສິດສ່ວນຂອງຜະລິດຕະພັນ ເປັນຮູບເປັນເງົາ ຫຼື ຮູບມືອ ເພື່ອຈະຂ້າມມັນໄປ.

ຕົວຢ່າງ[85]:

[84] ຕົວຢ່າງໄດ້ມາຈາກຈົດທະບຽນແບບອຸດສາຫະກຳຂອງປະຊາຄົມເອີລົບ (RCD) No 164611-0004.

[85] ຕົວຢ່າງໄດ້ມາຈາກການຈົດທະບຽນແບບອຸດສາຫະກຳສາກົນ DM/072764 ແລະ DM/083403

8.6.2.4 ຮູບຕັດ ແລະ ຮູບທີ່ແຍກອອກມາ

ແບບອຸດສາຫະກຳ ອາດຈະກ່ຽວຂ້ອງກັບສ່ວນຕ່າງໆຂອງຜະລິດຕະພັນທີ່ຢູ່ດ້ານໃດດ້ານໜຶ່ງ ຫຼື ປາຍດ້ານໜຶ່ງຂອງຜະລິດຕະພັນ. ແບບອຸດສາຫະກຳນີ້ ຍັງອາດຈະນຳໃຊ້ກັບຜະລິດຕະພັນທີ່ມີຄວາມຍາວທີ່ກຳນົດ ບໍ່ໄດ້ແນ່ນອນ. ດັ່ງນັ້ນ ການອອກແບບສຳພັນກັບຄຸນລັກສະນະໜຶ່ງດ້ານ ຫຼື ຫຼາຍກວ່ານັ້ນທີ່ເກີດຂຶ້ນໃນຜະລິດຕະພັນທັງໝົດ.

ໃນກໍລະນີດັ່ງກ່າວ, ການນຳສະເໜີນີ້ ບໍ່ຈຳເປັນຕ້ອງເຮັດຊ້ຳພາບຜະລິດຕະພັນຂະໜາດໃຫຍ່ທັງໝົດ ແຕ່ສາມາດແຕ້ມຮູບແຍກ ຫຼື ຕັດຕອນໃນການນຳສະເໜີເພື່ອຊີ້ໃຫ້ເຫັນວ່າ ມີການສະຫຼະສ່ວນໃດສ່ວນໜຶ່ງຂອງ ພາບຜະລິດຕະພັນທັງໝົດ. ຄວນເຂົ້າໃຈວ່າ ໝາຍຄວາມວ່າ ສ່ວນທີ່ປະໄວ້ບໍ່ໄດ້ເພີ່ມ ຫຼື ຫຼຸດການອອກແບບ ທີ່ສະແດງໃນສ່ວນທີ່ເບິ່ງເຫັນໄດ້.

ນັກກວດສອບຄວນຖືວ່າ ສ່ວນຄວາມຍາວທີ່ຫາຍໄປໃນການນຳສະເໜີເປັນສ່ວນທີ່ຕໍ່ເນື່ອງກັບ ສ່ວນທີ່ ເບິ່ງເຫັນໄດ້ ທີ່ມີການຮຽກຮ້ອງສິດການອອກແບບຕາມທີ່ສະແດງໃນການນຳສະເໜີ ຫຼື ສ່ວນຂອງ ຜະລິດຕະພັນທີ່ບໍ່ ກ່ຽວຂ້ອງກັບສ່ວນນັ້ນ ທີ່ນຳສະເໜີການອອກແບບທີ່ຖືກຮຽກຮ້ອງສິດ.

ຕົວຢ່າງ[86]:





[86] ຕົວຢ່າງໄດ້ມາຈາກຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບຜະລິດຕະພັນຂອງປະເທດໄທ, ໜ້າ 30

8.7 ຄຳບັນຍາຍກ່ຽວກັບຮູບພາບ ແລະ ຂໍ້ຄວາມອະທິບາຍ

ຜູ້ຍື່ນຄຳຮ້ອງຂໍຈົດທະບຽນອາດຈະຍື່ນ ຄຳບັນຍາຍກ່ຽວກັບຮູບພາບ ຫຼື ຂໍ້ຄວາມອະທິບາຍໃນສ່ວນ ຂອງມຸມ ບໍ່ວ່າຈະມຸມດຽວ ບາງມຸມ ຫຼື ທຸກມຸມ ຂອງການນຳສະເໜີແບບ ໄປພ້ອມໆກັບການນຳສະເໜີແບບ ໃນຄຳຮ້ອງຂໍຈົດທະບຽນ. ຄຳບັນຍາຍລະອຽດ ຫຼື ໝາຍເຫດ ສາມາດໃຊ້ເພື່ອສ້າງຄວາມຊັດເຈນໃນສ່ວນ ຂອງຈຸດປະສົງ ຫຼື ລັກສະນະຂອງຄຸນລັກສະນະບາງຢ່າງ ໃນຈຸດທີ່ຊ່ວຍອຳນວຍຄວາມສະດວກໃນການພິຈາລະນາ ກວດສອບຄຳຮ້ອງຂໍຈົດທະບຽນ ແລະ ກຳຈັດຄວາມສົງໄສກ່ຽວກັບການນຳສະເໜີທີ່ຜູ້ຍື່ນສົ່ງໄປ.

ການນຳສະເໜີຂອງການອອກແບບແຕ່ລະແບບ ຄວນມີຄວາມສົມບູນ ແລະ ພຽງພໍທີ່ຈະນຳສະເໜີຮູບລັກສະນະຂອງແບບອຸດສາຫະກຳທີ່ຈະຈົດທະບຽນໄດ້ຢ່າງຊື່ຕົງ. ນັກກວດສອບ ອາດຈະຂໍຄຳອະທິບາຍລາຍລະອຽດ ຫຼື ໝາຍເຫດອະທິບາຍກ່ຽວກັບການນຳສະເໜີເພື່ອການຈົດທະບຽນແບບອຸດສາຫະກຳ[87].

ຄຳບັນຍາຍລະອຽດ ຕ້ອງອ້າງເຖິງ ຄຸນລັກສະນະຂອງຮູບລັກສະນະທີ່ສາມາດເບິ່ງເຫັນໄດ້ໃນການນຳສະເໜີແບບອຸດສາຫະກຳ. ບໍ່ອ້າງເຖິງຄຸນລັກສະນະທີ່ເປັນໄປໄດ້ ຫຼື ຄຸນລັກສະນະທີ່ເປັນທາງເລືອກອື່ນທີ່ບໍ່ໄດ້ຖືກ ນຳສະເໜີ ຫຼື ເວົ້າເຖິງຄວາມໃໝ່, ຄຸນຄ່າດ້ານໜ້າທີ່ການໃຊ້ງານ ຫຼື ຄວາມສວຍງາມຂອງແບບອຸດສາຫະກຳ.

ຄຳບັນຍາຍລະອຽດ ຫຼື ໝາຍເຫດ ບໍ່ສາມາດແທນທີ່ການນຳສະເໜີແບບອຸດສາຫະກຳໃນຄຳຮ້ອງຂໍຈົດທະບຽນ ແລະ ບໍ່ສາມາດ ແກ້ໄຂຄວາມບົກຜ່ອງ ຫຼື ຄວາມຊັດເຈນ ທີ່ບໍ່ພຽງພໍໃນການນຳສະເໜີແບບອຸດສາຫະກຳ.

8.8 ການນຳສະເໜີແບບທີ່ມີພື້ນແບບ ແລະ ລວດລາຍ ທີ່ຊ້ຳກັນ

ໃນກໍລະນີທີ່ແບບອຸດສາຫະກຳຫາກເປັນແບບທີ່ມີພື້ນແບບ ແລະ ລວດລາຍ ທີ່ຊ້ຳກັນ, ການນຳສະເໜີຄວນສະ ແດງອົງປະກອບທີ່ເກີດຂຶ້ນຊ້ຳໆຂອງລວດລາຍດັ່ງກ່າວຢ່າງຄົບຖ້ວນ ເພື່ອໃຫ້ສາມາດເປີດເຜີຍໃຫ້ເຫັນຄຸນລັກສະ ນະທຸກດ້ານທີ່ມີການເຮັດຊ້ຳ. ຕົວຢ່າງ[88]:

[87] ເປັນຕົ້ນ ຢູ່ຫວຽດນາມ

[88] ຕົວຢ່າງ taken ຈາກInternational ແບບ ການຈົດທະບຽນNo DM/086803.

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຈະຄວບຄຸມເອົາສະເພາະແຕ່ອົງປະກອບທີ່ເບິ່ງເຫັນໄດ້ ທີ່ສຳພັນກັບການອອກແບບທີ່ນຳສະເໜີໃນຄຳຮ້ອງຂໍຈົດທະບຽນເທົ່ານັ້ນ.

ຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ສາມາດສົ່ງຮູບເພີ່ມເຕີມກ່ຽວກັບລວດລາຍທີ່ນຳໃຊ້ກັບຜະລິດຕະພັນສະເພາະ ເພື່ອຈຸດປະສົງໃນການອະທິບາຍ. ຖ້າຫາກບໍ່ໄດ້ມີເຈຕະນາທີ່ຈະຮຽກຮ້ອງສິດໃນຮູບຊົງຂອງຜະລິດຕະພັນ ທີ່ມີລວດລາຍ ກໍຄວນເຮັດໃຫ້ຊັດເຈນໂດຍລະບຸສ່ວນທີ່ບໍ່ຮຽກຮ້ອງສິດຢູ່ໃນການນຳສະເໜີແບບ ດັ່ງທີ່ໄດ້ກ່າວໄວ້ໃນ ຂໍ້ 8.6.2 ຂ້າງເທິງ.

8.9 ການນຳສະເໜີແບບທີ່ມີສີສັນປະກອບ

ໃນກໍລະນີທີ່ສີສັນ ເປັນຄຸນລັກສະນະພື້ນຖານສຳຄັນຂອງແບບອຸດສາຫະກຳ, ການອອກແບບການນຳສະເໜີ ຄວນເປັນສີສັນ[89].

ການນຳສະເໜີແບບອຸດສາຫະກຳ ແລະ ມຸມມອງຕ່າງໆຈະຕ້ອງເປັນສີດຳ ແລະ ສີຂາວ ຫຼື ສີອື່ນໆ. ຄຳຮ້ອງຂໍຈົດທະບຽນບໍ່ສາມາດສະແດງພາບມຸມມອງຕ່າງໆລວມກັນ ໂດຍທີ່ບາງສ່ວນເປັນສີດຳ ແລະ ສີຂາວ ແລະ ບາງສ່ວນເປັນສີອື່ນ. ຖ້າຫາກທັງໝົດນີ້ຖືກສົ່ງລວມກັນ ການນຳສະເໜີດັ່ງກ່າວ ຈະມີຄວາມປົນເປ ແລະ ບໍ່ຊັດເຈນ ແລະ ນັກກວດສອບຄວນຄັດຄ້ານການຈົດທະບຽນ.

ໃນກໍລະນີທີ່ແບບອຸດສາຫະກຳ ຕ້ອງຈົດທະບຽນພ້ອມກັບສີ ຫຼື ກຸ່ມສີ, ພາບທັງໝົດໃນແບບ

[89] ເຖິງຢ່າງໃດກໍຕາມ ພາຍໃຕ້ກົດໝາຍຂອງປະເທດສະມາຊິກອາຊຽນບາງປະເທດ (ເຊັ່ນ ມາເລເຊຍ) ບໍ່ສາມາດຮຽກຮ້ອງສິດຕໍ່ສີເປັນຄຸນລັກສະນະຂອງການອອກແບບອຸດສາ ຫະກຳ, ເບິ່ງເພີ່ມເຕີມຢູ່ ຂໍ້ 1.2.1.2 ຂ້າງເທິງ

ອຸດສາຫະກຳຄວນມີສີດຽວກັນ ຫຼື ສີຕ່າງໆໃນລັກສະນະທີ່ສອດຄ່ອງກັນ. ຖ້າສີປ່ຽນໄປ ເມື່ອເບິ່ງ ໃນມຸມຕ່າງໆຂອງການ ອອກແບບ, ນັກກວດສອບຄັດຄ້ານການນຳສະເໜີນັ້ນ ເພາະຂາດຄວາມ ສອດຄ່ອງ. ໃນກໍລະນີດັ່ງກ່າວ ຄຳຮ້ອງຂໍຈົດທະບຽນອາດຈະຖືວ່າມີການອອກແບບຫຼາຍກວ່າໜຶ່ງ ແລະ ຖືເປັນຄຳຮ້ອງຂໍການປົກປ້ອງແບບອຸດສາຫະກຳ ຫຼາຍກວ່າ 1 ແບບ ໃນຄຳຮ້ອງສະບັບດຽວ.

9. ການບົ່ງບອກຜະລິດຕະພັນ

9.1 ບັນຫາທົ່ວໄປ

ການບົ່ງບອກຂອງຜະລິດຕະພັນທີ່ຈະຂໍຈົດທະບຽນແບບອຸດສາຫະກຳ ເປັນຕົ້ນ ຜະລິດຕະພັນທີ່ນຳສະເໜີແບບ ເປັນອົງປະກອບພື້ນຖານສຳຄັນຂອງການຈົດທະບຽນແບບອຸດສາຫະກຳ[90].

ການບົ່ງບອກຜະລິດຕະພັນ ແລະ ການຈັດໝວດ ບໍ່ສົ່ງຜົນກະທົບຕໍ່ຂອບເຂດການປົກປ້ອງແບບອຸດສາຫະກຳທີ່ໄດ້ຮັບການຈົດທະບຽນ, ເວັ້ນເສຍແຕ່ກົດໝາຍກຳນົດເປັນຢ່າງອື່ນ[91]. ການຈັດໝວດແບບອຸດສາຫະກຳດັ່ງກ່າວ ໃຊ້ເພື່ອການບໍລິຫານ, ຕົ້ນຕໍແລ້ວກໍເພື່ອວາງໂຄງສ້າງຄ່າທຳນຽມທີ່ຕ້ອງຈ່າຍ ເປັນຈົດທະບຽນແບບອຸດສາຫະກຳ ແລະ ເພື່ອອຳນວຍຄວາມສະດວກໃນການຄົ້ນຫາ ແລະ ຄົ້ນຫາການອອກແບບທີ່ຈົດທະບຽນໃນຖານຂໍ້ມູນ.

ຄຳຮ້ອງຂໍຈົດທະບຽນຕ້ອງລະບຸ ຜະລິດຕະພັນ ຫຼື ຜະລິດຕະພັນທີ່ໄດ້ຍື່ນຂໍຈົດທະບຽນແບບອຸດສາ ຫະກຳ. ຄຳຮ້ອງຂໍຈົດທະບຽນ ສາມາດລະບຸຜະລິດຕະພັນໜຶ່ງຢ່າງ ຫຼື ຫຼາຍກວ່ານັ້ນ ໃນການນຳສະເໜີໃນແບບໃນ ຄຳຮ້ອງຂໍການປົກປ້ອງແບບຫຼາຍກວ່າ 1 ແບບ ໃນຄຳຮ້ອງສະບັບດຽວ ແຕ່ຕ້ອງປະຕິບັດຕາມຂໍ້ກຳນົດດ້ານ ຄວາມເປັນເອກະພາບຂອງໝວດສິນຄ້າ (ເບິ່ງເພີ່ມເຕີມຢູ່ ຂໍ້ 10 ຂ້າງລຸ່ມ).

9.2 ການຈັດໝວດຜະລິດຕະພັນ ທີ່ລວບລວມແບບອຸດສາຫະກຳຕ່າງໆ

---

[90] ເບິ່ງເພີ່ມເຕີມຢູ່ບົດບັນຍັດໃນ BN DR r. 6(3)(a); KH DL ມາດຕາ 95; ID DL ມາດຕາ 11(4)(a), DR r. 1; LA IPL ມາດຕາ 32.4; MY ID Form 1 item 4 ແລະ 5; PH IP Code, s. 114.1(c), DR r. 1510(a); SG Form D3 part 4; TH DA s. 59(2), DR r. 18(2); VN IPR r. 33.5.a. ເບິ່ງເພີ່ມເຕີມຢູ່ ຄູ່ມືຂອງ EUIPO (ຄຳຮ້ອງຂໍຈົດທະບຽນ), ຂໍ້ 6.1.4.

[91] ຕົວຢ່າງ, ຢູ່ຫວຽດນາມ ຂອບເຂດການປົກປ້ອງອາດຈະຄຸ້ມຄອງການບົ່ງບອກຜະລິດຕະພັນ.

9.2.1 ການນຳໃຊ້ການຈັດໝວດຂອງສາກົນ

ການບົ່ງບອກຜະລິດຕະພັນ ທີ່ຕ້ອງມີຄວາມຊັດເຈນພຽງພໍທີ່ຈະເຮັດໃຫ້ຫ້ອງການຈົດທະບຽນ ສາມາດ ຈັດປະເພດຜະລິດຕະພັນທີ່ນຳສະເໜີແບບອຸດສາຫະກຳແຕ່ລະແບບ ຫຼື ເພື່ອກວດສອບຄວາມ ຖືກຕ້ອງຂອງ ການຈັດໝວດທີ່ຜູ້ຍື່ນຄຳຮ້ອງສະເໜີມາ.

ຄວນດຳເນີນການຈັດໝວດຜະລິດຕະພັນ ທີ່ນຳສະເໜີແບບອຸດສາຫະກຳ ໂດຍໃຊ້ການຈັດໝວດຂອງ ສາກົນ ຂອງສັນຍາໂລຄາໂນ (Locarno Agreement) ທີ່ກຳນົດການຈັດໝວດສາກົນສຳລັບແບບ ອຸດສາຫະກຳ (LCL)[92].

ຜູ້ຍື່ນຄຳຮ້ອງ ຄວບລະບຸຜະລິດຕະພັນທີ່ນຳສະເໜີການອອກແບບແຕ່ລະແບບທີ່ກຳຈົດການອອກແບບ ໂດຍໃຊ້ຊື່ທຳມະດາ. ຫ້ອງການຈົດທະບຽນຄວນສະໜັບສະໜູນໃຫ້ສ້າງການບົ່ງບອກໂດຍໃຊ້ຄຳໃນ ລາຍຊື່ຜະລິດ ຕະພັນທີ່ຮຽງຕາມອັກສອນທີ່ນຳມາຈາກ (LCL)[93].

ການໃຊ້ຊື່ຜະລິດຕະພັນໃນລາຍຊື່ຜະລິດຕະພັນທີ່ຮຽງຕາມຕົວອັກສອນຂອງ LCL ຈະຊ່ວຍອຳນວຍ ຄວາມສະດວກໃນການຈັດຈຳພວກຜະລິດຕະພັນທີ່ລະບຸໄວ້ໃນຄຳຮ້ອງ ແລະ ຊ່ວຍອຳນວຍຄວາມ ສະດວກໃນ ການກວດສອບຄວາມຖືກຕ້ອງຂອງການຈັດໝວດທີ່ສະເໜີໂດຍຜູ້ຍື່ນຄຳຮ້ອງ. ບໍ່ຄວນ ສະໜັບສະໜູນໃຫ້ໃຊ້ຄຳກວ້າງໆ ເຊັ່ນ: ຄຳທີ່ຢູ່ໃນຫົວຂໍ້ຂອງ LCL ເນື່ອງຈາກວ່າ ມັນອາດຈະນຳໄປ ສູ່ການຄັດຄ້ານໃນເລື່ອງທີ່ວ່າ ການບົ່ງບອກຂອງຜະລິດຕະພັນບໍ່ພຽງພໍ ຫຼື ມີຄວາມບົກຜ່ອງ.

ນັກກວດສອບຄວນກວດສອບຄວາມຖືກຕ້ອງ ຫຼື ໃຫ້ມີການຈັດໝວດທີ່ຄົບຖ້ວນ ເປັນຕົ້ນ ການຈັດ ປະເພດ ແລະ ປະເພດຍ່ອຍຂອງ LCL ສຳລັບແຕ່ຜະລິດຕະພັນ ທີ່ບົ່ງບອກໃນຄຳຮອງຂໍຈົດທະບຽນ. ຖ້າການບົ່ງບອກຜະລິດຕະພັນທີ່ຜູ້ຍື່ນຄຳຮ້ອງຂໍຈົດທະບຽນໄດ້ສິ່ງໃຫ້ນັ້ນບໍ່ພຽງພໍທີ່ຈະຈັດປະເພດ ແບບອຸດສາຫະກຳ, ນັກກວດສອບຄວນຈັດປະເພດແບບອຸດສາຫະກຳເອງ ໂດຍອ້າງອີງຈາກການນຳ ສະເໜີແບບອຸດສາຫະກຳນີ້ໃນຄຳຮອງຂໍຈົດທະບຽນ.

9.2.2 ການແກ້ໄຂ ການລະບຸໝວດຜະລິດຕະພັນ

ຖ້າຜະລິດຕະພັນທີ່ສະແດງຢູ່ໃນຄຳຮ້ອງຂໍຈົດທະບຽນຫາກລະບຸຊື່ທີ່ບໍ່ລວມຢູ່ໃນລາຍຊື່ຜະລິດຕະພັນ

---

[92] ລາຍການຈັດໝວດ ແລະ ປະເພດຍ່ອຍພາຍໃຕ້ການຈັດໝວດສາກົນໂລຄາໂນ ພ້ອມດ້ວຍໝາຍເຫດອະທິບາຍ ສາມາດ ເບິ່ງຢູ່ http://www.wipo.int/classifications/nivilo/pdf/eng/locarno/LOC_10e.pdf

[93] ລາຍຊື່ຜະລິດຕະພັນທີ່ຮຽງຕາມຕົວອັກສອນພາຍໃຕ້ Locarno International Classification ສາມາດເບິ່ງຢູ່ http://www.wipo.int/classifications/nivilo/pdf/eng/locarno/LOC_10e.pdf

ທີ່ລຽງຕາມຕົວອັກສອນຂອງ LCL, ນັກກວດສອບອາດຈະສະເໜີໂດຍໜ້າທີ່ໃຫ້ປ່ຽນ ຫຼື ແກ້ໄຂການ ລະບຸ ເຫຼົ່ານັ້ນ ແລະ ຊອກຫາຄຳອື່ນມາແທນຄຳທີ່ເອົາມາຈາກລາຍຊື່ຜະລິດຕະພັນທີ່ຮຽງຕາມຕົວ ອັກສອນ ຫຼື ຈາກຫົວຂໍ້ ຂອງການຈັດໝວດ ຫຼື ການຈັດໝວດຍ່ອຍທີ່ກ່ຽວຂ້ອງທີ່ມີຂອບເຂດທຽບ ເທົ່າກັນ ຫຼື ມີຂອບເຂດທີ່ກວ້າງຂຶ້ນ. ນັກກວດສອບບໍ່ຄວນສະເໜີການບົ່ງບອກທີ່ປະກົດວ່າມີຂອບ ເຂດແຄບກວ່າຄຳທີ່ໃຊ້ໃນຄຳຮ້ອງ.

ການລະບຸຜະລິດຕະພັນ ຈະປະກົດຢູ່ການຈົດທະບຽນແບບອຸດສາຫະກຳ ແລະ ການໃຊ້ງານຈະເຮັດໃຫ້ ການອອກແບບອຸດສາຫະກຳ ສາມາດຈົດທະບຽນພ້ອມມີຂໍ້ມູນການລະບຸຂອງຜະລິດຕະພັນທີ່ ສອດຄ່ອງກັນ. ນີ້ໃນຈະຊ່ວຍອຳນວຍຄວາມສະດວກໃນການຄົ້ນຫາ ແລະ ດຶງຂໍ້ມູນການອອກແບບທີ່ ຈົດທະບຽນໄວ້ມາໃຊ້ໃນ ອະນາຄົດ.

ຖ້າແບບອຸດສາຫະກຳ ຫາກອ້າງອີງໃສ່ສ່ວນໜຶ່ງຂອງຜະລິດຕະພັນ, ການລະບຸຜະລິດຕະພັນຄວນ ສະແດງຂໍ້ເທັດຈິງນັ້ນ ໂດຍໃຊ້ຄຳເວົ້າ “(ສ່ວນຂອງ –)” ຫຼັງຈາກການບົ່ງບອກຂອງຜະລິດຕະພັນ ທີ່ ສ່ວນນັ້ນເປັນ ສ່ວນໜຶ່ງຂອງມັນ. ຕົວຢ່າງ, ຖ້າແບບອຸດສາຫະກຳຫາກເປັນຂອງຂອບໂມງໃສ່ແຂນ, ການລະບຸຄວນເປັນ “ໂມງໃສ່ແຂນ (ສ່ວນຂອງ –)” ທີ່ໄດ້ຮັບການຈັດໝວດຢູ່ ໃນການຈັດໝວດ 10-02[94].

ໃນລັກສະນະດຽວກັນນີ້ ຖ້າແບບອຸດສາຫະກຳ ຫາກເປັນຂອງຊຸດຜະລິດຕະພັນ, ການລະບຸຜະລິດຕະ ພັນ ຄວນມີຄຳວ່າ “ຊຸດ”. ຕົວຢ່າງ, ຄວນລະບຸແບບຊຸດຜ້າປູໂຕະ ເປັນ “ຜ້າປູໂຕະ (ຊຸດ –)”. ນັກກວດ ສອບຄວນ ແກ້ໄຂ ຫຼື ຮຽກໃຫ້ຜູ້ຍື່ນຄຳຮ້ອງຂໍຈົດທະບຽນແກ້ໄຂການບົ່ງບອກໃນສ່ວນດັ່ງກ່າວ, ຖ້າ ຈຳເປັນ.

ກົດດຽວກັນນີ້ຍັງໃຊ້ກັບແບບຜະລິດຕະພັນເພື່ອການຕົບແຕ່ງທີ່ນຳມາໃຊ້ກັບອີກຜະລິດຕະພັນໜຶ່ງ. ຕົວຢ່າງ, ຖ້າແບບອຸດສາຫະກຳນີ້ມີຈຸດປະສົງສຳລັບການຕົບແຕ່ງ “ພົມປູພື້ນ” ການລະບຸຜະລິດຕະພັນ ຄວນ ເປັນ “ພົມ (ການຕົບແຕ່ງສຳລັບ–)”, ແລະ ຜະລິດຕະພັນຈະຖືກຈັດຢູ່ໃນ LCL class 32-00. ເຖິງຢ່າງໃດກໍຕາມ, ຖ້າຄຳຮ້ອງຫາກບັນຈຸເອົາການອອກແບບພົມ ເນື່ອງຈາກມັນປະກົດພ້ອມກັບ ການນຳສະເໜີການຕົບແຕ່ງ, ຄວນລະບຸ ຜະລິດຕະພັນທັງສອງຜະລິດຕະພັນ ແລະ ນັກກວດສອບ

[94] ຢູ່ຫວຽດນາມ, ການບົ່ງບອກຜະລິດຕະພັນ ຄວນເປັນຊື່ຂອງສ່ວນຂອງຜະລິດຕະພັນຫຼາຍກວ່າຊື່ຜະລິດຕະພັນທັງໝົດ ໂດຍ ມີການໃຊ້ຄຳວ່າ “(ສ່ວນ ຂອງ –)”. ຊື່ຂອງສ່ວນຂອງຜະລິດຕະພັນທີ່ມີຄວາມເຈາະຈົງລົງຫຼາຍກວ່າ ເຖິງວ່າອາດຈະບໍ່ຢູ່ໃນ ລາຍການສິນຄ້າ LCL. ຕົວຢ່າງ, ການບົ່ງບອກຜະລິດ ຕະພັນຝາຂວດ ຄວນເປັນ “ຝາຂວດ” ຫຼາຍກວ່າຈະເປັນ “ຂວດ (ສ່ວນ ຂອງ -)”

ຄວນຈັດໃຫ້ "ພິມ" (LCL class 06-11) ແລະ ການຕີບ ແຕ່ງ (LCL class 32-00)[95].

9.2.3 ການຄັດຄ້ານການລະບຸໝວດຜະລິດຕະພັນ

ຖ້ານັກກວດສອບຫາກພົບວ່າ ການລະບຸຜະລິດຕະພັນ ທີ່ມາຈາກຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ຫຼື ການນຳສະເໜີແບບ ຫາກບໍ່ພຽງພໍທີ່ຈະລະບຸການບົ່ງບອກຂອງຜະລິດຕະພັນ ແລະ ການຈັດໝວດແບບອຸດສາຫະກຳໃນ ປະເພດດຽວຢ່າງເໝາະສົມ (ຍົກເວັ້ນ ກໍລະນີທີ່ຍົກເວັ້ນທີ່ອະນຸຍາດໃຫ້ມີການໃຊ້ທັງສອງແບບ ແລະ ຜະລິດຕະພັນເພື່ອການຕີບແຕ່ງ), ກໍຕ້ອງປະຕິເສດ ແລະ ຮຽກຮ້ອງໃຫ້ຜູ້ຍື່ນຄຳຮ້ອງຂໍຈົດທະບຽນສິ່ງຂໍ້ມູນກ່ຽວກັບ ຄຸນລັກສະນະ ແລະ ຈຸດປະສົງຂອງແບບທີ່ກຳນົດໄວ້.

ນັກກວດສອບຄວນຄັດຄ້ານໃນກໍລະນີທີ່ການລະບຸຜະລິດຕະພັນຫາກມີຄວາມຄຸມເຄືອ, ບໍ່ຊັດເຈນ ຫຼື ສັບສົນ ແລະ ເຮັດໃຫ້ຜະລິດຕະພັນບໍ່ສາມາດຖືກຈັດປະເພດເປັນປະເພດຍ່ອຍດຽວ ພາຍໃນ LCL.

ຖ້າຫາກບໍ່ໃຫ້ການບົ່ງບອກຂອງຜະລິດຕະພັນ ແລະ ບໍ່ພົບຂໍ້ມູນດັ່ງກ່າວໃນຄຳອະທິບາຍລະອຽດ ຫຼື ໝາຍເຫດກ່ຽວກັບການນຳສະເໜີ ຫຼື ມູມມອງມອບແບບອຸດສາຫະກຳ ຫຼື ໃນເອກະສານທີ່ກ່ຽວຂ້ອງກ່ຽວກັບສິ່ງທີ່ ມີມາກ່ອນ, ຖ້າມີ, ນັກກວດສອບຄວນຄັດຄ້ານ ແລະ ຮຽກຮ້ອງໃຫ້ສິ່ງການບົ່ງບອກທີ່ຫາຍໄປ.

ຄວນຖືວ່າ ການປ່ຽນແປງ ຫຼື ການບໍ່ກົງກັນທີ່ເຫັນໄດ້ຊັດເຈນ ລະຫວ່າງ ການບົ່ງບອກຂອງຜະລິດຕະພັນ ກັບ ການນຳສະເໜີການອອກແບບໃນຄຳຮ້ອງ ເປັນຂໍ້ຜິດພາດຂອງການລະບຸຜະລິດຕະພັນ.

[95] ຢູ່ຫວຽດນາມ, ການຕີບແຕ່ງ ບໍ່ອະນຸຍາດໃຫ້ຈົດທະບຽນແບບອຸດສາຫະກຳ. ດັ່ງນັ້ນ, ໃນນີ້ຕົວຢ່າງ, ຄຳຮ້ອງຂໍຈົດທະບຽນຕ້ອງມີພຽງແຕ່ການອອກແບບພິມ ແຕ່ບໍ່ແມ່ນສິ່ງ ປະກັບຕີບແຕ່ງພິມ.

10. ຄຳຮ້ອງຂໍການປົກປ້ອງຫຼາຍແບບອຸດສາຫະກຳໃນຄຳຮ້ອງສະບັບດຽວ ແລະ ຄວາມເປັນເອກະພາບຂອງແບບ

10.1 ທັດສະນະທົ່ວໄປ

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ອາດຈະປະກອບດ້ວຍແບບຫຼາຍກວ່າໜຶ່ງແບບ ແລະ ອາດຈະໝາຍເຖິງ 'ຄຳຮ້ອງຂໍການປົກປ້ອງຫຼາຍແບບອຸດສາຫະກຳໃນຄຳຮ້ອງດຽວກັນ'[96]. ເວັ້ນເສຍແຕ່ກົດໝາຍກຳນົດເປັນຢ່າງອື່ນ, ຈະບໍ່ຈຳກັດຈຳນວນແບບອຸດສາຫະກຳຢູ່ໃນຄຳຮ້ອງຂໍຈົດທະບຽນຫຼາຍແບບອຸດສາຫະກຳໃນຄຳຮ້ອງສະບັບດຽວ. ເຖິງຢ່າງໃດກໍຕາມ, ຈຳນວນແບບຈະມີຜົນໂດຍກົງກັບຈຳນວນຄ່າທຳນຽມທີ່ຈະຕ້ອງຈ່າຍ ໃນການຂໍຈົດທະບຽນ.

ນອກຈາກນັ້ນ ຄຳຮ້ອງອາດຈະອ້າງເຖິງ 'ຊຸດ'ຜະລິດຕະພັນ[97]. ຊຸດໝາຍເຖິງ ຊຸດສິ່ງຂອງທີ່ເປັນສິນຄ້າແຕ່ລະອັນ ທີ່ມີຈຸດປະສົງນຳມາໃຊ້ຮ່ວມກັນ ແລະ ມີຄຸນລັກສະນະຮ່ວມກັນທີ່ໃຫ້ຮູບລັກສະນະໂດຍລວມຄືກັນ. ສຳລັບການນຳສະເໜີຊຸດຜະລິດຕະພັນ ເບິ່ງເພີ່ມເຕີມຢູ່ ຂໍ້ 8.5.2 ຂ້າງເທິງ.

ໃນຄຳຮ້ອງຂໍການປົກປ້ອງຫຼາຍແບບອຸດສາຫະກຳໃນຄຳຮ້ອງສະບັບດຽວ ຄວນກວດສອບແບບແຕ່ລະແບບແຍກກັນ ເພື່ອໃຫ້ເປັນໄປຕາມສາເຫດຂອງການປະຕິເສດ. ຖ້າໜຶ່ງ ຫຼື ຫຼາຍແບບຫາກບໍ່ສອດຄ່ອງ ຕາມເງື່ອນໄຂການຈົດທະບຽນ, ນັກກວດສອບຄວນຄັດຄ້ານໃນສ່ວນທີ່ກ່ຽວຂ້ອງສະເພາະແບບນັ້ນເທົ່ານັ້ນ. ນອກຈາກນັ້ນ, ຖ້າຫາກມີການຮ້ອງຂໍໃຫ້ມີການຖອນ, ການຍົກເລີກ ຫຼື ການລົບ

---

[96] ເບິ່ງເພີ່ມເຕີມຢູ່ບົດບັນຍັດໃນ BN DA, s. 15(6)(a), DR r. 16; KH DL ມາດຕາ 97; ID DL ມາດຕາ 13(b); LA IPL ມາດຕາ 32; MY DA, s. 15, DR r. 5(4); PH IP Code, s. 115, IP Rules r. 1515; SG DA s. 2(1) "ສິ່ງຂອງທີ່ເປັນສິນຄ້າ" (b), "ຊຸດສິ່ງຂອງທີ່ເປັນສິນຄ້າ", DR r. 22; VN IPL ມາດຕາ 101.3, IPR r. 33.2. ເບິ່ງເພີ່ມເຕີມຢູ່ ຄູ່ມື EUIPO (ຄຳຮ້ອງຂໍຈົດທະບຽນ), ໝວດທີ 7.

[97] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA, s. 2(1) "ຊຸດສິ່ງຂອງທີ່ເປັນສິນຄ້າ", 15(6)(a), DR r. 7(2), 16; KH DL ມາດຕາ 97; LA IPL ມາດຕາ 32; MY DA, s. 3(1) "ຊຸດສິ່ງຂອງທີ່ເປັນສິນຄ້າ", 3(2)(a), 15; PH IP Code, s. 115, IP Rules r. 1515; SG DA s. 2(1) "ສິ່ງຂອງທີ່ເປັນສິນຄ້າ" (b) "ຊຸດສິ່ງຂອງທີ່ເປັນສິນຄ້າ" (c) ຜະລິດຕະພັນທີ່ບໍ່ມີຕົວຕົນ (d) ຊຸດຜະລິດຕະພັນທີ່ບໍ່ມີຕົວຕົນ, DR r. 22; VN IPL ມາດຕາ 101.3.a, IPR r. 33.2.b ແລະ 33.5.e(v). ເບິ່ງເພີ່ມເຕີມຢູ່ ຄູ່ມື EUIPO (ຄຳຮ້ອງຂໍຈົດທະບຽນ), items 5.2.3 ແລະ 6.1.4.4.

ລ້ານ ສຳລັບໜຶ່ງ ຫຼື ຫຼາຍແບບໃນການຈົດທະບຽນ, ແບບທີ່ບໍ່ໄດ້ຮັບຜົນກະທົບຈາກຄຳຮ້ອງ ຈະຍັງຄົງ ມີຜົນນຳໃຊ້ໄດ້.

ຫ້ອງການຈົດທະບຽນ ຄວນຕັດສິນຄຳຮ້ອງ ທັງຄຳຮ້ອງທີ່ຂໍຈົດທະບຽນແບບອຸດສາຫະກຳທັງໝົດ ທີ່ ມີການຕັດສິນໃຈໃນຄັ້ງດຽວ ຊຶ່ງຈະກຳນົດວ່າ ແບບໃດຮັບການຈົດທະບຽນໄດ້ ແລະ ແບບໃດຈົດ ທະບຽນບໍ່ໄດ້.

10.2 ມາດຕະຖານຂອງຄວາມເປັນເອກະພາບຂອງແບບອຸດສາຫະກຳ

ຄຳຮ້ອງຂໍການປົກປ້ອງຫຼາຍແບບອຸດສາຫະກຳໃນຄຳຮ້ອງສະບັບດຽວ ຈຳເປັນຕ້ອງສອດຄ່ອງ ຕາມ ມາດຕະຖານດ້ານຄວາມເປັນເອກະພາບໃນການອອກແບບ ເພື່ອບໍ່ໃຫ້ເກີດສະຖານະການທີ່ການອອກ ແບບຕ່າງໆທີ່ຢູ່ໃນຄຳຮ້ອງບໍ່ມີຄວາມກ່ຽວຂ້ອງກັນ. ຄວາມແຕກຕ່າງນີ້ ອາດຈະເຮັດໃຫ້ການກວດ ສອບຄຳຮ້ອງ ຂໍຈົດທະບຽນມີຄວາມສະຫຼັບຊັບຊ້ອນເປັນພິເສດ.

ຈາກນະ�โยบาย ແລະ ຄວາມງ່າຍດາຍດ້ານການບໍລິຫານ, ຈຳເປັນຕ້ອງຈຳກັດຄວາມຫຼາກຫຼາຍຂອງ ແບບ ທີ່ຢູ່ໃນການຈົດທະບຽນແບບອຸດສາຫະກຳດຽວ ພາຍໃຕ້ເກນທີ່ລະບຸໄວ້. ນອກຈາກນັ້ນ, ມາດຕະຖານດ້ານຄວາມ ເປັນເອກະພາບໃນການອອກແບບ ຈະເຮັດໃຫ້ສາມາດວາງໂຄງສ້າງຄ່າ ທຳນຽມທີ່ດີຂຶ້ນ ໂດຍໃຫ້ຈ່າຍຄ່າທຳນຽມ ຕາມໝວດທີ່ການອອກແບບນັ້ນຢູ່. ການອອກແບບທີ່ບໍ່ຢູ່ ໃນໝວດນັ້ນ ບໍ່ສາມາດລວມຢູ່ໃນຄຳຮ້ອງດຽວກັນ.

ມາດຕະຖານດ້ານຄວາມເປັນເອກະພາບໃນແບບອຸດສາຫະກຳ ແມ່ນຂຶ້ນກັບປະເພດຂອງການຈັດ ໝວດຂອງສາກົນ ພາຍໃຕ້ສັນຍາໂລຄາໂນ ທີ່ກຳນົດການຈັດໝວດສາກົນສຳລັບແບບ ອຸດສາຫະກຳ[98]. ການຈັດໝວດສາກົນ ປະກອບດ້ວຍ 32 ໝວດຂອງທຸກຜະລິດຕະພັນ ທີ່ສາມາດນຳ ສະເໜີໃນແບບອຸດສາຫະກຳ. ບັນດາ ໝວດຂອງຜະລິດຕະພັນຂອງການຈັດໝວດໂລຄາໂນ ຂ້ອນ ຂ້າງກວ້າງ ແຕ່ວ່າ ແຕ່ລະປະເພດຍັງຖືກແບ່ງອອກເປັນ ໝວດຍ່ອຍອອກໄປຕື່ມ ໂດຍມີຂໍ້ຍົກເວັ້ນຂອງ ໝວດສຸດທ້າຍ31 ແລະ 32[99].

---

[98] ເບິ່ງເພີ່ມເຕີມຢູ່ບົດບັນຍັດ ໃນ BN DA s. 15(6)(a), DR r. 6(3)(b) KH DL ມາດຕາ 97; ID DL ມາດຕາ 13(b), DR ມາດຕາ 3(1)(b), 12(5); LA IPL ມາດຕາ 32; MY DA, s. 15, DR r. 7; PH IP Code, s. 115, IP Rules r. 1515; SG DR r. 22 ແລະ 26; TH DR r.18(2). ເບິ່ງເພີ່ມເຕີມຢູ່ໃນ ຄູ່ມືຂອງ EUIPO (ຄຳຮ້ອງຂໍ ຈົດທະບຽນ), ວັກ 6.2.3 ແລະ 7.2.3.

[99] ຢູ່ຫວຽດນາມ, ມາດຕະຖານດ້ານຄວາມເປັນເອກະພາບໃນແບບ ບໍ່ເປັນໄປຕາມປະເພດຂອງການຈັດໝວດສາກົນພາຍໃຕ້ ສັນຍາໂລຄາໂນ. ຄວາມຈິງແລ້ວ, ຄຳຮ້ອງຂໍ ການປົກປ້ອງແບບອຸດສາຫະກຳຫຼາຍກວ່າ 1 ແບບໃນຄຳຮ້ອງສະບັບດຽວ ຈະບໍ່

ພາຍໃຕ້ມາດຕະຖານດ້ານ 'ຄວາມເປັນເອກະພາບຂອງປະເພດສິນຄ້າ'[100], ຄຳຮ້ອງຂໍຈົດທະບຽນທີ່ປະກອບດ້ວຍຫຼາຍແບບ ຈະເປັນໄປຕາມເງື່ອນໄຂກ່ຽວກັບດ້ານຄວາມເປັນເອກະພາບຂອງແບບ ຖ້າຫາກว่า ທຸກການອອກແບບ ຫາກຖືກນຳສະເໜີໃນຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນສິນຄ້າ ທີ່ຢູ່ໃນປະເພດດຽວກັນຂອງ LCL.

ໃນກໍລະນີທີ່ກົດໝາຍກຳນົດໃຫ້ຜູ້ຍື່ນຄຳຮ້ອງລະບຸການຈັດໝວດຜະລິດຕະພັນທີ່ນຳສະເໜີໃນແບບທີ່ຢູ່ໃນຄຳຮອງ, ນັກກວດສອບຄວນກວດສອບว่า ການຈັດໝວດທີ່ສະເໜີມານັ້ນມີຄວາມຖືກຕ້ອງຫຼືບໍ່. ຖ້າບໍ່ດັ່ງນັ້ນ, ນັກກວດສອບເອງ ຄວນຈັດປະເພດແບບແຕ່ລະແບບໃນຄຳຮ້ອງເອງ. ໃນກໍລະນີທີ່ຄວາມເຫັນ ລະຫວ່າງ ຜູ້ຍື່ນຄຳຮ້ອງຂໍຈົດທະບຽນ ແລະ ຫ້ອງການຈົດທະບຽນບໍ່ກົງກັນ, ຕ້ອງຖືເອົາຄຳເຫັນດ້ານມຸມມອງຂອງຫ້ອງການຈົດທະບຽນ.

ການຈັດໝວດແບບຄົບຖ້ວນ ປະກອບດ້ວຍໜຶ່ງປະເພດ ແລະ ໜຶ່ງປະເພດຍ່ອຍ ຕາມ LCL.

ໃນກໍລະນີຂອງຜະລິດຕະພັນ ທີ່ມີລັກສະນະ ຫຼື ການໃຊ້ແບບຄູ່, ແບບຜະລິດຕະພັນຄວນລະບຸປະເພດເພື່ອການໃຊ້ ທັງສອງແບບຂອງສິ່ງຂອງທີ່ເປັນສິນຄ້າ.

ຕົວຢ່າງ, ສິ່ງຂອງທີ່ເປັນສິນຄ້າຕໍ່ໄປນີ້ ເປັນທັງທີ່ແຂວນເສື້ອ ແລະ ໂຄມໄຟຕັ້ງພື້ນ:

ໄມ້ແຂວນເສື້ອ ແລະ ໂຄມໄຟ[101]

ເປັນໄປຕາມມາດຕະຖານດ້ານຄວາມເປັນເອກະພາບໃນການອອກແບບ ຖ້າການອອກແບບ ທັງໝົດຫາກຖືກນຳສະເໜີໃນຜະລິດຕະພັນດຽວກັນ ແລະ ບໍ່ໄດ້ແຕກຕ່າງກັນຫຼາຍ. ການອອກແບບເຫຼົ່ານີ້ເອີ້ນว่า ການປ່ຽນແປງ.

[100] ຫວຽດນາມ ບໍ່ຍອມຮັບມາດຕະຖານດ້ານ "ຄວາມເປັນເອກະພາບຂອງປະເພດສິນຄ້າ".

[101] ຕົວຢ່າງໄດ້ມາຈາກຄູ່ມືການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດແບບອຸດສາຫະກຳຜະລິດຕະພັນຂອງປະເທດໄທ, ໜ້າ 75

ການຈັດໝວດແບບແຕ່ລະແບບ ຄວນດຳເນີນບົນພື້ນຖານການບົ່ງບອກຜະລິດຕະພັນ ແລະ ການນຳສະ ເໜີການອອກແບບນັ້ນ. ຖ້າຫາກມີຄວາມບໍ່ສອດຄ່ອງ ລະຫວ່າງ ການນຳສະເໜີແບບ ແລະ ການ ບົ່ງບອກຜະລິດຕະພັນ, ການຈັດໝວດຈະເປັນໄປບໍ່ໄດ້. ນັກກວດສອບຄວນຄັດຄ້ານ ແລະ ຮຽກຮ້ອງ ໃຫ້ຜູ້ຍື່ນຄຳຮ້ອງຂໍຈົດທະບຽນຊີ້ແຈງລາຍລະອຽດເພີ່ມເຕີມກ່ຽວກັບການບົ່ງບອກຜະລິດຕະພັນ ຫຼື ລຶບການນຳສະເໜີດັ່ງກ່າວຜ້ອມກັນ.

ອະນຸຍາດໃຫ້ມີກໍລະນີພິເສດທີ່ເປັນການຈັດໝວດສອງປະເພດທີ່ເປັນໄປໄດ້ກັບຜະລິດຕະພັນເພື່ອ 'ການຕົບແຕ່ງ', ສັນຍາລັກປະເພດຮູບສະແດງ', ເຄື່ອງໝາຍ' ແລະ ລວດລາຍພື້ນ' ທີ່ໄດ້ຮັບການຈັດ ໝວດຢູ່ໃນ class 32 ຂອງ LCL. ຜະລິດຕະພັນດັ່ງກ່າວ ສາມາດຜະລິດ ແລະ ນຳໃຊ້ປະໂຫຍດໃນ ທາງການຄ້າ ເປັນຜະລິດຕະພັນ. ເຖິງຢ່າງໃດກໍຕາມ, 'ການຕົບແຕ່ງ', ສັນຍາລັກປະເພດຮູບສະແດງ', ເຄື່ອງໝາຍ' ແລະ ລວດລາຍພື້ນ' ອາດຈະ ນຳມາໃຊ້ກັບຜະລິດຕະພັນອື່ນ ແລະ ສິ່ງຂອງທີ່ເປັນສິນຄ້າ ອື່ນ ເພື່ອໃຫ້ມີຮູບລັກສະນະບາງຢ່າງໂດຍການ ຕົບແຕ່ງ ພື້ນ, ຊຶ່ງຈະກາຍເປັນແບບຂອງຜະລິດຕະພັນ ດັ່ງກ່າວ. ໃນກໍລະນີນີ້, ສາມາດຮັບຄຳຮ້ອງຂໍການປົກປ້ອງ**ຫຼາຍແບບອຸດສາຫະກຳ**ໃນຄຳຮ້ອງສະບັບ ດຽວໄດ້ສຳລັບ ຜະລິດຕະພັນທັງສອງ ດ້ວຍການຈັດໝວດສິນຄ້າອອກເປັນ ສອງປະເພດ: ໜຶ່ງ ສຳລັບ ການຕົບແຕ່ງ ຫຼື ລວດລາຍພື້ນ (LCL class 32) ແລະ ອີກໜຶ່ງປະເພດ ສຳລັບຜະລິດຕະພັນທີ່ນຳ ສະເໜີການຕົບແຕ່ງ ຫຼື ລວດລາຍ.

ຜະລິດຕະພັນເພື່ອ 'ການຕົບແຕ່ງ', ສັນຍາລັກປະເພດຮູບສະແດງ', ເຄື່ອງໝາຍ' ແລະ ລວດລາຍພື້ນ' ສາມາດລວມຢູ່ໃນຄຳຮ້ອງຂໍປົກປ້ອງແບບຫຼາຍກວ່າ 1 ແບບໃນຄຳຮ້ອງສະບັບດຽວ ຮ່ວມກັບ ຜະລິດຕະພັນອື່ນໄດ້. ນັກກວດສອບບໍ່ຄວນພິຈາລະນາການບົ່ງບອກເພື່ອ 'ການຕົບແຕ່ງ', ສັນຍາລັກ ປະເພດຮູບສະແດງ', ເຄື່ອງໝາຍ' ແລະ ລວດລາຍພື້ນ' ໃນການພິຈາລະນາວ່າ ການຈັດໝວດມີຄວາມ ເປັນເອກະພາບຫຼືບໍ່. ຄວນຖືວ່າ ຜະລິດຕະພັນ ໃນ LCL class 32 ຄວນເປັນກາງ. ການພິຈາລະນາ ການກວດສອບ ຄວນກຳນົດວ່າ ຜະລິດຕະພັນອື່ນໃນຄຳຮ້ອງຂໍການປົກປ້ອງແບບມີຫຼາຍກວ່າ 1 ແບບ ໃນຄຳຮ້ອງສະບັບດຽວ ເປັນໄປຕາມຂໍ້ກຳນົດກ່ຽວກັບຄວາມເປັນເອກະພາບຂອງການຈັດໝວດຫຼືບໍ່.

ຕົວຢ່າງ, ຄຳຮ້ອງຂໍການປົກປ້ອງ**ຫຼາຍແບບອຸດສາຫະກຳ**ໃນຄຳຮ້ອງສະບັບດຽວ ອາດຈະປະກອບດ້ວຍ ແບບອຸດສາຫະກຳ 10 ແບບ ທີ່ນຳໃຊ້ກັບຜະລິດຕະພັນ ຕໍ່ໄປນີ້:

ການບົ່ງບອກຂອງຜະລິດຕະພັນ	ປະເພດ (class) ແລະ ປະເພດຍ່ອຍ (subclass) ຢູ່ໃນ ລະບົບ LCL
ເຈ້ຍສຳລັບຂຽນບັດໄປສະນີ ແລະ ປະກາດ	19 - 01
ປະຕິທິນ	19 - 03
ປຶ້ມ ແລະ ວັດຖຸອື່ນໆທີ່ມີຮູບລັກສະນະພາຍນອກຄ້າຍຄືກັນ	19 - 04
ສື່ການຮຽນ	19 - 07
ລວດລາຍພື້ນ, ການຕົບແຕ່ງ	32 - 00
ສື່ການສອນ (ການຕົບແຕ່ງສຳລັບ)	32 - 00
ເຈ້ຍສຳລັບຂຽນ (ລວດລາຍພື້ນ)	32 - 00

ສີ່ຜະລິດຕະພັນທຳອິດ ທີ່ລະບຸວ່າ ເປັນຂອງປະເພດດຽວໃນ LCL, class 19, ດັ່ງນັ້ນ ຈຶ່ງເປັນໄປຕາມ ເງື່ອນໄຂກ່ຽວກັບດ້ານຄວາມເປັນເອກະພາບຂອງປະເພດສິນຄ້າ. ອີກສາມຜະລິດຕະພັນ ຢູ່ໃນ LCL class 32 ແລະ ບໍ່ຖືກນຳມາພິຈາລະນາໃນການກຳນົດການປະຕິບັດຕາມຂໍ້ກຳນົດດ້ານຄວາມ ເປັນເອກະພາບຂອງປະເພດ ສິນຄ້າ. ໃນຕົວຢ່າງນີ້, ຖືວ່າເປັນໄປຕາມມາດຕະຖານດ້ານຄວາມເປັນ ເອກະພາບຂອງປະເພດສິນຄ້າ.

ນອກຈາກນັ້ນ ຖ້າຄຳຮ້ອງໃນຕົວຢ່າງຂ້າງເທິງ ຫາກມີຜະລິດຕະພັນເພີ່ມເຕີມຕໍ່ໄປນີ້, ກໍຈະເສຍຄວາມ ເປັນເອກະພາບຂອງປະເພດສິນຄ້າ ແລະ ຄວນມີການຄັດຄ້ານ:

ແຜ່ນແພ – ປະເພດ 5 – 05

ຜ້າກັ້ງ – ປະເພດ 6 – 10

ແຜ່ນແພ (ລວດລາຍພື້ນສຳລັບ) – ປະເພດ 32

ໃນກໍລະນີນີ້, ຜະລິດຕະພັນ 'ແຜ່ນແພ (ລວດລາຍພື້ນສຳລັບ)' ຊຶ່ງຖືກຈັດຢູ່ໃນ LCL class 32 ສາມາດລະບຸພ້ອມກັບຜະລິດຕະພັນ 'ແຜ່ນແພ'.

ເຖິງຢ່າງໃດກໍຕາມ, ຜະລິດຕະພັນ 'ແຜ່ນແພ' ແລະ 'ຜ້າກັ້ງ' ໄດ້ຮັບການຈັດຢູ່ໃນປະເພດທີ່ແຕກຕ່າງ ຈາກ ປະເພດ 19. ດັ່ງນັ້ນ, ຄຳຮ້ອງຈະມີຜະລິດຕະພັນ ທີ່ຢູ່ໃນປະເພດຕ່າງກັນສາມປະເພດ ແລະ ບໍ່ເປັນໄປຕາມຂໍ້ກຳນົດ ປະເພດດຽວກັນ[102].

[ເອກະສານຊ້ອນທ້າຍ I ມີຕໍ່]

[102] ການຈັດໝວດຫຼາຍກວ່າໜຶ່ງປະເພດ ສຳລັບ ການຕົບແຕ່ງ, ສັນຍາລັກປະເພດຮູບສະແດງ, ເຄື່ອງໝາຍ ແລະ ລວດລາຍພື້ນ ບໍ່ມີຢູ່ຫວຽດນາມ ຍ້ອນວ່າ ເນື້ອຫາສາລະເຫຼົ່ານີ້ ບໍ່ໄດ້ຮັບການຈົດທະບຽນເປັນແບບອຸດສາຫະກຳ.

ເອກະສານ
ຊ້ອນທ້າຍ

ການຄັດຈ້ອນເອົາບົດບັນຍັດກົດໝາຍ

ຂອງບັນດາປະເທດສະມາຊິກອາຊຽນ ທີ່ກ່ຽວຂ້ອງກັບການກວດສອບ ແລະ ການ ຈົດທະບຽນແບບອຸດສາຫະກຳ

ເອກະສານຊ້ອນທ້າຍ I

ການຄັດຈ້ອນເອົາບົດບັນຍັດກົດໝາຍຂອງບັນດາປະເທດສະມາຊິກອາຊຽນ ທີ່ກ່ຽວຂ້ອງກັບການກວດສອບ ແລະ ການຈົດທະບຽນແບບອຸດສາຫະກຳ

ສາລະບານ

ບຣູໄນ ດາຣູສາລາມ

ຄຳສັ່ງວ່າດ້ວຍ [ແບບອຸດສາຫະກຳ] ແບບສຸກເສີນ, 1999

ລະບຽບວ່າດ້ວຍແບບອຸດສາຫະກຳ, 2000

ໝວດທີ 94: ສັນຍາລັກ ແລະ ຊື່ (ການປ້ອງກັນການນຳໃຊ້ທີ່ບໍ່ຖືກຕ້ອງ) 20 1967, 3 1974 - ປັບປຸງໂດຍ S 128/80 s 163/81

ຄຳສັ່ງວ່າດ້ວຍ [ລິຂະສິດ] ແບບສຸກເສີນ, 1999

ກຳປູເຈຍ

ກົດໝາຍວ່າດ້ວຍສິດທິບັດ, ໃບຢັ້ງຢືນສິດທິບັດການປະດິດ ແລະ ແບບອຸດສາຫະກຳ.

22 ມັງກອນ 2003

ປະກາດກ່ຽວກັບຂັ້ນຕອນການຈົດທະບຽນແບບອຸດສາຫະກຳ, ກະຊວງອຸດສາຫະກຳ,

ບໍ່ແຮ່ ແລະ ພະລັງງານ ເລກທີ 707 MIME.DIP.PRK

ກົດໝາຍວ່າດ້ວຍ [ລິຂະສິດ] ແລະ ສິດກ່ຽວຂ້ອງກັບລິຂະສິດ, ທີ່ຮັບຮອງໂດຍສະພາແຫ່ງຊາດ, ລົງວັນທີ 21 ມັງກອນ 2003 ແລະ ໃຫ້ສັດຕະຍາບັນໂດຍວຸທິສະພາ ໃນວັນທີ 13 ກຸມພາ 2003

ອິນໂດເນເຊຍ

ກົດໝາຍ ເລກທີ 31 ວ່າດ້ວຍແບບອຸດສາຫະກຳ ລົງວັນທີ 20 ທັນວາ 2000

ລະບຽບການ ເລກທີ 1 2005 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ເລກທີ 1 2000

ວ່າດ້ວຍແບບອຸດສາຫະກຳ

ກົດໝາຍ ເລກທີ 19 2002 ວ່າດ້ວຍລິຂະສິດ

ຄູ່ມືວ່າດ້ວຍ ການກວດສອບເນື້ອໃນແບບອຸດສາຫະກຳ 2015

ສປປ ລາວ

ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017

ຄູ່ມືວ່າດ້ວຍແບບອຸດສາຫະກຳ, ຕຸລາ 2003

ຂໍ້ຕົກລົງຂອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍແບບອຸດສາຫະກຳ ເລກທີ 755/ກວຕ, ລົງວັນທີ 20 ກັນຍາ 2012

ມາເລເຊຍ

ກົດໝາຍວ່າດ້ວຍແບບອຸດສາຫະກຳ 1996, ກົດໝາຍ ເລກທີ 552 ທີ່ບັນຈຸເອົາການປັບປຸງເພີ່ມເຕີມ, ວັນທີ 1 ກໍລະກົດ 2013

ລະບຽບການວ່າດ້ວຍແບບອຸດສາຫະກຳ, 1999, P.U.(A) 182, ທີ່ບັນຈຸເອົາການປັບປຸງ, ວັນທີ 1 ກໍລະກົດ 2013

ກົດໝາຍວ່າດ້ວຍລິຂະສິດ 1987, ກົດໝາຍເລກທີ 332, A1420, ທີ່ບັນຈຸເອົາການປ່ຽນແປງ, ລົງວັນທີ 1 ມີນາ 2012

ມຽນມາ

ຟິລິບປິນ

ກົດໝາຍ ເລກທີ 8293 - ກົດໝາຍທີ່ບັນຍັດກ່ຽວກັບປະມວນຊັບສິນທາງປັນຍາ ແລະ ການສ້າງຕັ້ງສຳນັກງານຊັບສິນທາງປັນຍາ ທີ່ກຳນົດສິດ ແລະ ໜ້າທີ່ ແລະ ຈຸດປະສົງອື່ນໆ 1997 ທີ່ປັບປຸງໂດຍ ກົດໝາຍ ເລກທີ 9150, ກົດໝາຍທີ່ຍັ້ງຍືນການປົກປ້ອງແບບຜັງ (ແຜນຜັງ/ແຜນທີ່) ຂອງວົງຈອນລວມ

ລະບຽບການຈັດຕັ້ງປະຕິບັດສະບັບປັບປຸງ ແລະ ລະບຽບການສຳລັບສິດທິບັດ, ສິດທິບັດການປະດິດ ແລະ ແບບອຸດສາຫະກຳ, ລົງວັນທີ 20 ເມສາ 2011

ແຈ້ງການ ເລກທີ 14-004 ທີ່ອອກໂດຍຫົວໜ້າສິດທິບັດ ກ່ຽວກັບ "ການເລື່ອນການເຜີຍແຜ່ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ", ວັນທີ 20 ພຶດສະພາ 2014

ສິງກະ�โป

ກົດໝາຍ ວ່າດ້ວຍ ແບບທີ່ໄດ້ຮັບການຈົດທະບຽນ (ໝວດທີ 266) (ກົດໝາຍສະບັບຕົ້ນ: ກົດໝາຍ ເລກທີ 25 2000, 13 ຕຸລາ 2000, ສະບັບປັບປຸງ 31 ກໍລະກົດ 2005)

ລະບຽບກ່ຽວກັບສິດທິບັດທີ່ໄດ້ຮັບການຈົດທະບຽນ, R1 G.N. No. S 504/2000, 13 ຕຸລາ 2000, ສະບັບປັບປຸງ 2002, 31 ມັງກອນ 2002

ກົດໝາຍວ່າດ້ວຍລິຂະສິດ (ໝວດ 63), ກົດໝາຍ ເລກທີ 2 1987, ສະບັບປັບປຸງ 2006, ລົງວັນທີ 31 ມັງກອນ 2006

ຄຳແນະນຳປະຕິບັດ ເລກທີ 4 2018 - ການຈົດທະບຽນສ່ວນຕໍ່ປະສານຮູບສະແດງກັບຜູ້ໃຊ້ (GUIs), ລົງວັນທີ 20 ມິຖຸນາ 2018

IP2SG ຄຳແນະນຳປະຕິບັດ ເລກທີ 1 2018 ວ່າດ້ວຍ ລະບົບອອນລາຍທາງເອເລັກໂຕຣນິກ (EOS), ວັນທີ 20 ຕຸລາ 2018

ໄທ

ກົດໝາຍ ວ່າດ້ວຍສິດທິບັດ B.E 2522 (1979), ປັບປຸງໂດຍກົດໝາຍວ່າດ້ວຍສິດທິບັດສຳລັບແບບອຸດສາຫະກຳ (ເລກທີ 2) B.E 2535 (1992) ແລະ ກົດໝາຍວ່າດ້ວຍສິດທິບັດ (No.3) B.E. 2542 (1999)

ລະບຽບກ່ຽວກັບສິດທິບັດ - ລະບຽບການຂອງກະຊວງ ເລກທີ 19, ເລກທີ 21, 22, 23, 24, 25, 26, 27 ລົງວັນທີ 24 ກັນຍາ 1999 ທີ່

ກົດໝາຍວ່າດ້ວຍລິຂະສິດ B.E. 2537 (1994), ລົງວັນທີ 9 ທັນວາ B.E. 2537 (1994)

ຄູ່ມືກ່ຽວກັບການກວດສອບຄຳຮ້ອງຂໍຈົດທະບຽນສິດທິບັດສຳລັບແບບອຸດສາຫະກຳ, 2011

ຫວຽດນາມ

ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເລກທີ 50/2005/Qh11, 29 ພະຈິກ 2005

ດຳລັດ ເລກທີ 103/2006/ND-CP, 22 ກັນຍາ 2006 ກ່ຽວກັບ ການຜັນຂະຫຍາຍແລະ ຈັດຕັ້ງປະຕິບັດບັນດາມາດຕາຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບແບບອຸດສາຫະກຳ

ແຈ້ງການ ເລກທີ 01/2007/TT-BKHCH, ລົງວັນທີ 14 ກຸມພາ 2007 ກ່ຽວກັບການແນະນຳ ການຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ເລກທີ 103/2006/ND-CP, ລົງວັນທີ 22 ກັນຍາ 2006 ທີ່ກຳນົດ ແລະ ແນະນຳ ການຈັດຕັ້ງປະຕິບັດບັນດາມາດຕາຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບຊັບສິນອຸດສາຫະກຳ

ASEAN: A Community of Opportunities for All

@ASEAN ASEAN @ASEAN www.asean.org